

ນິທານ

# ຊຸນລູ - ນາງອົ້ວ

ຖອດເປັນຄຳເລົ່າ
ທຳມະດາ

ໂດຍ: ພ. ພວງສະບາ

# ຊຸມລູ-ນາງອົ້ວ

ຖອດເປັນຄຳເລົ່າທຳມະດາ

ໂດຍ:ພ.ພວງສະບາ

## ພິມເທື່ອທີ I

ອຸທິນ ບຸບຜາວົງ

---

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

ວຽງຈັນ, 1995

ສະຫງວນລິຂະສິດ

ຮັບຜິດຊອບການພິມຈຳໜ່າຍ ຈັນທີ ເດືອນສະຫວັນ

<u>ຄະນະຈັດທຳ</u>

- ບຸນຊູ ພັນທະວິໄຊ
- ເຫລືາຄຳ ເພັດຈຳພອນ
- ບຸນນອງ ໄຊຍະເສນ
- ພິມດີດ, ເຂົ້າໜ້າ ນ.ວິລາວັນ, ສີສະຫວາດ
- ແຕ້ມໜ້າປົກ ຄຳເພັດ

ອ.ພ 256 /ສພປ

ທ.ບ 8811/ພທປ 210895

ພິມທີ່ ໂຮງພິມແຫ່ງລັດ

ຈຳນວນ 2.000 ຫົວ

ຂະໜາດ 13 x 19 ຊມ

# ຄຳນຳ

ນິທານພື້ນເມືອງເລື່ອງທ້າວຂຸນລູ-ນາງອົ້ວຄ່ຽມ ແມ່ນໜຶ່ງໃນຈຳນວນ ນິທານພື້ນເມືອງຂອງລາວ ຊຶ່ງເປັນທີ່ນິຍົມຊົມຊອບຂອງມະຫາຊົນ ທັງ ດ້ວຍການອ່ານໃນໜັງສືຜູກໃບລານທີ່ຂຽນເປັນອັກສອນທຳແລະອັກສອນລາວ ບູຮານ ຊຶ່ງເປັນກອນອ່ານທີ່ມີສຳນວນສີລະປະອັນມ່ວນອອນຊອນ ຫລືບາງ ໂອກາດກໍນຳມາເລົ່າສູ່ກັນຟັງດ້ວຍປາກເປົ່າສືບໆກັນມາເປັນເວລາອັນເຫີງນານ ມາແລ້ວ.

ເພື່ອເປັນການອະນຸລັກປົກປັກຮັກສາແລະສົ່ງເສີມວັນນະກຳອັນເກົ່າ ແກ່ ຊຶ່ງເປັນມູນມໍລະດົກທາງດ້ານວັດທະນະທຳອັນດີງາມຂອງລາວເອົາໄວ້ບໍ່ ໃຫ້ເສື່ອມສູນໄປຕາມການເວລານັ້ນ, ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ກະຊວງຖະແຫລງຂ່າວແລະວັດທະນະທຳ ຈຶ່ງໄດ້ຕົກລົງມອບໝາຍໃຫ້ ມ. ພວງ ສະບາ ເປັນຜູ້ຄົ້ນຄວ້າຮຽບຮຽງໂດຍ ຖອດຈາກບົດຄຳກອນ (ຮ້ອງກອງ) ມາ ເປັນຄຳເລົ່າທຳມະດາ (ຮ້ອຍແກ້ວ) ເພື່ອໃຫ້ທ່ານຜູ້ອ່ານທຸກທ່ານສາມາດອ່ານ ແລະເຂົ້າໃຈເນື້ອໃນຂອງບົດເລື່ອງໄດ້ດີກ່ວາການອ່ານແບບຄຳກອນ.

ດັ່ງນັ້ນ, ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ກະຊວງຖະແຫລງ ຂ່າວ ແລະວັດທະນະທຳ ຈຶ່ງໄດ້ຈັດພິມເລື່ອງທ້າວຂຸນລູ-ນາງອົ້ວຄ່ຽມອອກ ຈຳໜ່າຍເຜີຍແຜ່ຕອບສະໜອງຕໍ່ທ່ານຜູ້ອ່ານທັງຫລາຍ ແລະອີກປະການ ໜຶ່ງ

ກໍຈະໄດ້ຊື່ວ່າແຕ່ລະຄົນໄດ້ຊ່ວຍກັນອະນຸລັກປົກປັກຮັກສາມູນມໍລະດົກທາງດ້ານວັດທະນະທຳກໍຄືສະຕິພູນປັນຍາອັນລ້ຳຄ່າຂອງນັກປາດລາວປາງບູຮານ ເອົາໄວ້ ເພື່ອການອ່ານແລະສຶກສາຄົ້ນຄວ້າໃນໂອກາດຕໍ່ໆໄປແລະການຈັດພິມເທື່ອນີ້ເປັນຄັ້ງທຳອິດພວກເຮົາຄະນະຈັດທຳບໍ່ປາສະຈາກໄດ້ຂໍ້ຂາດຕົກບົກພ່ອງຖ້າທ່ານມີຄຳຄິດເຫັນປະການໃດກາລຸນາສົ່ງຄຳຄິດເຫັນໄປຍັງສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ໂທລະສັບ 212473, 212474. ຕູ້ ປ.ນ 1300 ວຽງຈັນ ສ.ປ.ປ.ລາວ.

ວຽງຈັນ, ວັນທີ..............

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

## ຜູ້ຮຽບຮຽງ

ເລື່ອງຂອງທ້າວຂຸນລູ-ນາງອົ້ວ ເປັນນິທານພື້ນເມືອງອັນເກົ່າແກ່ ຂອງລາວອີກເລື່ອງໜຶ່ງ ຊຶ່ງເປັນທີ່ນິຍົມຊົມຊອບຢ່າງແພ່ຫລາຍໃນໝູ່ມະຫາຊົນ ນິທານເລື່ອງນີ້ມີທັງການເລົ່າດ້ວຍປາກເປົ່າແລະດ້ວຍການອ່ານສູ່ກັນ ຟັງ ເຊັ່ນພໍ່ແມ່ເລົ່າສູ່ລູກສູ່ຫລານຟັງ, ອ່ານໃນໂອກາດບຸນເຮືອນ, ອ່ານງັນເຮືອນດີແລະອ່ານຢູ່ຕາມວັດວາອາຮາມ. ນິທານຂຸນລູ-ນາງອົ້ວ ເຕັມໄປດ້ວຍຄວາມຮັກ, ຄວາມອິດສາບັງບຽດແລະຄວາມຜິດຫວັງ. ເວົ້າເຖິງຄວາມຮັກ ຂອງໜຸ່ມສາວລ້ວນໆ.

ເນື່ອງຈາກນິທານເລື່ອງນີ້ເປັນທີ່ນິຍົມ, ສ້າງຄວາມສົນໃຈໃນໝູ່ມະ ຫາຊົນມາເປັນເວລາອັນຍາວນານ, ດັ່ງນັ້ນຂ້າພະເຈົ້າຈຶ່ງໄດ້ພະຍາຍາມ ຖອດຈາກບົດຄຳກອນມາເປັນການເລົ່າເລື່ອງທຳມະດາ, ທັງນີ້ເພື່ອໃຫ້ທ່ານຜູ້ອ່ານສາມາດກຳໄດ້ເນື້ອໃນຈິດໃຈຂອງເລື່ອງງ່າຍຂຶ້ນ, ໂດຍສະ ເພາະແມ່ນຄົນຮຸ່ນໃໝ່ ທີ່ບໍ່ສາມາດຈະເຂົ້າໃຈຄຳກອນໄດ້ດີນັ້ນຍິ່ງມີຄວາມ ຈຳເປັນຈະຕ້ອງອ່ານແບບຄຳເລົ່າທຳມະດາ.

ສະບັບໃບລານຂຽນດ້ວຍຕົວໜັງສືທຳທີ່ຂ້າພະເຈົ້ານຳມາຖອດໃນ ເທື່ອນີ້ໄດ້ມາຈາກຫໍສະໝຸດແຫ່ງຊາດ. ໃນການຖອດນັບວ່າມີຄວາມຫຍຸ້ງຍາກ ພໍສົມຄວນເນື່ອງຈາກຕົ້ນສະບັບເດີມນັ້ນຜູ້ກ່າຍເປັນຕົວທຳນັ້ນ ກ່າຍສັບ ສົນ

ໂພດ, ມີຫລາຍໆໃນຄຳກອນກໍບໍ່ເປັນຄຳກອນອັນສົມບູນ, ຕ້ອງໄດ້ພິຈາ ລະ
ນາກະຕວງຫລີບໄປຫລີບມາຫລາຍເທື່ອ ຈຶ່ງສາມາດຖອດເອົາເນື້ອໃນ ຈິດ
ໃຈຂອງເລື່ອງໄດ້.

ການຖອດຈາກຄຳກອນມາເປັນຄຳເລົ່າຫລືຄຳເວົ້າທຳມະດາຂອງ ຂ້າ
ພະເຈົ້າໃນເທື່ອນີ້ ກໍຄືກັບທຸກໆເທື່ອທີ່ໄດ້ຖອດມານັ້ນຄືໄດ້ລວບລັດຕັດ ຈ້ອນ
ເອົາເນື້ອໃນຮູບການຂອງເລື່ອງເປັນຫລັກບໍ່ແມ່ນຖອດແບບຄຳຕໍ່ຄຳແຕ່ຢ່າງ
ໃດ, ມີບາງບ່ອນເພື່ອໃຫ້ເນື້ອໃນຫນັກແຫນ້ນຂ້າພະເຈົ້າກໍໄດ້ນຳເອົາ ບົດ
ກອນມາໃສ່ຕື່ມເປັນຍ່ານໆໄປ.

ແຕ່ສິ່ງທີ່ຂ້າພະເຈົ້າປາສະຈາກບໍ່ໄດ້ນັ້ນກໍຄືຄວາມຂາດຕົກບົກພ່ອງ ຈາກ
ການຖອດອາດຈະກໍບໍ່ໄດ້ຄົບບໍລິບູນຕາມເນື້ອໃນຈິດໃຈຂອງເລື່ອງ. ແຕ່
ຫາກວ່າໄດ້ມີໂອກາດຈັດພິມເປັນເທື່ອທີສອງອີກ ຂ້າພະເຈົ້າກໍຈະພະ ຍາ
ຍາມຮຽບຮຽງຕື່ມໃຫ້ບໍລິບູນຄົບຖ້ວນກວ່າເກົ່າ

ວັນທີ 16/5/1994
ດ້ວຍຄວາມຮັກແພງ.

ພ.ພວງສະບາ

# ຫຍໍ້ເລື່ອງ

ຍັງມີເມືອງແຫ່ງໜຶ່ງຊື່ວ່າ ເມືອງກາສີ ມີພະຍາພົມມະສີເປັນຜູ້ປົກ ຄອງ ພະອົງມີມະເຫສີຊື່ວ່າພະນາງຄຳພັນ. ເມືອງກາສີເປັນເມືອງທີ່ມີທັດສະນິຍະພາບອັນສວຍງາມ ຕັ້ງຢູ່ແຄມແມ່ນ້ຳໃຫຍ່ສາຍໜຶ່ງ. ຕໍ່ມາພະນາງຄຳພັນ ກໍ ປະສູດລູກເປັນຜູ້ຊາຍໃສ່ຊື່ວ່າ ທ້າວຂຸນລູ.

ພະຍາພົມມະສີແລະພະນາງຄຳພັນມີຄວາມປິຕິຊົມຊື່ນຫາອັນປຽບບໍ່ໄດ້, ທີ່ໄດ້ລູກຊາຍມາເກີດດອມ, ດັ່ງນັ້ນຈຶ່ງສັ່ງໃຫ້ໝໍໂຫນມາດູເບິ່ງດວງຊາ ຕາ ຂອງທ້າວວ່າຈະດີຮ້າຍປະການໃດ, ໝໍໂຫນໄດ້ທຳນາຍວ່າທ້າວແມ່ນເຊື້ອ ໜໍ່ໂພທິຍານ, ແຕ່ວ່າທ້າວຈະເສຍຊີວິດແຕ່ເວລາຍັງໜຸ່ມນ້ອຍແລະທ້າວຜູ້ນີ້ ກໍຈະບໍ່ມີພະຍາດອາຄົມແນວໃດມາບຽດບຽນແລະຈະບໍ່ມີຜູ້ໃດມາຂ້າ ມາ ເບື່ອທ້າວໄດ້, ແຕ່ວ່າເມື່ອເຖິງເວລາແລ້ວທ້າວຫາກຈະເສຍຊີວິດເອງ.

ເມື່ອພະຍາພົມມະສີແລະພະນາງຄຳພັນໄດ້ຮູ້ດັ່ງນັ້ນກໍມີຄວາມແຄ້ນເຄືອງ ໃນໃຈ, ພະອົງຈຶ່ງສັ່ງໃຫ້ເສນາອາມາດທຳບຸນໃຫ້ທານບໍ່ຂາດເພື່ອເປັນການ ສືບດວງຊາຕາຂອງທ້າວ.

ກ່າວເຖິງເມືອງນະຄອນກາຍ, ເມືອງນີ້ມີພະຍາສຸດທະລາດເປັນຜູ້ ປົກ ຄອງພະອົງມີມະເຫສີຊື່ວ່າພະນາງທອງສີ, ເມືອງນະຄອນກາຍນີ້ເວົ້າ ເຖິງ ຄວາມອຸດົມສົມບູນແລະສວຍງາມກໍບໍ່ນ້ອຍໜ້າກວ່າເມືອງກາສີແຕ່ປະ ການ

ໃດ. ໃນເວລາຕໍ່ມາພະນາງທອງສີກໍໄດ້ປະສູດລູກເປັນຜູ້ຍິງໃສ່ຊື່ວ່ານາງອົ້ວຄ່ຽມ. ພະຍາສຸດທະລາດສັ່ງໃຫ້ປູກພາສາດໃຫ້ນາງຢູ່ສະເພາະແລະຈັດເອົານາງສະໜົມເຝົ້າບົວລະບັດຈຳນວນເຖິງຮ້ອຍນາງ.

ເມື່ອນາງອົ້ວຄ່ຽມຫລືນາງອົ້ວເປັນສາວອາຍຸໄດ້ 14 ປີ ຄວາມ ງາມຂອງນາງນັ້ນເປັນທີ່ເລື່ອລືກັນໄປທົ່ວ. ນອກຈາກສ້າງຫໍພາສາດໃຫ້ແລ້ວ, ພະຍາສຸດທະລາດຍັງສັ່ງໃຫ້ສ້າງສວນດອກໄມ້ແລະສະໃຫ່ຍອີກໜ່ວຍໜຶ່ງ ຊຶ່ງພັ່ງພ້ອມໄປດ້ວຍດອກໄມ້ນາງພັນ.

ຫລັງຈາກພະຍາ ສຸດທະລາດສິ້ນພະຊົນແລ້ວ, ຂຸນຜູ້ໃຫ່ຍກໍແຕ່ງຕັ້ງໃຫ້ພະນາງທອງສີເປັນຜູ້ປົກຄອງບ້ານເມືອງແທນ ຊາມຊານາງອົ້ວໃຫ່ຍຈຶ່ງ ຈະມອບບ້ານເມືອງໃຫ້ນາງເປັນຜູ້ປົກຄອງສືບຕໍ່ໄປ. ຝ່າຍພະນາງທອງສີ ເມື່ອໄດ້ຮັບແຕ່ງຕັ້ງດັ່ງນັ້ນ ກໍໄດ້ເອົາໃຈໃສ່ປົກຄອງບ້ານໂດຍດີຕະຫລອດ ມາ ສ່ວນວ່າເມືອງກາສີນັ້ນເມື່ອພະຍາພົມມະສີສິ້ນພະຊົນແລ້ວ ພະນາງຄຳ ຟັນກໍໄດ້ຂຶ້ນປົກຄອງບ້ານເມືອງເຊັ່ນດຽວກັນແລະທັງສອງຄືພະນາງທອງສີແລະພະນາງຄຳພັນນີ້ເປັນພະສະຫາຍຮັກຊຶ່ງກັນແລະກັນມາແຕ່ຄາວຍັງເປັນສາວພຸ້ນ.

ເມື່ອພະຍາພົມມະສີສິ້ນພະຊົນໄດ້ 7 ປີ. ພະນາງຄຳພັນກໍຈະໄປ ໂອມຜູ້ສາວໃຫ້ທ້າວຂຸນລູ, ຜູ້ສາວຜູ້ນັ້ນເປັນລູກສາວຂອງສົມສະອາດເສນາ, ແຕ່ທ້າວຂຸນລູບອກວ່າບໍ່ໄດ້ມັກນາງແຕ່ຢ່າງໃດ. ທ້າວຂຸນລູບອກກັບແມ່ວ່າປະສົງແຕ່ນາງອົ້ວຄ່ຽມຜູ້ດຽວ ເພາະວ່າໄດ້ຂ່າວຄົນເລື່ອລືວ່ານາງອົ້ວຄ່ຽມງາມ ແທ້ງາມວ່າ.

ທ້າວຂຸນລູໄດ້ລັກເຂົ້າໄປຊົມນາງອົ້ວຄ່ຽມຫລາຍເທື່ອຈົນແມ່ນາງໄດ້ ຮູ້ເລື່ອງລາວຕ່າງໆແລ້ວກໍໄດ້ແຕ່ປ້ອຍຄ່ານາງອົ້ວຄ່ຽມຕ່າງໆນາໆວ່າ ນາງ

ເຣັດຂາຍໜ້າຂາຍຕາວົງຕະກຸນ. ນາງອົ້ວ ດ່ຽມເອງກໍມີຄວາມເສຍໃຈ ວ່າ ແມ່ຄອຍຂັດຂວາງຄວາມຮັກຂອງນາງ. ຕໍ່ມາທ້າວຂຸນລູກໍໄດ້ຍົກຂັນໝາກໄປຂໍນາງແຕ່ແມ່ຂອງນາງ ໄດ້ປະຕິເສດ, ບອກແຕ່ພຽງວ່າຈະຍົກນາງອົ້ວ ດ່ຽມ ໃຫ້ແກ່ທ້າວຂຸນລາງໃນເດືອນໜ້ານີ້.

ທ້າວຂຸນລາງເປັນພະຍາປົກຄອງຢູ່ເຂດພູຄອຍ ມີຄວາມຮັກມັກນາງ ອົ້ວ ດ່ຽມຄືກັນກັບທ້າວຂຸນລູ, ແຕ່ວ່ານາງອົ້ວ ດ່ຽມບໍ່ມັກທ້າວຂຸນລາງ. ດັ່ງນັ້ນ ຫຸ ນີ້ທ້າວຂຸນລາງຈຶ່ງແຕ່ງໃຫ້ຄົນເອົາຊີ້ນເອົາປາອາຫານມາຖວາຍພະ ນາງ ທອງສີແມ່ຂອງນາງອົ້ວ ດ່ຽມເປັນປະຈຳ. ຝ່າຍພະນາງທອງສີເມື່ອໄດ້ເຄື່ອງ ຂອງຕ້ອນຈາກທ້າວຂຸນລາງກໍມີຄວາມດີອົກດີໃຈ, ໃນທີສຸດກໍຕົກລົງປົງໃຈຈະ ມອບນາງອົ້ວ ດ່ຽມໃຫ້ເປັນເມຍຂອງທ້າວຂຸນລາງ. ແຕ່ນາງອົ້ວດ່ຽມປະ ຕິ ເສດແລະບອກແມ່ວ່າຖ້າໃຫ້ເອົາທ້າວຂຸນລາງເປັນຜົວນາງຂໍຕາຍດີກວ່າ.

ສ່ວນພະນາງທອງສີກໍຢືນແບບກະຕ່າຍຂາດຽວ ຈັ່ງໃດກໍຈະບີບບັງ ຄັບ ໃຫ້ນາງອົ້ວ ດ່ຽມເອົາກັບທ້າວຂຸນລາງຈົນໄດ້. ໃນທີສຸດນາງອົ້ວດ່ຽມກໍ ລັກ ໜີໄປຜູກຄໍຄົນເອງຕາຍຢູ່ທີ່ຕົ້ນຈວງພີ່ປອງປູກ. ຝ່າຍທ້າວຂຸນລູນັ້ນເມື່ອ ໄດ້ ຮູ້ຂ່າວວ່ານາງອົ້ວ ດ່ຽມຜູກຄໍຕາຍ, ທ້າວຂຸນລູກໍໃຊ້ມີດແທງຄໍຄົນເອງ ຕາຍ ຕາມນາງອົ້ວ ດ່ຽມໄປພົບກັນຢູ່ເມືອງຟ້າສະຫວັນ.

ການສູນເສຍນາງອົ້ວ ດ່ຽມແລະທ້າວຂຸນລູໄປນັ້ນສ້າງຄວາມເສົ້າໂສກອາ ໄລອາວອນໃຫ້ແກ່ພະນາງທອງສີແລະພະນາງຄຳພັນທາອັນປຽບບໍ່ໄດ້. ຫລັງ ຈາກເລີກຊາກສົ່ງສະການທ້າວແລະນາງແລ້ວ, ຜູ້ເປັນແມ່ທັງສອງກໍພາ ກັນ ເຂົ້າໄປບວດເປັນແມ່ຂາວບຳເພັນພາວະນາຢູ່ໃນສິນກິນໃນທຳ.

## 1. ກ່າວເຖິງເມືອງກາສີ.

ຍັງມີເມືອງແຫ່ງໜຶ່ງຊື່ວ່າ ເມືອງກາສີ ມີພະຍາພົມມະສີເປັນຜູ້ປົກຄອງໄພ່ຟ້າປະຊາກອນ, ພະອົງມີມະເຫສີຊື່ວ່າພະນາງຄຳພັນ. ເມືອງກາສີ ເປັນເມືອງທີ່ມີທັດສະນີຍະພາບອັນສວຍງາມ ເພາະວ່າເມືອງນີ້ຕັ້ງຢູ່ແຄມແມ່ນ້ຳໃຫ່ຍສາຍໜຶ່ງ. ທີ່ວບໍລິເວນພະລາຊະວັງຂອງພະອົງຮຸ່ງເຮືອງ ເຫລືອງເຫລື້ອມໄປດ້ວຍຄຳເງິນແລະແກ້ວ. ພັ່ງພ້ອມໄປດ້ວຍສາງແກ້ວແຫວນ ເງິນຄຳເຖິງເກົ້າໝື່ນສາງ. ມີທັງຊ້າງງານມີຮ້ອຍຄູ່, ທຸກຄ່ຳເຊົ້າວັນຄືນມີນາງສະໜົມກົມມະວັງ 300 ນາງຄອຍເຝົ້າບົວລະບັດຜັດປ່ຽນກັນພັດວີແລະ ມີເສນາອາມາດເຖິງຮ້ອຍ ປະຈຳລາຊະວັງ. ປະຊາຊົນຊາວເມືອງຢູ່ທ່າງທຳມາຫາກິນດ້ວຍຄວາມສະຫງົບສຸກແລະເບີກບານມ່ວນຊື່ນ.

ເມື່ອພະນາງຄຳພັນຖືພາ ໄດ້ຄົບກຳໜົດແລ້ວກໍປະສູດລູກເປັນຜູ້ຊາຍເປັນຜູ້ມີຮູບໂສມອັນສວຍງາມ, ຂ່າວວ່າພະນາງຄຳພັນປະສູດ ໄດ້ລູກເປັນຜູ້ ຊາຍເສນາອາມາດແລະຊາວເມືອງໃພງກໍມີຄວາມປິຕິຍິນດີພາກັນຫລັ່ງໄຫລເຂົ້າເຝົ້າ, ຝ່າຍພະຍາພົມມະສີເມື່ອຮູ້ຂ່າວກໍໄດ້ສະເດັດໄປສູ່ໂຮງຂອງພະ ນາງຄຳພັນ ເພື່ອຢ້ຽມເບິ່ງກຸມມານທີ່ເກີດໃຫ່ມພະອົງໄດ້ເຫັນວ່າກຸມມານເປັນຜູ້ມີຮູບໂສມຜິວພັນອັນສວຍງາມແທ້ກໍມີຄວາມໂສມະນັດຍິນດີ. ດັ່ງນັ້ນພະອົງຈຶ່ງສັ່ງໃຫ້ເສນາໄປນຳໝໍໂຫນມາດູເບິ່ງດວງຊາຕາຂອງກຸມມານວ່າຈະດີ ຈະ

ຮ້າຍແນວໃດ ຍັງຈະໄດ້ເປັນຜູ້ສືບເຊື້ອແຫນແນວປົກຄອງບ້ານເມືອງຫລືບໍ່?

ເມື່ອຫມໍໂຫນລົງເລກດູເບິ່ງດວງຊາຕາຂອງກຸມມານແລ້ວຈຶ່ງໄດ້ຂາບທູນໃຫ້ພະອົງຮູ້ວ່າ ດວງຊາຕາຂອງກຸມມານຜູ້ນັ້ນແມ່ນຕົກຖືກດວງຊາຕາຂາດຈະເສຍຊີວິດແຕ່ເມື່ອຍັງຫນຸ່ມນ້ອຍ ແຕ່ຫາກວ່າກຸມມານຜູ້ນັ້ນບໍ່ແມ່ນຄົນທຳມະດາສາມັນ ຫາກແມ່ນເຊື້ອຫນໍ່ໂພທິຍານລົງມາເກີດ, ເມື່ອພະອົງໄດ້ຟັງດັ່ງ ນັ້ນກໍປາກບໍ່ໄດ້ແຕ່ຄຶດຄະນຶງຢູ່ໃນໃຈ. ບຶດຫນຶ່ງພະອົງຈຶ່ງຖາມຫມໍໂຫນວ່າເຮົາຈັກເອົາຫມໍມາສູດສືບດວງຊາຕາຂອງກຸມມານຈະໄດ້ບໍ. ຂໍໃຫ້ຫມໍໂຫນດູເບິ່ງຊາຕາຂອງກຸມມານຕື່ມອີກ. ຫມໍໂຫນຟ້າວລົງເລກຕັ້ງ, ເມື່ອໄດ້ຮູ້ຈາກ ຜົນຂອງການຄຳນວນຈຶ່ງຂາບທູນຕໍ່ພະອົງວ່າ ຈະເຮັດແນວໃດກໍ່ບໍ່ພົ້ນ ຫລີກດອກ. ພະອົງຈຶ່ງຖາມວ່າຄັນຊັ້ນທ້າວຊິຕາຍຍ້ອນເຫດອັນໃດ? ຫມໍໂຫນ ຈຶ່ງຂາບທູນວ່າ ກຸມມານຜູ້ນັ້ນບໍ່ມີພະຍາດໂລຄາອັນໃດມາບຽດບຽນພໍ່ໃຫ້ສູນເສຍຊີວິດຍ້ອນ ແລະກໍບໍ່ມີຜູ້ໃດຈະມາຂ້າມາເບື່ອໄດ້, ແຕ່ຫາກເຖິງເວລາ ແລ້ວກຸມມານກໍຈະສິ້ນພະຊົນເອງ.

ຝ່າຍພະຍາພົມມະສີໄດ້ຮູ້ດັ່ງນັ້ນ ກໍໄດ້ແຕ່ແຄ້ນຄັ່ງຢູ່ໃນໃຈແລະເວົ້າວ່າ: ເອົາແຕ່ບຸນຂອງທ້າວຈະເປັນໄປຕັ້ນເທາະ, ຈາກນັ້ນຈຶ່ງສັ່ງໃຫ້ເສນາ ອາມາດຈັດຫານາງສະຫນົມຫນຸ່ມມາເຝົ້າບົວລະບັດທ້າວເຖິງຮ້ອຍນາງ. ຕໍ່ ມາພະອົງຈຶ່ງໃສ່ຊື່ທ້າວວ່າ ທ້າວຊຸນລຸ. ໃນແຕ່ລະມື້ພະອົງກໍສັ່ງໃຫ້ເສນາ ອາມາດຕົກແຕ່ງກິນຫານບໍ່ໄດ້ຂາດດັ່ງບົດກອນຂຽນວ່າ:

ພະຍາຫລວງເຈົ້າ　　ຈິນດາແຄ້ນຄັ່ງ
ເອົາແຕ່ບຸນແຈ່ມເຈົ້າ　　ຕາມພົ້ນຫາກຊິເປັນ ຕົ້ນທ້ອນ
ແລ້ວຈຶ່ງຕ້ານ　　ຈາຕໍ່ເສນາ
ສູຈົ່ງໄປຫານາງສະຫນົມ　　ຫນຸ່ມງາມພໍ້ຮ້ອຍ

ບົວລະບັດເຈົ້າ ຈອມເມືອງຢ່າໄດ້ຂາດ
ພະບາດໃສ້ຊົ້ທາວ ຂຸນລຸ້ນອຍໜໍ່ເມືອງ
ພະກ່າວແລ້ວ ສະເດັດສູ່ຫໍຄຳ
ພະກິຈຈຳເສນາຕີກາ ແຕ່ງທານມີຄານ
ອັນວ່າເສນາທ້າວ ທັງຫລາຍຕົກແຕ່ງ
ທານທອດໃຫ້ ຕາມເຈົ້າທີ່ປະສົງ ເຈົ້າເອີຍ

## ໒. ກ່າວເຖິງເມືອງນະຄອນກາຍ.

ເມືອງນະຄອນກາຍຫລືເມືອງກາຍນະຄອນແຕ່ງນົມພະຍາສຸດທະ ລາດເປັນຜູ້ປົກຄອງ, ພະອົງມີມະເຫສີຊື່ວ່າພະນາງທອງສີ. ເວົ້າເຖິງຄວາມອຸດົມຮັ່ງມີແລະຮຸ່ງເຮືອງເຫລືອງເຫລື້ອມຂອງເມືອງນະຄອນກາຍກໍ່ບໍ່ນ້ອຍ ໜ້າກ່ວາເມືອງກາສີແຕ່ຢ່າງໃດ ດັ່ງບົດກອນຂຽນວ່າ:

| | |
|---|---|
| ຫລິງດູລຸງລັງກ້ວາງ | ທີ່ຄຳຊ້ອງຊໍ່ |
| ກຳແພງສູງກໍ່ຕັ້ງ | ຫລາຍຊັ້ນແວດລະວັງ |
| ສະຫນຸກຍິ່ງລົ້ນ | ເມືອງໃຫຍ່ນະຄອນກາຍ |
| ເສນາຫລາຍ | ປ່ຽນວຽນລະວັງເຈົ້າ |
| ສິບອັນຕັ້ງ | ຢາຍປັ້ງລ້ານໝູ່ |
| ກໍ່ບໍ່ກົວເສິກຕ່າງທ້າວ | ມາມ້າງຢາດຊີ້ງ ເຈົ້າເອີຍ |

ພ້ອມກັນນີ້ເມືອງນະຄອນກາຍ ຍັງແມ່ນເມືອງທ່າການຄ້າຕື່ມອີກທຸກມື້ສະເພົາສິນຄ້າກິນຈຳສິນຄ້າມາແລກປ່ຽນບໍ່ຂາດ. ອິດທິພົນຂອງເມືອງນີ້ກໍ່ມີອານາເຂດກວມໄປເຖິງເຂດພູສູງແສນສ່ຳ ຊຶ່ງເປັນເມືອງຂອງທ້າວຂຸນລາງ. ສຳລັບທ້າວຂຸນລາງນີ້ເປັນເຜົ່າລາວເທິງ. ກໍ່ໄດ້ມາສ່ວຍພູຕໍ່ພະຍາສຸດທະລາດບໍ່ຂາດ, ພະອົງປົກຄອງເມືອງນີ້ດ້ວຍຄວາມສະຫງົບສຸກທຸກປະການ.

ຕໍ່ມາພະນາງທອງສີກໍ່ໄດ້ປະສູດລູກເປັນຜູ້ຍິງ ຊຶ່ງມີຮູບໂສມອັນສວຍງາມ

ຈະຫາຍິງໃດປຽບປານບໍ່ໄດ້, ຂ່າວການປະສູດຂອງພະນາງທອງສີມາ ໃຫ້ຊາວເມືອງແລະຍາດຕິວົງມີຄວາມເບີກບານປິຕິຍິນດີ, ສ່ວນພະຍາສຸດ ທະລາດນັ້ນເມື່ອໄດ້ຮູ້ຂ່າວກໍສະເດັດໄປເບິ່ງດ້ວຍພະອົງເອງແລະເກີດ ຄວາມຮັກແພງລູກດັ່ງແກ່ນຕາ, ດັ່ງນັ້ນພະອົງຈຶ່ງໃສ່ຊື່ນາງວ່ານາງອົ້ວຄ່ຽມຕາມວັນທີ່ນາງເກີດ ພ້ອມທັງຈັດໝູ່ນາງສະໜົມໃຫ້ເຝົ້າຄອຍປົວລະບັດນາງມີ ຈຳນວນເຖິງຮ້ອຍນາງ.

ເມື່ອເວລາວັນເດືອນປີລ່ວງໄປນາງອົ້ວຄ່ຽມກໍໃຫຍ່ເປັນສາວອາຍຸ ໄດ້ 14 ປີ, ຄວາມງາມຂອງນາງຍິ່ງງາມຂຶ້ນນັບວັນນັບຄືນດັ່ງບົດກອນຂຽນວ່າ:

ອາຍຸໄດ້ ສິບສີ່ຊອນສາວ
ເລົ່າຄີງໂສມ ດັ່ງນາງສະຫວັນຟ້າ
ມີທັງຜິວດິກຄົ້ວ ປານເທົານວຍກ່ອງ
ສອງຝ່າຍແກ້ມ ປຸ່ມໄລ້ແຫ່ນທອງ
ແຂນກົມສ້ວຍ ທະນູທອງພາດກ່ອງ
ຍາມເມື່ອນາງກ່າວຕ້ານ ຫົວແລ້ວຄ່ອຍຈາ
ຍາມເມື່ອຕາເຫລືອກຢ້ຽມ ຝູງຊາຍມີນເມື່ອຍ
ໃຜກໍອົດບໍ່ໄດ້ ຊາຍເຖົ້າໜຸ່ມຄະນອງ ເຈົ້າເອີຍ

ດ້ວຍຄວາມຮັກໃນລູກສາວດຽວ, ດັ່ງນັ້ນພະຍາສຸດທະລາດຈຶ່ງສັ່ງໃຫ້ສ້າງທີ່ພາສາດໃຫ້ນາງຢູ່ໂດຍສະເພາະ, ເສນາອາມາດຈຶ່ງໄດ້ພ້ອມກັນປຸກສ້າງທີ່ພາສາດອັນວິຈິດງາມຕາທີ່ປະດັບປະດາໄປດ້ວຍຄຳທັງມວນ ມີທັງຮູບກິນນະລີກິນນະລອນ, ຮູບຊ້າງຄອຍແມ່ກິນນົມ, ມີທັງຮູບຈີນກົມ, ຮູບປະຕູທັງ4 ດ້ານມີທັງຮູບໄມ້ຈວງໄມ້ຈັນ. ພ້ອມກັນນັ້ນກໍສັ່ງໃຫ້ສ້າງສວນອາດອຸດທິ ຍານ ແລະສະໃຫຍ່ໜຶ່ງໜ່ວຍເຕັມໄປດ້ວຍດອກບົວຫລວງບົວທອງ, ເລາະລຽບ ແຄມ

ສະກິນດອກຈຳປີຈຳປາ ດອກເດື່ອ ດອກກະດັນງາແລະດອກໄມ້ອື່ນໆ ຢ່າງວິດວານພ້ອມທັງສິ່ງກິນອັນຫອມຫວນຫຼື້ງມີທັງດອກຈຸມດອກບານ, ພະ ນາງທອງສີກໍໄດ້ພານາງອົ້ວດ່ຽມເຂົ້າວັດຈຳສີນບໍ່ຂາດ. ເມື່ອສ້າງທີ່ພາສາດເປັນທີ່ຮຽບຮ້ອຍແລ້ວພະຍາສຸດທະລາດກໍຈັດພິທີເອົານາງຂຶ້ນສູ່ທີ່ພາ ສາດອັນ ມີສາວສະຫນົມກົມມະວັງເປັນຮ້ອຍໆຄອຍເຝົ້າບົວລະບັດທຸກຄ່ຳເຊົ້າວັນ ໃນນາງອົ້ວກໍໄດ້ຮັບແຕ່ຄວາມສຸກກາຍສະບາຍໃຈ.

ຢູ່ຕໍ່ມາພະຍາສຸດທະລາດກໍໄດ້ສິ້ນພະຊົນ(ຊີວິດ) ເຮັດໃຫ້ພະນາງທອງ ສີນາງອົ້ວຕະຫລອດເສນາອາມາດແລະຊາວເມືອງມີຄວາມໂສກເສົ້າອາ ໄລອາວອນເຖິງພະອົງທາອັນປຽບບໍ່ໄດ້, ເສນາອາມາດຈຶ່ງສ້າງໂກດແກ້ວບັນຈຸສົບຂອງພະອົງ. ສ່ວນວ່ານະເທສີກໍໄດ້ເຮັດບຸນໃຫ້ທານບໍ່ຂາດ. ສົບຂອງ ພະອົງໄດ້ສົບງັນຢູ່ຫນຶ່ງປີຈຶ່ງໄດ້ປະກອບພິທີສົ່ງສະການຕາມຮີດຄອງປະເພ ນີແລ້ວກໍ່ທາດໃສ່ກະດູກຂອງພະອົງເອົາໄວ້.

ເມື່ອພະຍາສຸດທະລາດໄດ້ສິ້ນພະຊົນແລ້ວ, ເສນາອາມາດຜູ້ໃຫຍ່ຈຶ່ງ ຍົກພະນາງທອງສີເປັນຜູ້ສືບຕໍ່ປົກຄອງບ້ານເມືອງແທນຊານຊານາງອົ້ວໃຫຍ່ໄດ້ສືບເຊື້ອແທນແນວ. ເມື່ອໄດ້ຮັບມອບຫມາຍແລ້ວພະນາງທອງສີກໍໄດ້ເອົາໃຈໃສ່ປົກຄອງບ້ານເມືອງດ້ວຍຄວາມຜາສຸກທຸກປະການ.

# 3. ທ້າວຂຸນລູໄປຫານາງອົ້ວ.

ປັດນີ້ທ້າວຂຸນລູມີອາຍຸໄດ້ 13 ຂວບພໍດີ, ເປັນຜູ້ມີຮູບໂສມຜິວພັນອັນ ງົດງາມພິປານວ່າແຕ້ມແຕ່ງຫລໍ່ເຫລົາ, ຊຸມຫມູ່ສາວສໍ່ານ້ອຍເຫັນທ້າວລວດ ກະສັນ, ຄັນທ້າວຫາກປາກຕ້ານຈາລະຈາກັບຜູ້ຍິງຄົນໃດແລ້ວ ບໍ່ວ່າແຕ່ສາວສໍ່ານ້ອຍຫລືວ່າແມ່ຮ້າງນາງຫມ້າຍ ແມ່ນຫລົງຮັກຫລົງມັກທ້າວຈົນມຶນຫູມຶນຕາບໍ່ຂຶ້ນເພາະຫລົງໄຫລຮູບຮ່າງອັນສວຍງາມຂອງທ້າວ.

ຫລັງຈາກພະຍາພິມມະສີ ໄດ້ສິ້ນພະຊົນໄປແລ້ວພະນາງຄຳພັນຜູ້ເປັນມະເຫສີເທວີກໍໄດ້ສືບຕໍ່ປົກຄອງໄພ່ຟ້າປະຊາກອນແທນພະອົງ ໂດຍມີເສນາ ຜູ້ຊຸນຟ້າເປັນຜູ້ຊ່ວຍວ່າກາບ້ານການເມືອງແລະຄ້ຳຍູນຂອງທ້າວຂຸນລູໃນ ແຕ່ລະປີປະມີເງິນຄຳນັບລ້ານເຂົ້າມາສູ່ເມືອງ, ເຮັດໃຫ້ເມືອງໃຫຍ່ກາສີນ ແຕ່ຄວາມຈະເລີນຮຸ່ງເຮືອງ.

ນັບແຕ່ພະຍາພິມມະສີ ໄດ້ສິ້ນພະຊົນໄປເປັນເວລາໄດ້ 7 ປີ, ພະ ນາງຄຳພັນກໍຄິດຈະໄປໂອມຜູ້ສາວມາໃຫ້ຂຸນລູ. ນາງແມ່ນລູກສາວຂອງສິນ ສະອາດເສນານັ້ນເອງ. ແຕ່ທ້າວຂຸນລູບໍ່ສົນໃຈຜູ້ສາວຄົນນີ້ເລີຍ. ທ້າວຂຸນລູ ມີຄວາມປະສົງຕໍ່ນາງອົ້ວຄ່ຽນຄົນດຽວ ເພາະໄດ້ຮູ້ຂ່າວວ່ານາງອົ້ວຄ່ຽນງາມຍິ່ງຍອຍນາງຟ້າກໍບໍ່ປານ, ທ້າວຄິດໃນໃຈວ່າຄາວນີ້ຈະໄປເບິ່ງດ້ວຍຕາ ຕົນເອງວ່ານາງງາມສົມເຂົາຊ່າເຂົາລືແທ້ບໍ?

ເມື່ອຄິດໄດ້ແນວນັ້ນ ທ້າວຈຶ່ງເຂົ້າໄປຄອບລາແມ່ວ່າຈະໄປຢາມ ເມືອງກາຍ, ແມ່ກໍບໍ່ຂັດບໍ່ຂືນຄວາມປະສົງຂອງທ້າວແຕ່ຢ່າງໃດ, ມີແຕ່ຂໍຮ້ອງ ໃຫ້ທ້າວຟ້າວໄປແລ້ວຟ້າວກັບຄືນມາເມືອງຂອງຕົນ. ຫລັງຈາກນັ້ນຜູ້ເປັນແມ່ ກໍຈັດແຈ່ງຫາເຄື່ອງຝາກຂອງຕ້ອນ ໃຫ້ທ້າວຂຸນລູນຳ ໄປຝາກພະນາງທອງສີ ຊຶ່ງເປັນສະຫາຍຮັກກັນມາແຕ່ຄາວເປັນສາວຮ່ວມກັນພຸ້ນ.

ທ້າວຂຸນລູອອກເດີນທາງຈາກເມືອງກາສີໄປສູ່ເມືອງກາຍຫລືນະ ຄອນກາຍດ້ວຍການຂີ່ມ້າ, ມີເສນາຕິດຕາມແຫ່ແຫນໄປນຳຈຳນວນຮ້ອຍຫນຶ່ງ. ຂະບວນເດີນທາງຂ້າມປ່າໃຫຍ່ດົງຫນາຂຶ້ນພູສູງຫລາຍຫລັ້ນ ຟັງສຽງທຶງມ້າທັງໄດ້ຍິນສຽງສັດປ່າແລະໄດ້ເຫັນພູມພາບທຳມະຊາດອັນສວຍງາມດັ່ງບົດກອນຂຽນວ່າ:

ຫລິງດູເຂົາທອງຕັ້ງ ຕານຕາວຊ້ອງຊໍ່ ພຸ້ນເຍີ
ພາກຫນຶ່ງເຫັນຫມູ່ກໍໄມ້ຕັ້ງ ລຽນຖານຖັນ
ພາກຫນຶ່ງຟັງຍິນທາດຽນນ້ຳ ໂຕນຕາດຫີນຜາ
ເຂົາກໍພາບາຄານພາຍ ຫມື່ນ ພະນັງເຂົາຂັ້ນ
ເຫັນທັງຈວງຈັນດູ ກະດັນງາຫອມອ່ອນ
ປະດັບດ່ານດ້າວ ຫອມກ້ວເກື້ອນດົງ
ທ້າວກໍສະຫນຸກຍິ່ງລົ້ນ ຫລິງປ່າດົງຫນາ
ມີທັງນົກກະທາທອງອັນ ກ່ອນຮັ້ງແຮນຮັ້ງ
ມີທັງສຽງກາຮ້ຽງ ງອຍຄອນຊ້ອນຄູ່
ປີແກ່ວງເປື້ອງ ຊົມຊູ້ຄູ່ສະເໜ່ ເຈົ້າເອີຍ

ຂະບວນແຫ່ຕິດຕາມໄປນຳທ້າວ ໄປເຖິງແມ່ນ້ຳ ແຫ່ງຫນຶ່ງທີ່ມີຊື່ວ່າຊອນແມ່ນ້ຳຊອນແຫ່ງນີ້ພະຍາເມືອງກາຍຫລືນະຄອນກາຍພູມບຸນໄດ້ຈັດຕັ້ງ ເປັນ

ຈຶ່ງກີນຂ້າມນ້ຳ(ອາດແມ່ນທາງຜ່ານຈະຂ້າມນ້ຳ). ດັ່ງນັ້ນ, ທ້າວຈຶ່ງໄດ້ ພາຝູງເສນາອາມາດພັກຢູ່ແຄມແມ່ນ້ຳນີ້, ຕອນໃກ້ຄ່ຳຝູງປາໃຫຍ່ນ້ອຍພາ ກັນລ່ອງລອຍໄປມາເປັນໝູ່ເຫັນແລ້ວພາໃຫ້ມີຄວາມເບີກບານໃຈ, ທ້າວ ໄດ້ຖາມເສນາອາມາດວ່າຍັງອີກໄກປານໃດຈຶ່ງຈະຮອດເມືອງກາຍ? ເສນາໄດ້ບອກທ້າວວ່າຍັງຢູ່ອີກ 3 ຄືນກໍຮອດແລ້ວ.

ຄືນນີ້, ທ້າວໄດ້ພາເສນາອາມາດພັກນອນຢູ່ແຄມແມ່.ນ້ຳແຫ່ງນີ້ທ່າມກາງສຽງສັດປ່ານານາຊະນິດຮ້ອງໄປມາຕາມປ່າດົງພົງໄພ, ເມື່ອທ້າວ ນອນຕື່ນຂຶ້ນກໍນຳພາຂະບວນອອກເດີນທາງຕໍ່ໄປ ໂດຍທ້າວໄດ້ຂີ່ມ້າຕາມ ເຄີຍການເດີນທາງເປັນເວລາຫລາຍວັນຈຶ່ງໄປຮອດເມືອງກາຍ. ເມື່ອເຂົ້າເຖິງເມືອງແລ້ວກໍພາເສນາອາມາດພັກເຊົາຢູ່ທີ່ສາລາຕໍ່ມາທ້າວກໍຜັດປ່ຽນເຄື່ອງນຸ່ງອັນຈົບງາມມີທັງແຫວນໃສ່ກ້ອຍ ສ້ອຍສັງວານ ພ້ອມທັງເອົາຂອງຝາກ ທີ່ແມ່ໄດ້ຝາກມານັ້ນ ເຂົ້າໄປຫາພະນາງທອງສີແມ່ຂອງນາງອົ້ວຄຽມ.

ຝ່າຍພະນາງທອງສີ ເມື່ອໄດ້ເຫັນທ້າວຂຸນລູກໍຟ້າວຕ້ອນຟ້າວຮັບ ແບບເປັນກັນເອງ, ທ້າວຂຸນລູກໍຖາມຂ່າວສຸກທຸກດ້ວຍຄວາມເຄົາລົບນັບຖືທັງເວົ້າວ່າແມ່ຂອງທ້າວກໍໄດ້ສັ່ງຄວາມມາຢ້ຽມຢາມຖາມຂ່າວເຖິງແມ່ຜູ້ຢູ່ທາງພີ້ ຍັງຄ່ອຍຢູ່ດີມີແຮງປົກຄອງບ້ານເມືອງຢູ່ຊຸ່ມເຢັນຢູ່ບໍ? ພ້ອມນີ້ກໍໄດ້ຝາກເຄື່ອງຕ້ອນມາມອບໃຫ້. ແມ່ຂອງນາງອົ້ວ ໄດ້ຟັງດັ່ງນັ້ນກໍເອົາມືຕີອົກດ້ວຍຄວາມ ດີອົກດີໃຈ ທັງຖາມຫາແມ່ຂອງທ້າວຂຸນລູຜູ້ເປັນສະຫາຍຮັກຊຶ່ງເກີດໃນປີດຽວກັນດັ່ງບົດກອນຂຽນວ່າ:

ເມື່ອນັ້ນນາງເມືອງເຫັ້ງ　　ຕີຊວງກົ້ງເກື່ອນ
ເຈົ້າແມ່ຂ້ອຍ　　ມາພີ້ຮອດດີ ແມ່ລີ
ອັນໜຶ່ງສະຫາຍແກ້ວ　　ປີດຽວເຈົ້າສ່ຽວ

ຍັງຄ່ອຍສ້າງ ສິນຊ້ອຍຢູ່ດີ ແນ່ລື
ເມື່ອນັ້ນຂຸນລູທ້າວ ຂານຄຳພະແມ່
ວ່າແມ່ກໍທຸກຂະເວດໄອ້ ເສຍເຈົ້າພະຍອດເມືອງ
ຍັງແຕ່ມານດາຂ້າ ສະເຫວີຍເມືອງຕຸ້ມໄພ່
ເປັນດັ່ງຜາໃຫ່ຍຕັ້ງ ເຕັງເນື້ອບໍ່ວາຍ ເຈົ້າເອີຍ
ເມື່ອນັ້ນນາງເມືອງຕ້ານ ຂານຄຳດອນລູກ
ອັນວ່າກົ້າຝ່າຍພຸ້ນ ທັງ ພໍ່ທາກດັ່ງດຽວ ແມ່ແລ້ວ

ແມ່ຂອງນາງອົ້ວເວົ້າວ່າ ສະຫາຍເຮົາທາງພຸ້ນກໍຍັງດີໄດ້ລູກເປັນ ຜູ້ຊາຍຈະໄດ້ສືບເຊື້ອແທນເມືອງ, ແຕ່ທາງແມ່ພໍ່ພັດໄດ້ລູກເປັນຜູ້ຍິງຢູ່ນຳ, ແຕ່ຈັ່ງໃດໆລູກກໍຢ່າໄດ້ຖິ້ມປະລະໄລນ້ອງເດີ, ຈົ່ງຫມັ່ນຫຼຽວໄປມາຫາສູ່ຢື້ ຢາມຖາມຂ່າວກັນ, ຜູກສຳພັນໄມຕີກັນ ອັນວ່າເມືອງຝ່າຍພຸ້ນທາງພໍ່ຢ່າວາງແມ່ທ້ອນ.

ຫລັງຈາກທ້າວຂຸນລູໄດ້ມອບເຄື່ອງຝາກຂອງຕ້ອນແລະຮັບຟັງການໂອ້ລົມຈາກແມ່ຂອງນາງອົ້ວແລ້ວທ້າວກໍອຳລາແມ່ຂອງນາງອົ້ວກັບໄປສູ່ສາລາທີ່ພັກເຊົາດອນຫມູ່ເສນາອາມາດ. ພໍຕາເວັນລັບແລງເມື່ອທ້າວກິນເຂົ້າເປັນ ທີ່ຮຽບຮ້ອຍແລ້ວກໍຈັດແຈງແຕ່ງຕົວເພື່ອຈະເຂົ້າໄປຫານາງອົ້ວຢູ່ໃນຫໍຜາສາດຂອງນາງໃນຄ່ຳຄືນນີ້, ທ້າວນຸ່ງເຄື່ອງງາມເປັນພິເສດດ້ວຍການນຸ່ງຜ້າ ພື້ນຄ່າແສນຄຳ, ທັງປະດັບເກດເກົ້າທັງໃສ່ສ້ອຍສັງວານ, ທັງແຫວນໃສ່ມື ແຂນກໍໃສ່ມ້າວ, ເບິ່ງແລ້ວພໍປານພະອິນລົງແຕ່ງຈະຫາໃຜປຽບບໍ່ມີແລ້ວສົມ ວ່າເປັນເຊື້ອຫນໍ່ພຸດໂທ. ຈາກນັ້ນທ້າວຈິ່ງອອກເດີນທາງໄປສູ່ຫໍຜາສາດ ຂອງນາງອົ້ວ, ເມື່ອທ້າວເຂົ້າໄປໃນຜາສາດແລ້ວທ້າວກໍລົມກັບນາງເປັນ ການກ້ຽວພາລາສີຕາມປະສາຂອງບ່າວແລະສາວແລະບອກໃຫ້ນາງໄຂປະຕູ ໃຫ້

ດັ່ງບົດກອນຂຽນວ່າ:

ດູລາເຈົ້າ ຈອມຂວັນຊູ້ເພີ່ນ ແພງເອີຍ
ພີ່ກໍດັ້ນຍ່ານຟ້າ ຢາມນ້ອງໃຫ້ຕື່ນມາ ພີ້ຫອມ
ຍາມນັ້ນ ນາງຄານເນົາໃນຫ້ອງ ປາງຫລວງພາສາດ
ນາງກໍຄຶດບໍ່ຖ້ຂອງ ປັກຕູກ້ວາງບໍ່ໄຂ
ທ້າວກ່າວຕ້ານ ຈານາດສອງທີ
ຫລືວ່ານາງຊິມສອງ ບໍ່ມາຍກັນໄດ້
ອັນທີຄຳກະສົມອ້າຍ ຖາມເຖິງບໍ່ເຕືອງຕໍ່
ຫລືວ່າຄຳປາກອ້າຍບໍ່ຖືກເນື້ອ ພະໄນແນ້ງທໍ່ໄຍ ນໍ້ນໍ /

ເມື່ອນາງອົ້ວ ໄດ້ຍິນສຽງປາກຕ້ານຈາລະຈາຂອງທ້າວຂຸນລູນາງຈຶ່ງ ໄຂປະຕູສ່ອງເບິ່ງຈຶ່ງ ໄດ້ເຫັນໜ້າທ້າວ, ເຮັດໃຫ້ຈິດໃຈຂອງນາງຫລົງ ໄຫລໃນຕົວຂອງທ້າວ. ດັ່ງນັ້ນນາງຈຶ່ງສັ່ງໃຫ້ເຂົ້າ ໄຂປະຕູເປີດຮັບທ້າວພ້ອມທັງ ຈັດຫາຂັນໝາກມາຮັບຕ້ອນທ້າວ, ຝ່າຍນາງອົ້ວກໍພັດແປ້ງແຕ່ງຕົວຢ່າງວິດງາມປະດັບເອ້ຍ້ອງ ໄປດ້ວຍແຫວນໃສ່ກ້ອຍສ້ອຍໃສ່ຄໍແລະເຄື່ອງສີ້ວານອື່ນໆ.

ຕໍ່ມານາງອົ້ວກໍ ໄດ້ຫລຽນອອກມາຫາທ້າວຂຸນລູ, ເມື່ອມາເຖິງນາງກໍ ກົ້ມຂາບທ້າວ ພ້ອມທັງຖາມຂ່າວວ່າ ມາດີລີຈອມກະສັດເຈົ້າບາຄານຜູ້ປະເສີດເຈົ້າ ໄດ້ອົດສາຂ້າມດົງຂ້າມປ່າມາຫານ້ອງເທື່ອນີ້, ສ່ວນວ່າພໍ່ແມ່ຂອງ ອ້າຍກໍຍັງຢູ່ສຸກສະບາຍຢູ່ບໍ? ທ້າວຂຸນລູຈຶ່ງບອກກັບນາງວ່າ ພໍ່ຂອງທ້າວ ໄດ້ ລົ້ມເສຍຫາຍຕາຍເສຍຈາກສີ້ກັບພໍ່ຂອງນາງນັ້ນແລ້ວ, ດຽວນີ້ແຕ່ແມ່ຜູ້ ດຽວເປັນຜູ້ປົກຄອງບ້ານເມືອງ, ສຳລັບຕົວຂອງທ້າວເອງກໍຍັງບໍ່ທັນມີຊູ້ມີເມຍມາເປັນຄູ່, ດັ່ງນັ້ນຈຶ່ງ ໄດ້ດັ້ນດົງດັ້ນປ່າມາທ່ຽວຊອກຫາຄູ່ຫາຄີນນ້ອງເອີຍ, ເມື່ອມາພໍ້ນ້ອງຈຶ່ງຢາກຂໍຖາມຂ່າວຖາມຄາວພໍໃຫ້ຮູ້ກົກປາຍສາຍເຫດແລ້ວກໍ ຈະ

ລາກັບ ເມື່ອນາງອົ້ວ ຈຶ່ງຕອບທ້າວວ່າ ນ້ອງບໍ່ມີຊູ້ມີຜົວທາງໃດ, ຄົນຄືນ້ອງ ບໍ່ ມີໃພຢາກໄດ້ເປັນເມຍດອກອ້າຍເອີຍ. ພ້ອມກັນນັ້ນນາງກໍໄດ້ກ່າວຂໍໂທດ ນຳ ທ້າວຊຸນລູ ຕອນນັ້ນມາເຖິງທີ່ພາສາດຂອງນາງທຳອິດທີ່ນາງບໍ່ໄດ້ອອກ ມາ ຕ້ອນມາຮັບ ເພາະວ່ານາງຍັງພ່ຳເພັງພາວະນາຢູ່ໃນຫ້ອງ. ທ້າວຊຸນລູໄດ້ຟັງ ດັ່ງນັ້ນຈຶ່ງຕອບເປັນການສຽດສີວ່ານ້ອງຫາກຖະແຫລງແປວາດຊຶ່ງ ນ ແຫລະ ສ່ວນອ້າຍນັ້ນແມ່ນດັ້ນດອນຄອນປ່າມາຫາໜາຍາະຂໍມອບຄວາມຮັກກັບ ນ້ອງແຕ່ວ່າບຸນວາດສະໜາຂອງອ້າຍຢ້ານບໍ່ສົມແນວນາມນ້ອງນະມີ ໂຊ ເຮືອງຮຸ່ງນັ້ນແຫລະ ຄັນວ່າເອົາອ້າຍເປັນຄູ່ກໍຈະເຮັດໃຫ້ນ້ອງອັບອາຍຂາຍ ໜ້າລ້າງນາງອົ້ວຈຶ່ງກ່າວຂໍໂທດຂໍອະໄພຈາກທ້າວຕື່ມອີກເພາະວ່າຄຳປາກ ຂອງນາງມີບາງອັນບໍ່ຄັກບໍ່ແນ່ເພາະບໍ່ຄ່ອງບໍ່ເຄີຍ. ທ້າວຊຸນລູຈຶ່ງຕອບ ນາງ ດັ່ງບົດກອນຂຽນວ່າ:

ຍາມນັ້ນຍາດານທ້າວ　　ຖະແຫລງຄຳນ້ອມໜ່ຽວ
ຄັນວ່າເຈົ້າບໍ່ມີຊູ້ຊອນ　　ທຽມຂ້າງຜ່າງສອງ
ພີ່ຈັກແປງທາງຂ້ອມ　　ພະຍົນຍັງເກາະກ່າຍ
ນ້ອງຍັງຈັກແປງຊ່ອຍອ້າຍ　　ທາງພົ້ງໃດ ອຸ່ນເອີຍ

ຝ່າຍນາງອົ້ວຈຶ່ງບອກວ່າຈິດໃຈຂອງນາງຂໍຜູກສຳພັນຮັກກັບທ້າວພຽງ ຜູ້ ດຽວ, ຢ້ານແຕ່ທ້າວຫາກມີຄູ່ກ່ອນແລ້ວ. ນາງເອງບໍ່ຢາກໄປຕົກນາຮົກອະເວ ຈີຫລືວ່າສ້າງບາບສ້າງກຳແນວໃດ, ທ້າວຊຸນລູຈຶ່ງໄດ້ໃຫ້ຄຳໝັ້ນສັນຍາ ກັບ ນາງວ່າ ທຸກຄຳທີ່ທ້າວເວົ້າແລ້ວນັ້ນລ້ວນແຕ່ແມ່ນຄວາມຈິງໃຈສັດຊື່ບໍລິ ສຸດ ແທ້ໆ ເມື່ອນາງອົ້ວໄດ້ຍິນດັ່ງນັ້ນຈຶ່ງເວົ້າວ່າ ຖ້າຫາກເປັນຄວາມຈິງແທ້ນາງ ກໍບໍ່ຕັດຮັກຈາກທ້າວໄປໄດ້ ຖືວ່າແມ່ນບຸນບູຮານສົມພານແຕ່ປາງຫລັງ. ທ້າວ ຊຸນລູໄດ້ຟັງກໍມີຄວາມດີໃຈຫາອັນປຽບບໍ່ໄດ້ ຈຶ່ງຫຍັບເຂົ້າໄປຫານາງ ອົ້ວ

ເພື່ອກ້ຽວຮັກກ້ຽວມັກຕາມປະສາຂອງໜຸ່ມສາວ, ແຕ່ນາງອົ້ວ ໄດ້ກ່າວ ຫ້າມທ້າວ ໄວ້ດັ່ງບົດກອນຂຽນວ່າ:

ນາງຄານຕ້ານ ໂລມບາກອຍກ່າວ
ອັນວ່າພະຫີຈັ້ງ ຮຽນຫ້າມຈຶ່ງຟັງ
ຢ່າໄດ້ຫຍັບເຂົ້າໃກ້ ເຫັນບໍ່ກົວຈຽມ ອ້າຍເອີຍ
ພະຫາກກິນເຕັມໃຈ ໝ່າຍສະອາງບໍ່ມີເຕື້ອງ
ຂໍໃຫ້ຈອມຫົວຂ້າ ທິດຮົວເຍື້ອນກ່ອນ
ຢ່າໄດ້ທຳຕື່ນເຕັ້ນ ສະເໜີ້ຄາມດັ່ງໂອງ
ຊາດທີຈິງໃຈເຂົ້າ ທິດຽວອິດກ່ອນ
ອົດແລະເຍື້ອນ ພຸດໂທດເຈົ້າວ່າດີ ອ້າຍເອີຍ
ນ້ອງນີ້ເໝືອນດັ່ງສີກຂາໄມ້ ແຄນທາງກ້ຽງປອດ
ໃຜບໍ່ມີຢ່ອນຢ້ານ ຟັນແລ້ວເລື່ອກາຍ
ເມື່ອນັ້ນຂຸນລູທ້າວ ໂລມນາງນ້ອມໜ່ຽວ
ຄຳປາກນ້ອງ ເຍືອງໃຫ້ແມ່ນຄອງ ພີ່ແລ້ວ
ພົ້ນເໝືອນດັ່ງລົມເປັນບ້າ ຄຳຕາຍບໍ່ຮູ້ເມື່ອ
ແຖມຕື່ມເປັນກໍ່ຟ້າ ເດີນດັ້ນເພິ່ງພາ
ຂໍໃຫ້ຈອມນາງເຍື້ອນ ເປັນທານຢັ້ງຂະໜ່ອມ
ບຸນພີ່ເຈົ້າຈັກຊັກຈ່ອງຂຶ້ນ ເມື່ອຟ້າຮອດພະອິນ
ພົ້ນໝາຍວ່າເອົາພະຂັນຕັ້ງ ສາລາມວນມອບ ນາງເອີຍ
ຢ່າໄດ້ຂັດແຂ່ງໄວ້ ບຸນສ້າງຮ່ວມພະໄມ
ເມື່ອນັ້ນນາງໄຂຂໍ້ ຄຳສະເໜີທ້າຍຸ້ມກ່າວ
ນ້ອງນີ້ເປັນຍິງນ້ອຍ ໃນທຳບໍ່ຮູ້ຊ່ອງ ອີສັ້ງແລ້ວ

ຍິນແຕ່ທຳກ່າວໄວ້ ສິງເຈົ້າເທສະໜາ
ມີແຕ່ກິນທານສ້າງ ພາວະນາຫົດບວດ
ໂພຊະນະເຂົ້າ ຂອງຕ້ອນທອດທານ
ບຸນນຳຂຶ້ນ ເມືອສະຫວັນບໍ່ມີຂາດ
ເພິ່ນວ່າທານທີ່ມີແລະກັ້ນ ບຸນຊິຍູ້ກໍ່ບໍ່ມີ ເຈົ້າເອີຍ

ເມື່ອທ້າວຂຸນລູໄດ້ຟັງນາງກ່າວທ້ານດັ່ງນັ້ນແລ້ວຈຶ່ງໄດ້ໂອ້ລົມນຳນາງຕື່ມ ດັ່ງບົດກອນຂຽນວ່າ:

ເມື່ອນັ້ນບາຄານແກ້ ຄຳນາງເກາະກ່ຽວ
ເພິ່ນກໍ່ຂັນຍັດໄວ້ ຫລາຍຍັ້ນບ່ອນປັນ ເຈົ້າເອີຍ
ຊື່ວ່າໃຈໃສສື່ ເປັນທານອັນປະເສີດ ຈິງແລ້ວ
ບຸນຫາກຄາດແຕ່ຟ້າ ແສນຊິເວັ້ນກໍ່ຫາກພານ ເຈົ້າເອີຍ

ຄືນນີ້ທັງສອງໄດ້ຫລັບນອນຮ່ວມກັນ ຈົນເຖິງເວລາໄກ່ຂັນ. ທ້າວຂຸນລູຈຶ່ງໄດ້ສັ່ງລານາງອົ້ວ, ທ້າວກ່າວວ່າ ເຖິງແມ່ນຈະໄດ້ພັດພາກຈາກນາງໄປ ກໍ່ຕາມແຕ່ຈະຫມັ່ນທຽວມາຢື້ຢາມ ແລະພັດໝາຍເອົາໄວ້ວ່າອີກ 3 ເດືອນຈະຍົກຂັນໝາກມາຂໍໂອມນາງຕາມຮີດຄອງປະເພນີ, ນ້ອງຢ່າໃຫ້ເສຍ ຄວາມຫວັງຂອງອ້າຍເປັນເດັດຂາດ. ນາງອົ້ວຈຶ່ງຕອບທ້າວວ່າຂໍໃຫ້ເມືອດີມີໂຊກ ເມືອຮອດເມຍແລ້ວຢ່າລືມນ້ອງຜູ້ຄອງຄອຍຢູ່ທາງພີ້ ເດີໃຫ້ຫມັ່ນໄປຫມັ່ນ ມາແນ່. ເວົ້າແລ້ວນາງກໍ່ຍົກຂັນໝາກຂັນພູໃຫ້ທ້າວຄຽວ.

ເມື່ອລານາງອົ້ວແລ້ວ ທ້າວຂຸນລູກໍ່ໄປລາຍັງພະນາງທອງສີແມ່ຂອງນາງອົ້ວ, ແມ່ຂອງນາງອົ້ວກໍ່ໄດ້ອວຍໄຊໃຫ້ພອນທ້າວຈຶ່ງກັບຄືນເມືອງໂດຍຄວາມປອດໄພສະຫວັດດີ, ພ້ອມກັນນີ້ກໍ່ໄດ້ເອົາຂອງຝາກຂອງຕ້ອນມອບໃຫ້ແກ່ທ້າວ ແລະສັ່ງຄວາມຢື້ຢາມຖາມຂ່າວຫາແມ່ຂອງທ້າວຂຸນລູ, ຜູ້ເປັນພະສະຫາຍຮັກ

ນຳພ້ອມ ທັງເວົ້າກັບທ້າວຂຸນລູວ່າ ເມື່ອກັບໄປແລ້ວກໍຢ່າໄດ້ລືມສອງແມ່ລູກຢູ່ທາງພີ້ ໃຫ້ໝັ່ນມາຢາມແນ່ທ້າວເດີຍ.

ລາແມ່ຂອງນາງອົ້ວແລ້ວ ທ້າວກໍກັບໄປສູ່ສະໜາມພັກເຊົ່າ, ຕໍ່ມາກໍ ຂຶ້ນຂີ່ມ້າອອກເດີນທາງກັບຄືນເມືອງຂອງຕົນດ້ວຍຄວາມອາໄລອາວອນ ເຖິງນາງອົ້ວ, ຕະຫລອດເສັ້ນທາງຈາກເມືອງນະຄອນກາຍສູ່ເມືອງກາສີທ້າວໄດ້ຟັງສຽງສັດນານາຊະນິດຮ່ຳຮ້ອງເຮັດໃຫ້ຈິດໃຈອ່ອນທັງພ່ອງລຳພຶງລຳພັນເຖິງນາງອົ້ວບໍ່ຂາດສົບຂາດປາກ. ເມື່ອກັບເຖິງຜາສາດແລ້ວແມ່ຂອງ ທ້າວກໍມາຮັບຕ້ອນ ພ້ອມທັງຖາມຂ່າວຫາແມ່ຂອງນາງອົ້ວວ່າຍັງຢູ່ດີມີແຮງຢູ່ ບໍ ທ້າວຂຸນລູກໍໄດ້ເລົ່າສະພາບທາງເມືອງນະຄອນກາຍສູ່ແມ່ຟັງຕັ້ງແຕ່ຕົ້ນ ຈົນສຸດປາຍ.

## 4. ກ່າວເຖິງທ້າວຂຸນລາງ.

ທ້າວຂຸນລາງ ເປັນຜູ້ປົກຄອງ ເມືອງແຫ່ງໜຶ່ງຢູ່ທາງ ເຂດພູດອຍ, ທ້າວ ຂຸນລາງ ໄດ້ຫລົງ ໄຫລໃນຄວາມງາມຂອງນາງອົ້ວ, ຢາກຈະ ໄດ້ນາງອົ້ວ ມາ ເປັນເມຍ. ດັ່ງນັ້ນ, ທ້າວຂຸນລາງຈຶ່ງສັ່ງ ໃຫ້ເຂົາຫາ ເອົາຊິ້ນປູປາ, ຫົວ ເຜືອກ ຫົວມັນໝາກອຶໝາກແຕງມາສົ່ງໃຫ້ແມ່ຂອງນາງອົ້ວບໍ່ຂາດຈັກມື້ເລີຍ. ສ່ວນ ວ່າແມ່ຂອງນາງອົ້ວກໍ່ມີຄວາມຊົມຊື່ນຍິນດີທີ່ໄດ້ກິນອາຫານບໍ່ຂາດບໍ່ເຂີນແລະ ເກີດມີຄວາມຮັກແພງອິດູສົງສານຕໍ່ທ້າວຂຸນລາງ.

ຕໍ່ມາທ້າວຂຸນລາງຈຶ່ງສັ່ງ ໃຫ້ເຂົາຈັດຫາ ເຂົ້າຂອງ ເງິນຄຳພ້ອມທັງ ຂ້ອຍ ຂ້າຍິງຊາຍ, ແລ້ວ ຍົກຂະບວນ ໄປສູ່ຂໍນາງອົ້ວນຳພະນາງທອງສີຜູ້ເປັນແມ່ດັ່ງ ບົດກອນຂຽນວ່າ:

ບັດນີ້ຈັກກ່າວ ເຖິງຂຸນລາງຜູ້ ປະສົງນາງອົ້ວຄ່ຽມ
ມັນກໍຈັດເຄື່ອງໄດ້ ໂອມອົ້ວໜໍ່ເມືອງ
ມີທັງເງິນດີໄດ້ ພໍປະມານຮ້ອຍໜຶ່ງ
ຄຳເຂັ້ມໄດ້ ດູ້ຄານຮອດພັນ
ອັນໜຶ່ງຂ້າຊ່ວງໃຊ້ ສາມຄູ່ຍິງຊາຍ
ກັບທັງແຫວນທຳມະໂຮງ ຄູ່ກັ້ນພໍຮອຍ
ຈຳໃຫ້ແສນເງິນພ້ອມ ແສນຄຳລົບເຄື່ອງ

ຝູງໄພ່ໄດ້ ພ້ຣອຍຫລັ່ງນຳ
ເຂົາກໍຮີບໆເຂົ້າ ເມືອງກາຍໂດຍລະດາດ
ຫ້າມີ້ໄດ້ ເຖິງກ້ຳແມ່ເມືອງ
ເຂົາກໍເອົາກັນເຂົ້າ ສະໜາມໄຊເຊົາຈອດ
ຕົກແຕ່ງແລ້ວ ເມືອເຝົ້າແມ່ເມືອງ
ແສນເງິນພ້ອມ ແສນຄຳທີງເຄື່ອງ
ຂົນເຄື່ອງເຂົ້າ ເຖິງເຈົ້າຂາບທູນ
ບັດນີ້ຂຸນລາງເຈົ້າ ຈອມຫົວພະບາດ ພາຍພຸ້ນ
ນຳເອົາຂອງຝາກເຂົ້າ ຂໍນ້ອຍໜໍ່ເມືອງ
ຂໍແກ່ຈອມຫົວເຈົ້າ ກູນາຜາຍໂຜດ ປາງນີ້
ຂໍໃຫ້ເກາະກ່ຽວເຂົ້າ ຂົວແກ້ວແຜ່ນດຽວ ແນ້ນໜອມ

ແສນເງິນແສນຄຳໄດ້ຂາບທູນຕື່ມວ່າ ເຂົ້າຂອງເງິນຄຳແກ້ວແຫວນຕ່າງ ຕ່າງທີ່ນຳມາພ້ອມນີ້ ເປັນພຽງສ່ວນໜຶ່ງທີ່ນັ້ນຍັງມີຢູ່ອີກມາກມາຍຫລາຍກອງ ເມື່ອແມ່ຂອງນາງອົ້ວ ໄດ້ຮູ້ດັ່ງນັ້ນຈຶ່ງບອກກັບ ເຂົາວ່າ ເລື່ອງນີ້ຈະບໍ່ຂັດຂວາງ ຄວາມປະສົງຂອງທ້າວຂຸນລາງແຕ່ຢ່າງໃດ, ແຕ່ຫາກຈະຂໍ ເວລາໂອລົມ ກັບ ນາງອົ້ວ ເບິ່ງກ່ອນແລະຈະພະຍາຍາມນ້ອມນ່ຽວນາງອົ້ວໃຫ້ຕົກລົງປົງ ໃຈ ເປັນຄູ່ກັບທ້າວຂຸນລາງຈົນໄດ້. ຝ່າຍແສນເງິນແສນຄຳໄດ້ຟັງດັ່ງນັ້ນກໍ ມີ ຄວາມຊົມຊື່ນຍິນດີຈຶ່ງພ້ອມກັນຂາບລາກັບ ໄປສູ່ສະໜາມພ່ອນພັກເຊົາ. ດ້ວຍ ຄວາມດີອົກດີໃຈທີ່ຈະ ໄດ້ນາງອົ້ວ ໄປເປັນຄູ່ທ້າວຂຸນລາງຜູ້ເປັນນາຍ ຂອງ ພວກຕົນ, ດັ່ງນັ້ນຈຶ່ງພາກັນມ່ວນຊື່ນຢາຍເຫລົ້າຢາຍຢາກິນກັນຢ່າງຄຶກຄື້ນສະ ໜຸກສະໜານ.

ຕໍ່ມາແມ່ຂອງນາງອົ້ວກໍສັ່ງໃຫ້ນາງອົ້ວເຂົ້າໄປຫາ, ເມື່ອນາງອົ້ວເຂົ້າໄປ

ຫາແລ້ວແມ່ຈຶ່ງໂລມກັບນາງວ່າລູກຈົ່ງຟັງແມ່ເອົາໄວ້, ລູກຢ່າໄດ້ຂັດໄດ້ ລັງແມ່ເນີ, ບັດນີ້ທ້າວຂຸນລາງໄດ້ນຳເອົາເຂົ້າຂອງເງິນຄຳມາສູ່ຂໍລູກໄປ ເປັນຄູ່ຫຽນສອງ. ເມື່ອນາງອົ້ວໄດ້ຟັງຄຳແມ່ບອກດັ່ງນັ້ນຈຶ່ງເວົ້າດອມແມ່ວ່າເຮົາແມ່ນແນວນາມເຊື້ອທັງເມືອງຍົດຍິ່ງ ເປັນຫຍັງແມ່ຈຶ່ງຈະໃຫ້ລູກຕົກ ເປັນເມຍຂອງທ້າວຂຸນລາງ ດັ່ງບົດກອນຂຽນວ່າ:

ເຮົານີ້ປຽບດັ່ງຈັນເພັງແຈ້ງ ເອົາລາຫູຊັກປຽບ ເປັນລີ
ນັ້ນມີ້ສູນລັບເຂົ້າ ບໍ່ມີຮູ່ງເຮືອງ
ອັນໜຶ່ງມະນີໂຊແກ້ວ ເຮືອງແສງໃສສ່ອງ
ລີຈັກເອົານ້ຳກຽງ ໂລມໄວ້ທ່ອນເປັນ ແມ່ເອີຍ
ດີທໍ່ຫາຄຳໄດ້ ມາພັນຕຸ້ມທໍ່
ມັນຈັກໃສສ່ອງແຈ້ງ ກວມພື້ນໂລກລີ ແມ່ເອີຍ

ນາງອົ້ວບອກກັບແມ່ຕື່ມວ່າ ຖ້າຫາກແມ່ບັງຄັບໃຫ້ນາງເອົາກັບທ້າວ ຂຸນລາງນັ້ນ ນາງຈະຕ້ອງຕາຍ, ຜູ້ເປັນແມ່ຈຶ່ງຮ້າຍດ່ານາງວ່າເປັນຄົນບໍ່ຮູ້ ບຸນຄຸນທ່ານລ້ຽງມາພາໃຫຍ່ອັນວ່າງົວຄວາຍສັດສາວາສິ່ງເອົາມາເຝິກມາແອບມັນກໍຍັງຮູ້ບຸນຄຸນ. ທ້າວຂຸນລາງນັ້ນກໍຂັນອາສາມາລ້ຽງມາເກືອບໍ່ໃຫ້ ຂາດໃຫ້ເຂີນແລງງາຍອັນໃດ, ມຶງບໍ່ຕ້ອງມາອວດອ້າງອັນໃດກັບກູດອກ. ເມື່ອໄດ້ຟັງຄຳດ່າຄຳປ້ອຍຂອງແມ່ຄືແນວນັ້ນນາງອົ້ວຈຶ່ງລາແມ່ກັບຄືນໄປສູ່ຜາ ສາດຂອງນາງດ້ວຍຫົວໃຈທີ່ບໍ່ເປັນສຸກ.

ພວກແສນເງິນແສນຄຳທີ່ທ້າວຂຸນລາງໃຫ້ນຳເອົາເຂົ້າຂອງເງິນຄຳ ມາສູ່ຂໍນາງອົ້ວນັ້ນ ໄດ້ພາກັນຂຶ້ນໄປຂາບອຳລາແມ່ຂອງນາງອົ້ວ ພ້ອມທັງ ຮັບເອົາຄຳຕອບຈາກແມ່ຂອງນາງອົ້ວເມື່ອແຈ້ງໃຫ້ທ້າວຂຸນລາງໄດ້ຮູ້. ແມ່ຂອງນາງອົ້ວໄດ້ບອກກັບພວກເຂົາວ່າ ດຽວນີ້ນາງອົ້ວຍັງບໍ່ທັນຕົກລົງຮັບ ປາກ

ເທື່ອ. ແຕ່ແນວໃດກໍຕາມຈະພະຍາຍາມໃຫ້ທັງສອງໄດ້ເປັນຄູ່ກັນ, ດັ່ງ ນັ້ນຂໍ ໃຫ້ກັບໄປບອກກັບທ້າວຂຸນລາງວ່າບໍ່ຕ້ອງນ້ອຍເນື້ອຕ່ຳໃຈແນວໃດ, ເມືອ ແສນເງິນແສນຄຳກັບເຖິງເມືອງຈຶ່ງໄດ້ເລົ່າເລື່ອງທັງຫມົດສູ່ທ້າວຂຸນ ລາງ ຟັງ, ທ້າວຂຸນລາງກໍມີຄວາມປິຕິຊົມຊື່ນຈຶ່ງສັ່ງໃຫ້ເຂົາຈັດຫາອາຫານການກິນ ໄປສົ່ງໃຫ້ແມ່ຂອງນາງອົ້ວບໍ່ຂາດສາຍ.

# 5. ທ້າວຂຸນລູຍົກຂະບວນ ໄປໂອມນາງອົ້ວ.

ນັບແຕ່ທ້າວຂຸນລູໄດ້ລັກເຂົ້າໄປພົບກັບນາງອົ້ວໃນຄືນນັ້ນ, ເມື່ອ ກັບເຖິງເມືອງຂອງຕົນກໍຍັງຄຶດຮອດຫານາງບໍ່ເລີກບໍ່ແລ້ວ. ດັ່ງນັ້ນທ້າວຈຶ່ງໄດ້ ເວົ້ານຳຜູ້ເປັນແມ່ວ່າຈະໄປສູ່ຂໍເອົານາງອົ້ວຄ່ຽມມາເປັນຄູ່ຮຽງໝອນຊ້ອນເສື່ອກັບຕົນ, ຜູ້ເປັນແມ່ໄດ້ຟັງທ້າວເວົ້ານຳຄືແນວນັ້ນກໍມີຄວາມປິຕິຍິນດີດອມ ລູກຊາຍທຸກປະການ.

ຕໍ່ມາແມ່ຂອງທ້າວຂຸນລູຈຶ່ງສັ່ງໃຫ້ຂຸນສິມ, ຂຸນທອງແລະເສນາອາມາດທຸກໝູ່ເຂົ້າເຝົ້າແລ້ວບອກໃຫ້ຮູ້ວ່າ ດຽວນີ້ທ້າວຂຸນລູມີຄວາມປະສົງຢາກ ໄດ້ນາງອົ້ວຄ່ຽມມາເປັນຄູ່, ໃຫ້ພວກທ່ານທັງຫລາຍຕະກຽມເຄື່ອງຂອງ ອອກເດີນທາງໄປໂອມນາງອົ້ວຄ່ຽມໃຫ້ທ້າວ, ເມື່ອຂຸນທັງຫລາຍໄດ້ຟັງດັ່ງນັ້ນ ກໍຟ້າວຈັດແຈ່ງເຂົ້າຂອງເງິນຄຳດັ່ງບົດກອນຂຽນວ່າ:

ເມື່ອນັ້ນ ຂຸນກໍໂດຍຄຳເຈົ້າ ຍິນດີຊົມຊື່ນ
ເຂົາກໍຈັດແຈ່ງໄດ້ ຄຳແກ້ວມາກມູນ
ເງິນດີໄດ້ ສິນພໍພຽງຫາບ
ຄຳເຂັ້ມໄດ້ ດູ້ຄານສີພັນ
ອັນໜຶ່ງທຳມະໂຮງແກ້ວ ພໍສິນຮ້ອຍຄູ່
ມ້າເທບໄດ້ ດູ້ຄານແປດຕົວ

ມີທັງແຮຄຳພ້າ ກາສາຫລາຍສິ່ງ
ກັບທັງຂ້ອຍຊ່ວງໃຊ້ ມີພ້ອມຄູ່ກັນ
ຈຳໃຫ້ພູ້ ມີພະຫຍາຕຸ້ມໄພ່
ກັບທັງຂຸນໃຫ່ຍຜູ້ ຂຸນທ້າວຄູ່ກັນ
ຈັດເອົາໄດ້ ຊາວເມືອງຮ້ອຍເສດ
ຂົນສິ່ງໃຫ້ ຂອງທ້າວມາກມູນ
ຂຸນກໍທຶງລົວແລ້ວ ອວນທາງຍ້າຍຍ່າງ
ສຽງທຶ່ງກ໊ອ ປາຍໄມ້ປ່າພົງ ເຈົ້າເອີຍ

ຂຸນຜູ້ໃຫ່ຍໄດ້ນຳພາຂະບວນອອກເດີນທາງຈາກເມືອງກາສີໄປສູ່ນະຄອນກາຍທ່ານກາງສຽງສັດນານາຊະນິດຮ່ຳຮ້ອງຕາມສອງຝາກທາງຟັງ ແລ້ວເປັນຕາໜ້າອອນຊອນໃຈຫາອັນປຽບບໍ່ໄດ້ມີທັງສຽງນົກໂກນໂດກຮ້ອງທາຊູ້ເຫັນທັງດອກໄມ້ນານາພັນທີ່ພວມເບັງບານສົ່ງກິ່ນອັນຫອມຫວນ, ການ ເດີນທາງໃຊ້ເວລາຢູ່ຫລາຍມື້ຈຶ່ງໄປເຖິງນະຄອນກາຍເມືອງຂອງນາງອົ້ວ, ເມື່ອໄປເຖິງກໍພາກັນພັກເຊົາຢູ່ສາລາສະໜາມຫລວງ, ຕໍ່ມາຂຸນຜູ້ໃຫ່ຍຈຶ່ງ ຜັດປ່ຽນເຄື່ອງນຸ່ງ ມີແຫວນທຳມະໂຮງສຸບໃສ່ມືດີແລ້ວ ກໍເຂົ້າໄປເຝົ້າພະນາງຄຳພັນແມ່ຂອງນາງອົ້ວ, ຂຸນຈຶ່ງກ່າວຄຳຖາມຂ່າວສຸກທຸກຈຶ່ງແມ່ຂອງທ້າວຂຸນລູຝາກມາຢື້ຢາມຖາມຂ່າວພະສະຫາຍທາງພໍ້, ພ້ອມກັນນີ້ຂຸນກໍໄດ້ແຈ້ງຈຸດປະສົງໃນການເດີນທາງມາຫາເທື່ອນີ້ວ່າ ຂຸນລູທ້າວຈອມທິວພະບາດພາຍ ພຸ້ນຄິດໄຄ່ໄດ້ຈອມສ້ອຍນຶ່ງເມືອງ. ດັ່ງນັ້ນແມ່ຂອງທ້າວຂຸນລູຈຶ່ງຈຳໃຫ້ພວກເຖີນນຳບັນນາການມາມອບໃຫ້ ຂໍຈຶ່ງໄດ້ກູນາໂຜດຜາຍຝູງຂ້າທັງຫລາຍແດ່ເທີ້ນຂໍໃຫ້ເກາະກ່າຍຫ້ວງເປັນເຜົ່າປ່ຽງດຽວ ຝູງຂ້າຂໍສຸກຍ້ອນສົມພານພູ ວະນາດຂໍຈຶ່ງໂຜດຂ້ານ້ອຍປານນີ້ເທື່ອດຽວ.

ຝ່າຍພະນາງທອງສີແມ່ຂອງນາງອົ້ວ ໄດ້ຮູ້ຈຸດປະສົງຂອງຂຸນທີ່ເຂົ້າ ເຝົ້າ ຈຶ່ງເວົ້າດ້ວຍຄວາມນິ້ມນວນອ່ອນຫວານວ່າ ຂອບໃຈທີ່ພະສະຫາຍທາງ ພຸ້ນ ພ້ອມດ້ວຍຂຸນລູທ້າວທີ່ໄດ້ແຕ່ງຕັ້ງພວກທ່ານມາຂໍໂອມນາງອົ້ວລູກສາວ ຂອງ ເຮົາ, ແຕ່ວ່າເຮົາເອງໄດ້ຕົກລົງຮັບການໂອມການຂໍຂອງທ້າວຂຸນລາງກ່ອນ ແລ້ວ ຂໍໃຫ້ພວກທ່ານທັງຫລາຍກັບຄືນໄປຄອບສະຫາຍຂອງເຮົາວ່າ. ເຂົາ ໄດ້ເອົາໄປກ່ອນແລ້ວ. ຂຸນສິມແລະຂຸນທອງໄດ້ຟັງດັ່ງນັ້ນກໍປາກບໍ່ໄດ້ ຈຶ່ງ ຂາບລາແມ່ຂອງນາງອົ້ວ ກັບສູ່ທີ່ພັກເຊົາແລ້ວກໍອວນໝູ່ເສນາທັງຫລາຍພາ ກັນກັບຄືນສູ່ເມືອງກາສີຂອງເກົ່າ ແລ້ວຂຶ້ນລາຍງານຕໍ່ພະນາງຄຳພັນ ແມ່ ຂອງທ້າວຂຸນລູ.

ພະນາງຄຳພັນໄດ້ຟັງຂຸນກ່າວລາຍງານຕັ້ງແຕ່ຕົ້ນສຸດປາຍກໍມີຄວາມ ກິ້ວ ໂກດໂກທາວ່າພະນາງທອງສີຜູ້ເປັນພະສະຫາຍລືມຄຳໝັ້ນສັນຍາແຕ່ ກ່ອນ ຊຶ່ງທັງສອງໄດ້ລົງໄປອາບນ້ຳສະຫົວພ້ອມກັນ ແລ້ວ ໄຫວ້ວອນເຖິງພະອິນວ່າ ເມື່ອໃດຫາກມີລູກເກີດມາເປັນຊາຍ-ຍິງຈະຕ້ອງແຕ່ງແປງໃຫ້ເຂົາເປັນ ຄູ່ ຜົວເມັຍກັນ. ບັດນີ້ເປັນຫຍັງຈຶ່ງມາລືມຖິ້ມຄຳສັນຍາສາບານອັນນັ້ນ, ແນວ ໃດກໍຕາມພະນາງຄຳພັນໄດ້ບອກກັບຂຸນທີ່ເຂົ້າເຝົ້າລາຍງານວ່າເຮົາ ຈັກ ເຕົ້າໝູ້ຊ້າງໂອມອົ້ວຕໍ່ກັນ, ພະນາງບອກວ່າຈະໄປພະນັນຫລິ້ນສາຄອນເຕົ້າ ຂ່ວງໃຈ້ໃຫ້ແມ່ນ້ອນເມືອຟ້າເບິ່ງແນນ ຄັນວ່າກົກແນນກ້ຽວຊິຂໍໂອມເປັນຄູ່ ກັນມາ.

ເວົ້າແລ້ວກໍສັ່ງໃຫ້ຂຸນໄປຈັດແຈ່ງຕາມທີ່ໄດ້ສັ່ງທຸກປະການ, ຂຸນຈຶ່ງ ຟ້າວ ໄປຈັດແຈ່ງຮີບໂຮມເປັນການດ່ວນຈີ່ນວ່າເມືອງກາສີຟື້ນເຟືອນໄປທົ່ວ, ຫລັງ ຈາກຂຸນໄດ້ຫາງຫາກະກຽມເປັນທີ່ຮຽບຮ້ອຍແລ້ວ ຊຶ່ງມີທັງມ້າຕົວດີ, ຊ້າງ ເຜືອກງານິນສຳລັບໃຫ້ແມ່ເມືອງແລະທ້າວໄດ້ຂີ່, ມີທັງສາວຂ່ວງໃຈ້ໄດ້ ປະ

ມານພັນກ່ວາ ຕົກແຕ່ງໄວ້ຄອງຖ້າພະຍອດເມືອງ.

ເມື່ອໄດ້ເລີກງານຍາມດີເຂົາກໍທູນພະນາງຄຳພັນໃຫ້ນຳໜ້າພາທາງຍົກຂະບວນໄປສູ່ເມືອງນະຄອນກາຍອີກເທື່ອໜຶ່ງເພື່ອຂໍໂອມນາງອົ້ວ, ກ່ອນຈະອອກເດີນທາງພະນາງຄຳພັນກໍສັ່ງໃຫ້ຂຸນເອກເປັນຜູ້ຢູ່ຮັກສາເມືອງຖ້າຫລັງ ຈາກນັ້ນກໍພາຂະບວນອອກເດີນທາງຈຶ່ງເປັນຂະບວນໃຫຍ່ທີ່ຄັບຄາ. ໜາແໜ້ນ, ການເດີນທາງໄປເທື່ອນີ້ທ້າວຂຸນລູມີຄວາມອົບອຸ່ນໃຈຫລາຍ ເພາະວ່າມີແມ່ເປັນຜູ້ນຳໜ້າ ເພື່ອຂໍໂອມນາງອົ້ວ. ການເດີນທາງໄປທ່າມກາງ ພູຜາປ່າໄມ້ແລະສຽງນົກຮ້ອງພ້ອງບິນເຈີດເຈີ້ຍໄປມານັບເປັນເວລາຫລາຍມື້ຈຶ່ງໄປເຖິງເຂດດ່ານນະຄອນກາຍແລ້ວກໍພາຂະບວນພັກເຊົາໃນຂະນະທີ່ພັກເຊົາຢູ່ນີ້ຄົນຂອງທ້າວຂຸນລາງທີ່ຢູ່ໃນນະຄອນກາຍກໍຟ້າວມາ ໄຕ່ຖາມກັບ ຂຸນສິນວ່າ ພວກທ່ານເຕົ້າໂຮມໄພ່ຟ້າເປັນຂະບວນອັນໃຫຍ່ໂຕມານີ້ດ້ວຍ ເຫດປະການໃດດີ? ຂຸນສິນຈຶ່ງບອກວ່າດຽວນີ້ພະແມ່ເຈົ້າທັງທ້າວລ່ວງມາຄືໄດ້ມາຢາມເຈົ້າສະຫາຍແພງເຈົ້າສ່ຽວທາງພີ້. ເມື່ອຂຸນຂອງທ້າວຂຸນ ລາງໄດ້ຟັງດັ່ງນັ້ນຈຶ່ງບອກວ່າໃຫ້ພັກເຊົາລໍຖ້າຢູ່ນີ້ຈະກັບໄປຂາບທູນໃຫ້ແມ່ເມືອງຮູ້ເສຍກ່ອນ, ວ່າແລ້ວກໍຂີ່ມ້າເດີນທາງກັບເປັນເວລາ 3 ວັນຈຶ່ງໄປ ຮອດແລ້ວກໍຂຶ້ນຂາບທູນໃຫ້ພະນາງທອງສີຜູ້ເປັນແມ່ເມືອງໄດ້ຮູ້ວ່າດຽວນີ້ ທາງເມືອງກາສີໄດ້ນຳຂະບວນບ່າວໄພ່ເສນາອາມາດແລະຂະບວນຊ້າງຂະບວນມ້າມາເຖິງຊາຍແດນຂອງເມືອງ ເມື່ອວ່າຈະມາໂຈມຕີເມືອງນະຄອນ ກາຍຂອງເຮົາ.

ຝ່າຍພະນາງທອງສີໄດ້ຟັງດັ່ງນັ້ນກໍມີຄວາມກິ້ວໂກດໂກທາຂຶ້ນທັນທີ ຈຶ່ງຟ້າວຕີກອງເປັນການຮຽກໂຮມເສນາອາມາດທັງຫລາຍທັງປວງໃຫ້ ເຂົ້າເຝົ້າໂດຍດ່ວນ, ເມື່ອພວກຂຸນທັງຫລາຍເຂົ້າເຝົ້າຈຶ່ງເວົ້າກັບຂຸນທັງ ຫລາຍ

ດັ່ງບົດກອນຂຽນວ່າ:

ເມື່ອນັ້ນນາງເມືອງຕານ ຂຸນແຂງຈັດເສັ່ງ
ເຂົາວ່າເສິກທ່ານທ້າວ ກາສົ້ນພຸ້ນຫລັ່ງມາ
ດຽວນີ້ມາເຖິງກັ້ ແດນເມືອງປາຍດ່ານ ເຮົາແລ້ວ
ເຈົ້າຢ່າຊ້າ ໄປຕ້ອນຕໍ່ຕາວ ໄວເໜັ້ນ
ເມື່ອນັ້ນຂຸນແຂງໄດ້ ຍິນຄຳຟ້າວຟັ່ງ
ຈັດຄູ່ກັ້ ໂຮມໄດ້ມາກມູນ
ອັນໜຶ່ງຈຶ່ງໃຫ້ໄປທັນທ້າວ ຂຸນລາງຈັດໄພ່
ປັດຂອດເຂົ້າ ມາຕັ້ງແຕ່ງການ ໄວດີ
ແຕ່ນັ້ນຮົມງຂ້າ ເສນາພວກໄພ່
ໄຫລຫລັ່ງຊ້າງ ທັງມ້າມາກມູນ
ດາດີໄດ້ ພົນແສນຄາດເຄື່ອງ
ຂຸນໄພ່ພ້ອມ ຈັດໄດ້ສົມພັນ ເຈົ້າເຮີຍ

ພໍໄດ້ເວລາດີມີໂຊກ ພະນາງທອງສີກໍ້ຂຶ້ນຂີ່ຊ້າງເພື່ອການນຳຂະບວນ ອອກເດີນທາງ ໂດຍຈັດໃຫ້ຂຸນພົນກ້າ ເປັນນາຍກອງແລ່ນຍາບງ້າຍ ໄປໜ້າກ່ອນ ນາງຂຸນແພງໃຫ້ລະວັງຂົວພໍໜື່ນຂຸນເພື່ອນໃຫ້ລະວັງຊ້າຍ ໜື່ນປາຍ, ຂຸນລາງໄວ້ມຸງຫລັງແຫນແຫ່ສົມພັນປາຍແປດຮ້ອຍທັນກັ້ງຮົ້ມຄຳ.

ເມື່ອຂະບວນເຄື່ອນໄປເຖິງທົ່ງກ້ວາງໃກ້ເຂດຊາຍແດນເຂົາກໍເຊີນນາງເມືອງຢຸດພັກເຊົາ, ເຂົາເວົ້າວ່າແຕ່ນີ້ໄປຄວນໃຊ້ໃຫ້ຂຸນຂີ່ມາໄປສັງເກດເບິ່ງ ຖ້າຫາກແມ່ນທົວເສິກແທ້ກໍຄວນສົ່ງຂຸນຜູ້ໃຫຍ່ໄປເຈລະຈາເສຍກ່ອນ ເມື່ອພະນາງທອງສີໄດ້ຟັງຂຸນກ່າວແນວນັ້ນຈຶ່ງໃຫ້ລາມະນາດຜູ້ພະຫຍາກ້ວາງທ່ຽວໄປ. ເມື່ອຂຸນຂີ່ມ້າໄປເບິ່ງກໍເຫັນພົນຫລວງຂອງທ້າວຂຸນລູຮັບຄາ

ຫນາແຫນ້ນບາງພ່ອງກໍພາກັນຫລິ້ນມ່ວນສະອອນໃຈມີທັງຜູ້ບ່າວຜູ້ສາວຫລວງຫລາຍພາຍມາກ, ແຕ່ຂຸນກໍເວົ້າກັນແບບອວດສະຫາວ ເສິກສ່ຳນີ້ບໍ່ພໍຊິເສບມືນ້ອຍດອກ.

ເມື່ອຂຸນໄປເຖິງທີ່ພັກ ກໍໄດ້ເຂົ້າໄປຂາບໄຫວ້ຕໍ່ພະນາງຄຳພັນແມ່ ຂອງທ້າວຂຸນລູ ພ້ອມທັງຖາມວ່າການເດີນທາງມາ ເທື່ອນີ້ສຸກສະບາຍດີບໍ ແລະມີຄວາມປະສົງແນວໃດຈຶ່ງນຳພົນມາເຖິງນີ້ ຫລືວ່າຈະມາຍາດແຍ່ງ ເມືອງທາງນີ້? ພະນາງຄຳພັນຈຶ່ງຕອບຂຸນແຫ່ງເມືອງນະຄອນກາຍດ້ວຍ ຄວາມອ່ອນຫວານວ່າ ເຮົາກໍຄຶດໄດ່ເຂົ້າຢາມໄຫ້ແມ່ເມືອງ ອັນໜຶ່ງມາຂໍຫລິ້ນສາຄອນເຕົ້າຂ່ວງໃຊ້ໃຫ້ພົ້ນມື້ນອນເມືອຟ້າ ເບື້ອງແນນ ຄືນວ່າກົກແນນກ້ຽວ ຂໍໂອນເປັນຄູ່ກັນດາຍ ກໍຈຶ່ງເຕົ້າໝູ້ຊາງມານພ້ຳນາມ.

ຂຸນແຫ່ງເມືອງນະຄອນກາຍໄດ້ຟັງດັ່ງນັ້ນ ຈຶ່ງໄດ້ທູນເຊີນໃຫ້ພະນາງຄຳພັນນຳຂະບວນເຂົ້າສູ່ເມືອງນະຄອນກາຍໃນຕອນເຊົ້າມື້ອື່ນ, ຫລັງຈາກ ນັ້ນຂຸນກໍກັບຄືນຫາພະນາງທອງສີ ແລ້ວຂາບທູນໃຫ້ຮູ້ວ່າພວກຕົນໄດ້ໄປສົ່ງ ເກີດເບື້ອງແລ້ວ ເຫັນພົນຫລວງຂອງຝ່າຍເມືອງກາສີມາກມາຍ ຍ່າຍຍາອງມີທັງບ່າວສາວ ເຖົ້າແກ່ພວກຕົນໄດ້ເຂົ້າເຝົ້າພະນາງຄຳພັນຊຶ່ງພະນາງບອກວ່າ ການເດີນທາງມາຄັ້ງນີ້ ມີຈຸດປະສົງມາຢ້ຽມຢາມພະສະຫາຍແຫ່ງນະຄອນ ກາຍ ແລະມາຂໍຫລິ້ນສາຄອນເຕົ້າຂ່ວງໃຊ້ໃຫ້ພົ້ນມື້ນອນເມືອຟ້າ ເບື້ອງແນນ, ຄືນວ່າກົກແນນກ້ຽວຂໍໂອນເປັນຄູ່ ຄືນວ່າຮັກບໍ່ໄດ້ພັນນີ້ກໍຫ່ຽວໂອນ. ເມື່ອແມ່ ຂອງນາງອົ້ວໄດ້ຮູ້ດັ່ງນັ້ນຈຶ່ງກ່າວວ່າ ເອີ້ຖ້າທາກມີແຕ່ທົ່ນັ້ນເຊີນເຂົາເຈົ້າ ເຂົ້າມາສາຂຸນເອີຍ.

ຕໍ່ມາຂະບວນຈາກເມືອງກາສີນຳໂດຍພະນາງຄຳພັນແລະທ້າວຂຸນລູ ກໍເຄື່ອນເຂົ້າສູ່ເມືອງນະຄອນກາຍ ເປັນຂະບວນອັນຍາວຢຽດ, ເມື່ອເຂົ້າໄປ

ຮອດເມືອງນະຄອນກາຍກໍໄດ້ຖືກຮັບຕອນຈາກຊາວເມືອງ. ດ້ວຍເຂົ້າປາອາຫານໝາກພູຕາມຮີດຄອງປະເພນີ. ໃພງກໍຢາກເຫັນໜ້າທ້າວຂຸນລູ, ຊຸມ ຜູ້ສາວກໍພາກັນຮ້ອຍພວງມາໄລໄປຖວາຍທ້າວ ເພື່ອວ່າຈະໄດ້ເຫັນໜ້າ ທ້າວໃກ້ໆເມື່ອໄດ້ເຫັນແລ້ວກໍຫລົງໄຫລໃນຄວາມງາມຂອງທ້າວຈິນຊິເປັນ ບ້າປ່ວງ.

ເມື່ອໄດ້ໂອກາດແລ້ວພະນາງຄຳຜັນແຫ່ງເມືອງກາສີກໍໄດ້ໄປພົບກັບ ພະນາງທອງສີແຫ່ງເມືອງນະຄອນກາຍ, ທັງສອງໄດ້ຖາມສຸກທຸກຊຶ່ງກັນແລະກັນໃນຖານະເປັນສະຫາຍຮັກເກີດຮ່ວມປີດຽວກັນທັງສອງເວົ້າວ່າ ພວກ ເຮົາລ້ວນແຕ່ເປັນໝ້າຍຄືດຽວກັນ. ແມ່ຂອງທ້າວຂຸນລູໄດ້ຫວນເຖິງອະດີດ ຄັ້ງເມື່ອທັງສອງລົງອາບນ້ຳສະທົວຮ່ວມກັນສະໄໝເປັນສາວຊຶ່ງທັງສອງໄດ້ ຍໍມືໄຫວ້ວອນເຖິງພະອິນວ່າ ຖ້າເຈົ້າມີລູກນ້ອຍນາມມະຫນໍລຳຍິງ ຄົນເຮົາມີລຳຊາຍປູກແປງເອົາໃຫ້ພັດ໌ນເສຍສັດ໌ຈະນ໌ຕົວຕາຍດີກ່ວາສະຫາຍເອີຍ. ພະນາງທອງສີຈຶ່ງເວົ້າວ່າຕົນເອງໄດ້ຕົກລົງກັບທ້າວຂຸນລາງເສຍແລ້ວ. ແນວໃດກໍຕາມແມ່ຂອງທ້າວຂຸນລູໄດ້ເວົ້າກັບສະຫາຍຮັກວ່າຈະຂໍຫລ໌ນສາ ຄອນເຕົ້າຂ່ວງໄຊໃຫ້ຜີແມ່ນ້ອນເມືອຟ້າເບິ່ງແນນ ຄັນວ່າກົກແນນກ໌ຽວຂໍ ໂອນເປັນຄູ່ກັນແລ້ວ ຂໍໃຫ້ສະຫາຍກະກຽມມ໌ອື່ນເຊົ້າລົງຕັ້ງຂ່ວງໄຊ. ຫລັງ ຈາກຕົກລົງກັນແລ້ວທັງສອງກໍອຳລາຈາກກັນໄປ, ແມ່ຂອງທ້າວຂຸນລູກໍກັບໄປສູ່ ທີ່ພັກເຊົາສະເຫວີຍອາຫານພ້ອມດ້ວຍທ້າວຂຸນລູ, ເສນາອາມາດກໍພາກັນເສບດີນຕີສຽງດັງສະນັ່ນທົ່ວເມືອງ.

ຄືນນ໌ເຖິງເວລາກອງເດິກ ທ້າວຂຸນລູກໍໄດ້ລັກເຂົ້າໄປຫານາງອົ້ວຢູ່ ທີ່ຜາສາດຂອງນາງ, ທ້າວໄດ້ປຸກນາງໃຫ້ຕື່ນຂຶ້ນດັ່ງບົດກອນຂຽນວ່າ :

ບາກໍຫວ່າຍມື້ຕອງ      ບາຍກະດານຕ້ານກ່າວ

ວ່າດູລາອິງປະເສີດເນື້ອ | ພະອວນອ້າຍຕື່ນມາ ພີທ້ອນ
ໃຫ້ພີຂໍຈາຕ້ານ | ເມຍຂວັນຂອງເພີ້ນ ແມ່ແມ
ເຫັນວ່ານ້ອງມີຫຼ້ອນ | ເໝືອນໜ້າບໍ່ຄອຍ ແລນໍ
ອັນວ່ານາງເນົ້າທອງ | ປາງຫລອງພາສາດ
ນາງກໍຫລັບບໍ່ໄດ້ | ຄະນຶງທ້າວບໍ່ລືມ
ນາງໄດ້ຍິນສຽງທ້າວ | ວາຈາຕ້ານກ່າວ
ກໍຈື່ງໄຂປ່ອງຢ້ຽມ | ເອົາທ້າວສູ່ໃນ
ມີນາງນ້າວ | ຮີບາຕ້ານກ່າວ
ສີແຈ່ມເຈົ້າ | ອິງອ້ອນຈຶ່ງຟັງ
ບັດນີ້ຊຸນລາງຜູ້ | ທຳເວນທິນະຊາດ
ມັນກໍມາມັກນ້ອງ | ໝາຍລ້ຽງແມ່ເມືອງ
ມັນກໍເອົາຍັງຊຸນ | ປູປາສັບພະສິ່ງ
ຂົນສິ່ງເຈົ້າ | ວັນນີ້ບໍ່ຂາດສາຍ
ມັນກໍຂົນຂວາຍໄດ້ | ເງິນຄຳສັບພະສິ່ງ
ມາກ່າວຕ້ານ | ຂໍນ້ອງຄູ່ກັນ
ອັນວ່ານານດາແກ້ວ | ວາງຮຽມໃຫ້ເປັນຄູ່ ມັນແລ້ວ
ແມ່ກໍຫັນແຕ່ງນ້ອງ | ໄປຕ້ານກ່າວຖາມ
ບັດນີ້ແມ່ຈັກເອົານາງໃຫ້ | ຊຸນລາງເປັນຄູ່ ກັນແລ້ວ
ສອງຈຶ່ງທຶງສືບສ້າງ | ກາຍຫ້ວງາງຢ່າເຄືອງ
ບັດນີ້ນ້ອງກໍຍິ້ມໄຫ້ວ | ຂໍພອນອະນຸຍາດ
ຂໍໃຫ້ໂພດຂ້ານ້ອຍ | ປາງນີ້ເທື່ອດຽວ ແມ່ທ້ອນ
ເຮົ້ານມາມກະສັດແທ້ | ໄທຂອມຊັກປຽບ ເປັນລີ

ມັນຈັກລືໂລກກ້ວາງ ອາຍທ້າວໄພ່ເມືອງ ແມ່ເອີຍ
ແມ່ຈັກກຸມພັນໃຫ້ ເອົາມັນເປັນຄູ່ ສັນນັ້ນ
ລູກຈັກຕາຍຈາກເຈົ້າ ດຽວນີ້ຫ່ຽງຈິງ
ເມື່ອນັ້ນມານຕາຕານ ແຂງຄຳປ້ອຍຄ່າ
ອັນວ່າຄຳຂໍ້ຮາຍ ໂຮມເຂົ້າບຽດຫູ
ວ່າຈັກພິປອງໃຫ້ ເອົານອນເປັນຄູ່ ມັນແລ້ວ
ນ້ອງຂໍຖວາຍແກ່ເຈົ້າ ພໍ້ຮູ້ຮ່ຳເພີງ
ອັນໜຶ່ງຂຸນເສີນເຂົ້າ ນຳສານມາກ່າວ ວັນນັ້ນ
ພະແມ່ຂ້າ ມີໃຫ້ຄູ່ກັນ ເຈົ້າເອີຍ
ອັນວ່າເວລາຂ້ອງ ນຳມາທຽມຕອບ ເຮົາແລ້ວ
ໃຜຈະມາຂາດໃຫ້ ວັນນີ້ກໍບໍ່ມີ ເຈົ້າເຮີຍ

ທ້າວຂຸນລູໄດ້ເວົ້າກັບນາງວ່ານ້ອງບໍ່ຕ້ອງຮ້ອນເຄືອງອັນໃດຖ້າ ຫາກວ່າຂຸນລາງເອົານ້ອງໄປເປັນເມຍແທ້ງອ້າຍຈະເຕົ້າໝູ່ຊ້າງພົນລ້ານຍາດເອົາ ເຖິງແມ່ນອ້າຍຈະຕາຍເປັນຜີກໍບໍ່ຍອມປ່ອຍນາງໃຫ້ມັນເດັດຂາດ.

## 6. ໃຊ້ຜີແມ່ມ້ອນນຳເບິ່ງ ສາຍແນນ.

ພໍຕາເວັນຂຶ້ນສູ່ຂອບຟ້າ, ພະນາງຄຳຜັນແມ່ຂອງທ້າວຂຸນລູກໍສັ່ງໃຫ້ເອົາສິ ທຽນເງິນພ້ອມທຽນຄຳຮ້ອຍຄູ່ ເອົ້າຕອກທັງດອກໄມ້ລຽນ ໄວ້ໝື່ນຖັນ, ເມື່ອ ຫ້າງຫາກະກຽມແລ້ວ ເຂົາກໍເຊີນພະນາງລົງເຕົ້າຂ່ວງ. ຫລິງດູຂາງົວ ຂາ ຄວາຍໂດຍລະອາດ ໃຫ້ເຫລົ້າຕັ້ງສອງກ້ຳໄຂ່ວິນ ພ້ອມທັງບອກໃຫ້ໝໍແຕ່ງ ຄາຍສິບເຄື່ອງ, ຕໍ່ມາໝໍກໍຜັດຖ່າຍສົ້ນພິນໃຫ່ມໃສ່ສ້ວງວານທັງປັກປິ່ນເກົ້າແຕ່ ນັ້ນໝໍປິເຂົ້າເປົ່າ ປິ່ຍປິມນາງກໍຖືວ ຄຳແກວ່ງ ໄກວ ໄປມາເປັນການເຊີນ ອີ ຜີ ແມ່ມ້ອນເມືອງຟ້າທ່ຽວພະລັນ.

ພໍແຕ່ຖືກເຊີນອີຜີແມ່ມ້ອນກໍຕຶງຕົວ ເຕັ້ນລົງມາພ້ອມຍາດ ພ້ອມທັງຖາມວ່າ ຫັນເອົາຂ້າມາເຮັດສິ່ງເດີ ມີເຫດຮ້າຍການໃຊ້ສິ່ງໃດ? ຝ່າຍນາງເມືອງ ກໍ້ຫາສິຂານຕອບວ່າການທີ່ເຊີນມາໃນມື້ນີ້ ຍ້ອນວ່າເຄືອງໃຈດ້ວຍຂຸນ ລູ ບາບ່າວເຮົານີ້ຄຶດຢາກ ໄດ້ນາງອົ້ວນຶ່ງເມືອງຈຶ່ງ ໄດ້ຈຳສູເຈົ້າເມືອ ເຖິງແຖນ ໃຫ່ຍ ທັງແມ້ປາທັງເຖົ້າຍ່າຍາຍເພື່ອຢາກຮູ້ວ່າກົກແນນເຈົ້າທັງສອງກ້ຽວ ກອດກັນບໍ, ນ້ຳບໍ່ແກ້ວສອງເຈົ້າສ່ອງງາມບໍ່ນໍ? ເມື່ອຜີໄດ້ຍິນຄຳນາງ ເວົ້າ ແນວນັ້ນ ກໍຟ້າວຈັດແຈ່ງຈຳໃຫ້ເຂົາເອົາຂາໝູພ້ອມຂາຄວາຍສິບແຜ ສິ່ງ ລາງເພື່ອຖາມຄ່າຈ້າງກິນເຫລົ້າໝາກພູ ເຂົາກໍຈົ່ມແຊວຂຶ້ນເມືອບົນ ເສັງ ຊື່ນໜື່ນແປດຮ້ອຍ ໄຫລຂຶ້ນຄອບດອນ.

ເມື່ອໄປເຖິງກໍໄດ້ເຂົ້າໄປຂາບທູນຖາມນຳແຖນຫລວງຜູ້ເປັນໃຫ່ຍ ໂດຍຍົກເອົາຂຸນງົວຄວາຍປູປາແລະເຫລົ້າຖວາຍພ້ອມທັງຖາມວ່າບັດນີ້ຂຸນລູທ້າວປະສົງນາງອົ້ວຄ່ຽມ ຂໍໃຫ້ພະຍາແຖນຈຶ່ງພາຝູງຂ້າໄປເບິ່ງກົກມົ່ງກົກ ແນນຂອງທັງສອງແນ່. ແຖນຫລວງພ້ອມແຖນລໍແຖນຫລໍ່ຈຶ່ງພາພີແມ່ມ້ອນໄປເບິ່ງແນນຂອງທ້າວຂຸນລູແລະນາງອົ້ວກໍເຫັນວ່າກ່ຽວກອດກັນແໜ້ນແຕ່ວ່າມີ ບາບມາຈ່ອງນ້າວຫນີເວັ້ນຈາກກັນດັ່ງບົດກອນຂຽນວ່າ :

| | |
|---|---|
| ຫລີງດູ້ການ | ເຫລືອງລົງຊູຫລີ່ນ |
| ຕັ້ງຊໍ່ໄວ້ | ດູແຫ້ງຫ່ຽວດາຍ |
| ອັນຫນື່ງນ້ຳຍໍ່ແກ້ວ | ບົກຂາດລີນຄຳ |
| ບັງເກີດມີແນວບົວ | ທອດເຄືອຕົ້ນຫາງ |
| ອັນຫນື່ງຫນອງປາເຈົ້າ | ທັງສອງເຂີນຂາດ |
| ຫນອງເລີກເຈົ້າ | ດູ້ແຫ້ງໄຫ່ງຜົງ |
| ທໍ່ວ່າບັນລັງເຈົ້າ | ເປັນຄຳທັງແທ່ນ |
| ອັນຫນື່ງທາກແມ່ນອົງພະເຈົ້າ | ພາຍຫນ້າໂລກລີ ເຈົ້າເອີຍ |
| ເຂົາກໍຈາລະຈາຕ້ານ | ແຖນຫລວງລາບາດ |
| ວັນຫນ້າເຊົ້າ | ເຊີນເຈົ້າລ່ຳຄອຍ ແມ່ຫ້ອນ |
| ເຂົາຈາແລ້ວ | ໄຫລລົງເດຍລະດາດ |
| ຮອດຂ່ວງຄຸ້ມ | ສະຫນາມແກ້ວຈອດເຊົາ ແທ້ແລ້ວ |

ເມື່ອລົງມາຮອດແລ້ວ ຂຸນພີແມ່ມ້ອນກໍປຶກສາກັນວ່າ ເຮົາຈະເວົ້າແນວໃດດີ, ຄັນວ່າເຮົາຊິເວົ້າຜອກພົ້ນມັນຊິເປັນບໍ່, ເຮົາຄວນເວົ້າແຕ່ສິ່ງທີ່ດີຍິ່ງສອງຈິ່ງເຫັນ, ພີແມ່ມ້ອນບອກວ່າພວກຕົນໄດ້ຂຶ້ນໄປຫາພະຍາແຖນໆໄດ້ນຳ ພາພວກຕົນໄປເບິ່ງກົກແນນມີລາງບ່ອນກໍດີລາງບ່ອນກໍຫາກຮ້າຍເອົາແຕ່ຈະຄິດ

ພິຈາລະນາດີຮ້າຍແນວໃດເມື່ອໜ້າ, ອັນໜຶ່ງກໍໄດ້ເຊີນແຖນໃຫ້ລົງມາເຕົ້າຂ່ວງໃນມື້ໜ້າເພື່ອຮ່ວມແກ່ວງຄອນເມື່ອພິແມ່ນມ້ອນວ່າດັ່ງນັ້ນແລ້ວກໍພາ ກັນເລີກລາໜີໄປ.

ຝ່າຍພະນາງຄຳຜັນໄດ້ຟັງດັ່ງນັ້ນກໍໄດ້ແຕ່ຄຶດແຄ້ນຄັ້ງຢູ່ໃນໃຈຜູ້ດຽວ, ໄດ້ແຕ່ເອົາມືລູບອົກຄຶດນຳແຕ່ລູກຊາຍບໍ່ເລີກບໍ່ແລ້ວ, ພໍເຖິງເວລາແລງເຂົາ ກໍຈັດແຕ່ງພາເຂົ້າມາຖວາຍພະນາງຄຳຜັນແລະທ້າວຂຸນລູ ທ່າມກາງສຽງດົນຕີປີ່ຊໍແຄນຄ້ອງ. ຫລັງຈາກເລີກຄາບເຂົ້າແລງແລ້ວທ້າວຂຸນລູກໍລັກໄປ ຫານາງອົ້ວເຕື່ມອີກດັ່ງບົດກອນຂຽນວ່າ:

ຟັງຍິນສຽງຮາມຄົ້ວ ຊາຍຮາມຊົມມ່ວນ ພຸ້ນເຍີ
ທ້າວກໍລັກລອບເຂົ້າ ຫາອົ້ວກອດຊົມ
ສອງກໍຮັກແມ່ນແມ້ງ ມະໂນຂາດຄາອົກ ຖ້ວນແລ້ວ
ລືມອິນຍານ ເປົ່າເສຍປາງຮ້ອນ
ເຖິງເມື່ອເວລາລ່ຳ ກອງຍາມໃກ້ຊິຮຸ່ງ
ທ້າວກໍລາຈາກນ້ອງ ຫາຫ້ອງຂ່ວງໄຊ ເຈົ້າເອີຍ

ພໍແສງຕາເວັນຂຶ້ນພົ້ນຂອບຟ້າ ແມ່ກໍພາທ້າວກິນເຂົ້າເຊົ້າ, ຫລັງຈາກນັ້ນພະນາງຄຳຜັນກໍສັ່ງໃຫ້ເຂົ້າຕົກແຕ່ງຫ້າງລົງຕັ້ງຂ່ວງສະໜາມ, ທັງສັ່ງ ໃຫ້ປຸກຫໍເທວະດາທັງສີ່ພ້ອມທັງເອົາຂັນຮົ່ມກັ້ງໄວ້ຄົບທັງສີ່ແຈຫໍ, ພາຍໃນຫໍກໍ ມີອາສະໜາຂັນຄຳທັງສີ່, ເຂົ້າຕອກດອກໄມ້ ແລະທຽນເງິນທຽນຄຳຈຳນວນຮ້ອຍຄູ່, ທາງລຸ່ມກໍປູອາສະໜາໄວ້ຕື່ມອີກປະມານຮ້ອຍກວ່າອັນແລ້ວເອົາໄມ້ການໄວ້ເຄິ່ງກາງ. ເມື່ອປະດັບຕົກແຕ່ງເປັນທີ່ຮຽບຮ້ອຍແລ້ວເຂົາກໍເຊີນແມ່ຂອງທ້າວຂຸນລູກັບແມ່ນາງອົ້ວຄຽນລົງຂ່ວງຊຸ້ມປະສິງຫລົບມ່ວນໃຈ. ແນມເບິ່ງແມ່ຂອງທ້າວຂຸນລູແຕ່ງໂຕກໍບໍ່ໄດ້ຂຣາຍຫລືວ່າສິ່ງສະແດງວ່າເຖົ້າແກ່ແຕ່

ປະການໃດ, ທັງສອງແມ່ເມືອງເບິ່ງໃສ່ກັນແລ້ວກໍມີຄວາມງາມທ່ຽງກັນຈະຫາຍິງໃດມາປຽບທຽບທັງສອງກໍບໍ່ໄດ້.

ນາງທັງສອງສັ່ງໃຫ້ບ່າວສາວທັງຫລາຍພາກັນຫລິ້ນ ສາຄອນໃຫ້ມ່ວນຕາມໃຈຊູ່ຄົນ ຟັງຍິນສຽງດັງກ້ອງນອງບົນອາກາດຄຶນມາກ ລັ້ນເຕັມ ພື້ນແຜ່ນດິນ. ຝ່າຍຜູ້ເປັນພາມມະນາກໍທຳພິທີໄຫວ້ວອນເຖິງພະອິນທັງສີ່ກັບ ທັງເທວະດາຢູ່ເທິງຟ້າໃຫ້ລົງມາລ່ຳນາຄອຍ ພ້ອມດ້ວຍແຖນຫລວງແລະຍົມ ພິບານທັງສີ່ຕະຫລອດດຸຄົນມາກນ້ຳໃຫ້ມາຢ້ຽມລ່ຳດູ, ຫລັງຈາກພາມມະນາຈານສັກເຄເທວະດາເປັນທີຮຽບຮ້ອຍແລ້ວ ບ່າວແລະສາວກໍພາກັນຫລິ້ນ ໜ່ວຍຄອນທັງບ່າວທັງສາວກໍຜັດກັນໂຍນຜັດກັນຮັບໜ່ວຍຄອນດ້ວຍຄວາມ ເບີກບານມ່ວນຊື່ນ, ພວກເຂົາພາກັນຫລິ້ນຈົນເຖິງແຖໃກ້ຊີຮຸ່ງຈຶ່ງໄດ້ເຊີນນາງອົ້ວໃຫ້ລົງມາຫລິ້ນນຳດັ່ງບົດກອນຂຽນວ່າ:

ເຂົາກໍເອົາກັນຫລິ້ນ ເຖິງແຖໃກ້ຊີຫ່ຽງ
ເຂົາກໍເຊີນອ່ອນອົ້ວ ລົງຫລິ້ນໜ່ວຍຄອນ
ເມື່ອນັ້ນນາງງາມອົ້ວ ທັງໂສມສັນຫລໍ່
ປີກປົ່ນເກົ້າ ແຫວນຊ້ອນຄູ່ມື
ມີທັງສັງວານຄ້ອງ ຄໍກົມແຖວຖີ່
ນາງກໍທົງຜ້າດອກໄມ້ ພື້ນກ້ຽງຄ່າຄຳ
ແພ ແດງຊ້ອນ ຮົງນົມດູແຈບ
ນາງກໍຍົວລະຍາດຍ້າຍ ສາວນ້ອຍແໜ່ນຳ
ປູນດັ່ງເທພາຫ້ອງ ຄອງສະຫວັນລົງລ່ວງ
ອັນວ່າບ່າວສ່ຳນ້ອຍ ເຫັນເຈົ້າປວດກະສັນ
ນາງກໍມາເຖິງຫ້ອງ ສະໜາມໄຊເຊົາຈອດ

ສາວສໍ່ານ້ອຍ ລຽນລ້ອມໝື່ນຖັນ ເຈົ້າເອີຍ

ພ້ອມໆກັນນັ້ນທາງຝ່າຍທ້າວຂຸນລູກໍໄດ້ຖືກເຊີນໃຫ້ມາຮ່ວມເຊັ່ນດຽວກັນຝູງເສນາອາມາດກໍທຳພິທີແຫ່ແຫນທ້າວມາສູ່ສະໜາມໄຊ ຄືກັນດັ່ງບົດກອນຂຽນວ່າ:

ບັດນີ້ຈັກກ່າວ ເຖິງຂຸນລູເຈົ້າ ໂພທິຍານອົງປະເສີດ
ທ້າວກໍທົງເຄື່ອງປ້ອງ ດູລະຫ້ອຍເກືອງພິມ
ທ້າວກໍລີລາຍ້າຍ ຊາຍຮາມແຫນແຫ່
ອັນວ່າສຽງຟາດຄ້ອງ ອວນເຈົ້າອອກໄປ
ຫລິງດູສາວຮາມປຽມ ຄອຍພາຫລິງລຳ
ຕາກະດ້າງ ຫລົງເນື້ອປວດກະສັນ
ບາກໍລີລາເຂົ້າ ສະໜາມໄຊເຊົາຈອດ
ບ່າວສໍ່ານ້ອຍ ລຽນລ້ອມໝື່ນຖັນ ເຈົ້າເອີຍ

ເມື່ອທ້າວມາເຖິງສະໜາມໄຊແລ້ວ ພານມະນາຈຶ່ງເຂົ້າຖວາຍ ພອນພ້ອມທັງເຊີນທ້າວລົງຫລັ່ນແກ່ວງຄອນ, ກ່ອນທີ່ທ້າວຈະຈັບເອົາໜ່ວຍ ຄອນທ້າວໄດ້ຍົກມືໄຫວ້ວອນເຖິງພະອິນຂໍໃຫ້ລົງມາລຳຄອຍໃນຄາວນີ້ແລ້ວທ້າວຈຶ່ງແກ່ວງໜ່ວຍຄອນນັ້ນໄປດັ່ງບົດກອນຂຽນວ່າ:

ຄອນບາທ້າວ ສາຍແຂງຮີງຜູກ
ປະດັບໜ່ວຍແກ້ວ ແສງເຫລື້ອມເຮືອເຮືອງ
ທ້າວກໍຍໍໄປກ້ຳ ນາງງາມອົ້ວຄຽມ
ເປັນດັ່ງສຸລິຍຄ້ອຍ ລົງພົ້ນຮຸ່ງເຮືອງ
ເມື່ອນັ້ນນາງງາມອົ້ວ ແຂນແພງຮັບລີ
ນາງກໍຮັບໄດ້ແລ້ວ ສາຍຊໍ້າຂາດມື

ຄອນສະເດັດຂຶ້ນ　　　ເມືອບົນອາກາດ

ອິນທະລາດເຈົ້າ　　　ເອົາໄວ້ທີ່ຄອນ

ເອົາກໍທົນລະທົນຮອນ　　　ນຳນາງເປັນບ້າປ່ວງ

ນາງກໍໜ້າຫລ່າຄາງ　　　ທັງເນື້ອເມື່ອຍມືນ

ໂອນໍຊາດໂຕເອີຍບຸນບໍ່ເຄີຍຄາດໄດ້ ບາຍເອົາຊ້ຳ　　ມາຂາດ
ເສຍນໍ

ຄຳມັກມາບໍ່ໄດ້　　　ເປັນຮ້າງເປົ່າດາຍ ແລນໍ

ໂອນໍເສຍດາຍທຳມະໂຮງແກ້ວ ມະນີວັນໃສສ່ອງ ດເນໍ

ນຶ່ງບໍ່ຄາດແຕ່ແຖນແນນບໍ່ຄາດແຕ່ຟ້າ ບາຍໄດ້ຊ້ຳຂາດ　　ກາງ
ເຈົ້າເອີຍ

ໃພງກໍມີຄວາມອິນລະທົນວຸ່ນວາຍນຳນາງ. ຕໍ່ມາເອົາຈຶ່ງຊິນນາງແກ່ວງໜ່ວຍຄອນ, ກ່ອນທີ່ນາງຈະແກ່ວງຄອນນາງໄດ້ຍໍມືໄຫວ້ວອນເຖິງພະອິນທາທິລາດ ເພື່ອໃຫ້ມາລ່ຳມາຄອຍ. ຈາກນັ້ນຈຶ່ງຍໍມືແກ່ວງຄອນແນມເບື້ອງມະ ນີໂຊແກ້ວລັງສີໃສສ່ອງ ນາງກໍຍົກໃສ່ທ້າວແສງເຫລື້ອມເຮືອເຮືອງ. ທ້າວຂຸນລູກໍຟ້າວຮັບເອົາທັນທີ, ແຕ່ວ່າຮັບໄດ້ແລ້ວສາຍກໍຂາດຄາມື ເຮັດໃຫ້ລູກຄອນຕົກລົງສູ່ແຜ່ນດິນສຽງດັ່ງສະໜັ່ນຫວັ່ນໄຫວ, ທ້າວຂຸນລູໄດ້ແຕ່ຈົ່ມວ່າໂອນໍບຸນບໍ່ເຄີຍທຽມອົ້ວ ບາຍເອົາຊ້ຳພັດຂາດຊາດທີ່ໂຊກບໍ່ໃຫ້ແສນຊິໄດ້ກໍຫ່າງໄກ.

ພະນາງທອງສີແມ່ຂອງນາງອົ້ວໄດ້ເຫັນອາການດັ່ງນັ້ນຈຶ່ງບອກໃຫ້ນາງອົ້ວໂຍນຄອນໃສ່ທ້າວຂຸນລາງລອງເບິ່ງ ແຕ່ນາງອົ້ວພັດເຮັດຫູບໍ່ໄດ້ຍິນ: ຄຳແມ່ບອກ ດັ່ງນັ້ນຜູ້ເປັນແມ່ຈຶ່ງຈົ່ມວ່າໃຫ້ນາງຕ່າງໆນານາ ຈົນນາງອົ້ວ ຄຶດຄຽດໃນໃຈແລ້ວຈຶ່ງໂຍນໜ່ວຍຄອນຖິ້ມໃສ່ຂຸນລາງ ຄອນສະເດັນກົ້ງຕຳຕາລົ້ມທ່າວລາງລຸກໄດ້ຄອຍຢ້ຽມບໍ່ເຫັນ, ສ່ວນນາງອົ້ວກໍຟ້າວຂຶ້ນສູ່ທໍ່ຜາ　　ສາດ

ຂອງນາງ, ເມື່ອວາງໜ່ວຍຄອນໄວ້ແລ້ວ ນາງກໍໄດ້ແຕ່ຕີອົກຊົກຫົວດ້ວຍ ຄວາມເສຍໃຈ ຈົນບໍ່ຫ່ວງນຳເຂົ້ານ້ຳແຕ່ຢ່າງໃດ.

ສ່ວນພະນາງຄຳຜັນກັບທ້າວຂຸນລູນັ້ນ ເມື່ອໄດ້ເຫັນອາການຂອງ ໜ່ວຍຄອນດີແນວນັ້ນກໍບໍ່ຊ່າງຊິວ່າແນວໃດ. ດັ່ງນັ້ນລະຫວ່າງແມ່ຂອງທ້າວຂຸນ ລູກັບແມ່ຂອງນາງອົ້ວ ຄ່ຽມກໍໄດ້ແຕ່ສັ່ງລາກັນ ເພື່ອກັບຄືນສູ່ບ້ານເມືອງ ຂອງຕົນ ໂດຍສະເພາະແມ່ທ້າວຂຸນລູສັ່ງວ່າ ຄຳສັດຈະນັ້ນຢ່າໄດ້ຫລົງລືມມັນ ງ່າຍເຮົາຈິ່ງພະຍາຍາມໃຫ້ເຂົາໄດ້ເປັນຄູ່ຜົວເມຍກັນ. ຫລັງຈາກສັ່ງລາກັນແລ້ວ ແມ່ຂອງທ້າວຂຸນລູກໍສັ່ງໃຫ້ທຸກຄົນອອກເດີນທາງກັບສູ່ເມືອງກາສີໂດຍ ແມ່ນແມ່ຂອງທ້າວຂຸນລູຂຶ້ນນັ່ງຫລັງຊ້າງ ເດີນອອກໜ້າພາທາງພ້ອມດ້ວຍທ້າວຂຸນລູ, ການເດີນທາງກິນເວລາໄດ້ຫລາຍມື້ ຈຶ່ງຮອດເມືອງກາສີ, ສະ ເພາະທ້າວຂຸນລູນັ້ນມາຮອດບ້ານເມືອງຂອງຕົນ ແລ້ວກໍຍັງ ຄິດ ຮອດຫານາງອົ້ວຢູ່ບໍ່ເລີກບໍ່ແລ້ວ.

## 7. ນາງອົ້ວສົ່ງສານຫາທ້າວຂຸນລູ

ຍ້ອນກ່າວເຖິງທ້າວຂຸນລາງ, ນັ້ນທ້າວຂຸນລາງໄດ້ສົ່ງໃຫ້ແສນຄຳເຂົ້າໄປເຝົ້າແມ່ຂອງນາງອົ້ວ ເພື່ອຂໍຄຳຕອບວ່າແມ່ຂອງນາງອົ້ວຈະກູນາໂພດ ພາຍມອບນາງອົ້ວໃຫ້ເປັນເມຍຂອງທ້າວຂຸນລາງຫລືບໍ? ຝ່າຍແມ່ຂອງນາງ ອົ້ວຈຶ່ງຕອບດ້ວຍຄວາມເວົ້າອັນອ່ອນຫວານວ່າ ໃຫ້ພວກສູເຈົ້າຫ້າງຫາກະກຽມມາໂລດໃນລະຫວ່າງເດືອນໜ້າ ເພັງນີ້ເປັນມື້ໂຊກມື້ໄຊແລ້ວ. ເມື່ອແສນຄຳໄດ້ຍິນດັ່ງນັ້ນກໍມີຄວາມດີໃຈຈຶ່ງຟ້າວຂາບລາກັບຫາທ້າວຂຸນລາງທັນທີ ແລ້ວຂາບທູນໃຫ້ຂຸນລາງຮູ້ຕາມທີ່ແມ່ຂອງນາງອົ້ວໄດ້ສັ່ງມາ, ເຮັດໃຫ້ທຸກຄົນ ມີຄວາມດີໃຈ ຟ້າວຈັດຫາກະກຽມ.

ບັດນີ້ກ່າວເຖິງນາງອົ້ວຜູ້ພວມໄດ້ພົບກັບຄວາມອຸກອັ່ງໃນໃຈເພາະ ວ່າແມ່ຈະຍົກນາງໃຫ້ຂຸນລາງໃນບໍ່ຊ້າບໍ່ນານນີ້ເອງ. ດັ່ງນັ້ນ, ນາງຈຶ່ງສັ່ງ ໃຫ້ຊາຍສະກັນຮັບໃຊ້ ເຂົ້າພົບແລ້ວມອບສານສະບັບໜຶ່ງໃຫ້ນຳໄປສົ່ງໃຫ້ ທ້າວຂຸນລູຢູ່ເມືອງກາສີ, ນາງເວົ້າວ່າຈະຖິມມະນາບຸນຄຸນເປັນຄຳ 5 ບາດ ຈຶ່ງປົກປິດເລື່ອງນີ້ເອົາໄວ້ຢ່າໃຫ້ແມ່ໄດ້ຮູ້ເປັນເດັດຂາດ, ຊາຍສະກັນຮັບ ໃຊ້ຢາກໄດ້ຄຳ 5 ບາດ ຂອງນາງຈຶ່ງຍອມປະຕິບັດຕາມເງື່ອນໄຂຂອງ ນາງທຸກຢ່າງ.

ຕໍ່ມາຊາຍສະກັນຮັບໃຊ້ກໍຂີ່ມ້າອອກເດີນທາງຈາກເມືອງນະຄອນ ກາຍ

ໄປສູ່ເມືອງກາສີຕາມທີ່ນາງອົ້ວບອກ. ເມື່ອໄປເຖິງເມືອງກາສີກໍໄດ້ ມອບ
ສານນັ້ນໃຫ້ທ້າວຂຸນລູ, ຊາຍສະກັນຮັບໃຊ້ບອກກັບທ້າວວ່າອັນນີ້ແມ່ນ ສານ
ຂອງນາງອົ້ວຄ່ຽມ ຂໍໃຫ້ອ່ານເບິ່ງເນື້ອຄວາມເອົາເອງ, ທ້າວຂຸນລູຈຶ່ງ ໄຂ
ສານອອກມາອ່ານເບິ່ງ ຊຶ່ງມີເນື້ອໃນຈິດໃຈຂອງສານດັ່ງບົດກອນຂຽນວ່າ:

ໂອນໍ ສານນີ້ຊື່ວ່ານ້ອງຢູ່ບ້ານ ອົກຊິແຕກໃນປາງ ພີ່ເອີຍ
ອັນໜຶ່ງຄືດັ່ງພູເພທັບ ຖືກອົງຣຽມແທ້
ອັນໜຶ່ງເມືອງຂອງນ້ອງ ຫລຸບລົງຈົມຈຸ່ມ ເສຍແລ້ວ
ເຊີນແຈ່ມເຈົ້າ ມາຢ້ຽມລ່ຳຄອຍ ແນ່ທ້ອນ
ອັນໜຶ່ງຄືດັ່ງອິນເພນ້າງ ຮາວຜາຕຸງເຖືອນ
ອັນໜຶ່ງຄືດັ່ງປີນຜ່າເຫົ້າ ແຖວໄມ້ມຸ່ນຈວນ
ອັນໜຶ່ງຄືລາຫູຄາດເຂົ້າ ຕຸງເນື້ອຫລ່າຫລົງ
ອັນໜຶ່ງຄືດັ່ງລົມພານເປື້ອງ ປິວຫີນສະເທີນມຸ່ນ
ເຊີນແຈ່ມເຈົ້າ ມາຢ້ຽມລ່ຳດູ ແດ່ທ້ອນ
ອັນໜຶ່ງມານຫລວງເຂົ້າ ມາພະຈົນບັງບຽດ
ເຊີນແຈ່ມເຈົ້າ ເມືອຢ້ຽມລ່ຳຄອຍ ແດ່ທ້ອນ

ເມື່ອທ້າວຂຸນລູອ່ານສານກໍສະຫລົບໄປດ້ວຍຄວາມເສຍໃຈ, ດັ່ງນັ້ນ, ທ້າວຈຶ່ງສັ່ງໃຫ້ເສນາຈັດມ້ານາໃຫ້ດ່ວນທ້າວໄດ້ຂີ່ມ້າອອກເດີນທາງໃນທັນ ທີການເດີນທາງໃຊ້ເວລາຢູ່ຫລາຍວັນຈຶ່ງໄປເຖິງເມືອງນະຄອນກາຍ. ທ້າວພັກເຊົາຢູ່ຈົນເຖິງເວລາຕີກອງເດິກຈຶ່ງໄດ້ໄປຫານາງອົ້ວຢູ່ທີ່ພາສາດ ຂອງນາງ; ທັງສອງຕ່າງໄດ້ຢູ່ຮ່ວມກັນຕາມລຳພັງ. ນາງອົ້ວໄດ້ເວົ້າກັບຂຸນລູ ວ່າດຽວນີ້ຂຸນລາງໃຊ້ເຂົ້າມາສູ່ຂໍນຳແມ່ແລ້ວແລະແມ່ກໍຍິນດີມອບໃຫ້ເປັນ ເມຍຂອງຂຸນລາງແນ່ນອນແລ້ວ, ແມ່ໄດ້ກຳ ນົດພິທີດອງໃສ່ເດືອນໜ້ານີ້, ຄາວ

ນີ້ຖືວ່າເປັນເວນກຳແຫ້ງອ້າຍເອີຍ.

ເມື່ອທ້າວຂຸນລູໄດ້ຍິນນາງອົ້ວເວົ້າແນວນັ້ນ ຈຶ່ງບອກວ່າ ນ້ອງຢ່າ-ຢ້ານຂຸນລາງມາເອົາເຫາະ, ອ້າຍຈັກກັບຄືນເມືອເມືອງຄຮີ້ວນ ແລ້ວຈະຈັດເອົາກຳລັງລີພົນໂຍທາມາຊິງຍາດເອົານ້ອງຈິນໄດ້, ແຕ່ນາງອົ້ວໄດ້ເວົ້ານຳທ້າວວ່າເລື່ອງຈະເອົາກຳລັງມາຍາດມາຊິງນັ້ນ ຂໍນຳອ້າຍຢ່າໄດ້ກະທຳແນວນັ້ນທ້ອນ, ຖ້າຫາກວ່າຂຸນລາງລົ້ມຫາຍຕາຍຈາກໄປກໍຈະມີບາບມີກຳນຳ ສະຫນອງພວກເຮົາໃນພາຍຫລັງ. ນາງອົ້ວບອກກັບທ້າວວ່າຈະໃຊ້ສະຕິປັນ ຍາຂອງຕົນແກ້ໄຂເສຍກ່ອນຖ້າຫາກເຫລືອວິໄສແທ້ຈຶ່ງຄ່ອຍພິຈາລະນາ ຕາມຫລັງ, ທ້າວຂຸນລູຄຶດວ່າຄຳເວົ້າຂອງນາງອົ້ວມີເຫດມີຜົນຈຶ່ງຍອມປະຕິ ບັດຕາມ. ຄືນນັ້ນທ້າວແລະນາງໄດ້ຢູ່ຮ່ວມກັນຈົນຂ້ອນແຈ້ງທ້າວຈຶ່ງສັ່ງລາ ນາງເພື່ອກັບຄືນເມືອງ.

ກ່ອນທີ່ທ້າວຂຸນລູຈະລົງຈາກຫໍຜາສາດນັ້ນນາງອົ້ວໄດ້ບອກທ້າວວ່າ ຖ້າອ້າຍຍັງຢາກຢູ່ຫລິ້ນມ່ວນກັບນ້ອງອີກນັ້ນ ມື້ອື່ນເຊົ້າເຊີນອ້າຍໄປພົບກັບນ້ອງຕື່ມຢູ່ສວນອາດຸທິຍານ. ນ້ອງຈະໄປລໍຖ້າຢູ່ທີ່ນັ້ນ. ຫລັງຈາກທັງສອງ ທຳຄວາມເຂົ້າໃຈກັນເປັນທີ່ຮຽບຮ້ອຍແລ້ວ, ທ້າວຂຸນລູກໍລົງມາຫາມ້າແລ້ວຂີ່ຫນີໄປຈາກຕົວເມືອງມຸ່ງຫນ້າໄປສູ່ສວນດອກໄມ້ທີ່ນາງອົ້ວໄດ້ນັດຫມາຍເອົາໄວ້ແລ້ວກໍນັ່ງຖ້ານາງຢູ່ທີ່ນັ້ນ.

ຍ້ອນກ່າວເຖິງນາງອົ້ວ, ເມື່ອທ້າວຂຸນລູລາໄປແລ້ວນາງກໍລຸກສວ່າຍຫນ້າທາແປ້ງແຕ່ງຜົມ ແລະກິນເຂົ້າເຊົ້ານຳແມ່ຕາມປົກກະຕິ, ແຕ່ວ່າເລື່ອງນາງກັບທ້າວຂຸນລູພົບກັນຄືນນີ້ ໄດ້ພົວຊອດໄປເຖິງຫູຂອງພະນາງທອງສີພູ ເປັນແມ່, ດັ່ງນັ້ນ, ຜູ້ເປັນແມ່ຈຶ່ງດ່າວ່າຮ້າຍຂາດຕໍ່ນາງດັ່ງບົດກອນຂຽນວ່າ:

ເມື່ອນັ້ນມານດາຂ້ຽວ ແຂງຄຳເອີ້ນດ່າ

ນິງນຕັ້ງຖ່ອຍຮ້າຍ　　　ຊົມທ້າວບໍ່ອາຍ ແທ້ນໍ
ຂຸນລູທ້າວ　　　ເປັນຜົວຂອງເພິ່ນ
ກູກໍ້ຫ້ານຈອຍໆ　　　ວາງຖິ້ມຖິມເສຍ
ບັດນີ້ກູຈັກມັດຄໍໃຫ້　　　ຂຸນລາງຕາມຊ່າງ ມັນທ້ອນ
ກູຈັກຕັດຂາດໃຫ້ແກ້ທ້າວ　　　ເດືອນຫນ້າແນ່ນອນ
ນາງກໍຟັງດູແກ້ວ　　　ແກວງເອີ້ນມາດ່າ
ນາງກໍຄິດຄຽດຄ້ອຍ　　　ຄຳສິນຄຽດຟູມ ເຈົ້າເອີຍ

ຕໍ່ມານາງອົ້ວຈຶ່ງຂີ່ມ້າອອກເດີນທາງ ໄປສູ່ສວນໂດຍມີສາວຮັບໃຊ້ ໄປ ນຳຫນຶ່ງຄົນ, ພໍໄປເຖິງສວນກໍໄດ້ເຫັນທ້າວຂຸນລູນັ່ງຖ້າຢູ່, ນາງຈຶ່ງພ້າວເຂົ້າໄປຫາທ້າວແລ້ວກ້ຽວພາລາສີກັນຕາມປະສາຂອງບ່າວ ສາວທີ່ຮັກມັກກັນຈົນ ລືມຄວາມອັບອາຍ. ທັງສອງຢູ່ຮ່ວມກັນຈົນເຖິງຕອນແລງຈຶ່ງ ໄດ້ສັ່ງລາກັນ, ທ້າວສັ່ງນາງໆສັ່ງທ້າວດ້ວຍຄວາມຮັກແລະອາໄລອາວອນ. ຕອນຫນຶ່ງທ້າວຂຸນ ລູບອກກັບນາງອົ້ວວ່າ ຄວາມຮັກທີ່ທ້າວມີຕໍ່ນາງນັ້ນແມ່ນວ່າແມ່ຂອງນາງ ຈະຕັດຄໍຖິ້ມກໍບໍ່ຢ້ານບໍ່ກົວ ຂໍແຕ່ໄດ້ຢູ່ໃກ້ນາງກໍເປັນທີ່ພໍອົກພໍໃຈ, ແຕ່ນາງອົ້ວ ໄດ້ເວົ້າກັບທ້າວວ່າທຸກສິ່ງທຸກຢ່າງນາງຈະເປັນຜູ້ພິຈາລະນາແກ້ໄຂເອົາ ເອງບໍ່ໃຫ້ຮ້ອນເດືອດທ້າວແຕ່ຢ່າງໃດ. ຂໍໃຫ້ທ້າວ ເດີນທາງກັບ ສູ່ນະຄອນກາ ສີຢ່າໂສກເສົ້າຈົ່ງຕຸ້ມໄພ່ຟ້າປະຊາກອນດ້ວຍຄວາມສຸກກາຍສະບາຍໃຈ.

ຫລັງຈາກສັ່ງລາກັນແລ້ວ, ທ້າວຂຸນລູກໍຂີ່ມ້າອອກເດີນທາງກັບຄືນສູ່ເມືອງຂອງຕົນ, ຕາມເສັ້ນທາງກັບຄືນທ້າວ ໄດ້ຍິນສຽງນົກນາງຊະນິດຮ່ຳຮ້ອງ ຟັງແລ້ວພາໃຫ້ຈິດວິໃຈວອນຄິດຮອດນາງອົ້ວຈົນໃຈຈະຂາດ, ທ້າວ ໄດ້ແຕ່ຈົ່ມ ຜູດຽວວ່າປານນີ້ນາງອົ້ວອາດຈະລືມທ້າວ ເສຍແລ້ວ, ໄປຫລົງຮັກກັບຂຸນ ລາງເມື່ອ ໄດ້ຊົມກັບທ້າວຂຸນລາງແລ້ວກໍຄົງລືມທ້າວ. ເມື່ອກັບເຖິງເມືອງ ແລ້ວ

ທ້າວກໍຂຶ້ນສູ່ຫໍຜາສາດແມ່ນຈະຫລັບຈະນອນກໍບໍ່ເປັນສຸກໄດ້ເພາະຫ່ວງ ໜ້າ ພະວາຫລັງນຳແຕ່ນາງອົ້ວຕະຫລອດເວລາ.

# 8. ນາງອົ້ວໜີໄປຜູກຄໍຕາຍຢູ່ຕົ້ນຈວງ.

ສຳລັບນາງອົ້ວນັ້ນ ເຖິງແມ່ນຈະຄິດຮອດຫາທ້າວຂຸນລູແທບໃຈຈະ ຂາດ ຖືກແມ່ຮ້າຍດ່ານານາປະການກໍຕາມ, ແຕ່ນາງກໍເຮັດສີໜ້າບໍ່ຮູ້ຮ້ອນ, ນາງພະຍາຍາມຮັກສາທ່າທີໃຫ້ປົກກະຕິ, ເຖິງເວລາອາບນ້ຳ, ເວລາກິນ ເຂົ້າ ນາງກໍປະຕິບັດໄດ້ຢ່າງສະໝ່ຳສະເໝີ. ແຕ່ໃນສ່ວນເລິກຂອງຫົວໃຈ ນາງນັ້ນບໍ່ມີໃຜຈະສາມາດຮູ້ໄດ້, ຄືນຫລັງຈາກອາບນ້ຳແລ້ວນາງກໍຜັດແປ້ງແຕ່ງຕົວເຂົ້າສູ່ຫ້ອງນອນ, ແທນທີ່ນາງຈະຫລັບນອນ ນາງພັດສີທຽນໄດ້ພໍປະມານ ຮ້ອຍຄູ່ເຂົ້າຕອກດອກໄມ້ມີໄວ້ໃສ່ຂັນ.

ຫລັງຈາກກິນແລງ, ລ້ຽວໝາກແລ້ວນາງກໍເຂົ້າສູ່ຫ້ອງນອນ ຟ້າວ ຜັດປ່ຽນເຄື່ອງນຸ່ງສິ້ນໃຫມ່ແພງາມປະດັບເອ້ຍ້ອງດ້ວຍເຄື່ອງສ້ອຍສັງວານແລ້ວກໍຢໍຂັນຂຶ້ນກ່າວຄຳສົມມາຄາລະວະຂໍໂທດຂໍອະໄພຕໍ່ຜູ້ມີພະຄຸນແລະສິ່ງຕ່າງໆ ດັ່ງບົດກອນຂຽນວ່າ:

ບັດນີ້ຂາຂໍສົມມາເຈົ້າ    ນານດາອີງປະເສີດ
ຢ່າໄດ້ມີບາບເປື້ອງ    ເຖິງຂ້າເມືອລຸນ
ອັນໜຶ່ງເຈົ້າຫາກຖືພາຂ້າ    ກາຍຍາເຫລືອງຫລ່າ
ເຈົ້າກໍອົດພາກເຍື້ອນ    ນານລ້ຳອອກມາ
ອັນໜຶ່ງແມ່ຫາກກິນນ້ຳຮ້ອນ    ປາກເປື່ອຍໂພງສຸກ

ລູກຂໍສືມມາຄຸນ ໂທດນິດອນເຈົ້າ
ອັນໜຶ່ງຂ້າຂໍສືມມາເຈົ້າ ລຸງອາປ້າແມ່
ຢ່າໃຫ້ມີບາບເປື້ອງ ເຖິງຂ້າເມື່ອລຸນ
ອັນໜຶ່ງລູກຂໍສືມມາເຈົ້າ ລາຊະຄູກົນປະເສີດ
ກັບທັງເຖນຖ່າວພ້ອມ ເນນນ້ອຍຄູ່ກົນ
ປາງເມື່ອຂ້າໄດ້ເອົາຍັງເຂົ້າ ໄປທານຕັກບາດ
ມັນຫາກມີກາກພ້ອມ ຜິນກົ້ວຢູ່ໃນ
ຢ່າໄດ້ມີເວນຂ້ອງ ທຳກຳຫລາຍຊາດ
ຂໍໃຫ້ໝົດຊາດນີ້ ຢ່າຂ້ອງຕໍ່ໄປ
ອັນໜຶ່ງຂ້າຂໍສືມມາເຈົ້າ ມະເຫສັກສິດໃຫ່ຍ
ເຈົ້າຫາກຫລຽວລ່ຳຢ້ຽມ ຕົວຂ້າບໍ່ລືມ
ອັນໜຶ່ງຂ້າຂໍສືມມາທ້າວ ຊຸນລູຜົວມຶງ
ເຈົ້າຫາກຫຽວດຸ່ງດັ້ນ ຫານ້ອງຍາກແຄນ ອ້າຍເອີຍ

ຫລັງຈາກນາງອົ້ວ ໄດ້ກ່າວຄຳຂໍສືມມາຄາລະວະຕໍ່ຜູ້ມີພະຄຸນດ້ວຍປາດນ້ຳຕານອງໜ້າແລ້ວ, ນາງກໍໄດ້ເອົ້ນສັ່ງລາທໍ່ຜາສາດລາຊະວັງຕະຫລອດສວນດອກໄມ້ແລະອື່ນໆທີ່ນາງເຄີຍໄດ້ຢູ່ໄດ້ຊົມດັ່ງບົດກອນຂຽນວ່າ:

ຄ່ອຍຢູ່ດີເຢີຫໍນອນພ້ອມ ເມັງຊອນຊ້ອນເສື່ອ
ກູຈັກປະໄປ່ໄລ້ ຢ່າເສົ້າຄ່ອຍຢູ່ດີ
ຄ່ອຍຢູ່ດີເຢີຄຳແກ້ວ ມູງມະນີເຈັດຍອດ
ຂ້າຈັກໜີຈາກເຈົ້າ ໄປຕາຍແທ້ຄ່ອຍຢູ່ ດີ
ຄ່ອຍຢູ່ດີເຢີພານເງີນພ້ອມ ພານຄຳສັບພະສິ່ງ
ກັບທັງນ້ຳເຕົ້າແກ້ວ ຂັນຊ້ອນຄ່ອຍຢູ່ດີ

ຄ່ອຍຢູ່ດີເຢີປ່ອງອ້ຽມແກ້ວ ລາຍດອກບົວເຄືອ
ຍາມເມື່ອຮຽມຄອຍຜິກ ລ່ຳບານາຊ້ອນ
ຄ່ອຍຢູ່ດີເຢີລືມສິ່ງພ້ອມ ບວຍຄຳຊູແອ່ງ
ກູຈັກລະເຈົ້າໄວ້ ຢ່າເສົ້າຫມົ່ນຫມອງ
ນາງສັ່ງແລ້ວ ຍ້າຍອອກຕຽງທອງ
ເຖິງອາຊະໄນ ສັ່ງໄປດີ້ຄອຍ
ຄ່ອຍຢູ່ດີເຢີອາຊະໄນມ້າ ມຸງຊຸມຕົວປະເສີດ
ຍາມເມື່ອຮຽມຂີ້ຢອງ ຈົ໋ມຫລົນດອກດວງ
ອັນວ່າຄົມໃນທ້ອງ ເມືອງກາຍສະຫວັດຢູ່
ເພາະວ່າເທວະດາຊ່ວຍຍູ້ ນາງນ້ອຍເພື່ອເວນ
ນາງຈຶ່ງເອົາຕີນຍ້າຍ ເຖິງຫວານທາງອອກ
ທັງເລົ໋າເອີນ ສຽງ ຄ້ອຍສັ່ງຄືນ
ຄ່ອຍຢູ່ດີເຢີມານດາແກ້ວ ຊຸມຄາມເຫນືອເກດ ຂ້ອຍເອີຍ
ລູກຈັກຕາຍຈາກເຈົ້າ ວັນນ໋ ຄ່ອຍຢູ່ດີ
ຄ່ອຍຢູ່ດີເຢີຊຸນລູກຫ້າວ ຜົວແພງຫລາຍຊາດ
ນ້ອງຈັກຕາຍຈາກເຈົ້າ ວັນນ໋ ຄ່ອຍຢູ່ດີ ແດ່ທ້ອນ

ເມື່ອນາງອົ້ວສັ່ງທຸກສິ່ງທຸກຢ່າງເປັນທີ່ຮຽບຮ້ອຍແລ້ວກໍອອກຈາກປະຕູໄປ ສູ່ສວນດອກໄມ້ພ້ອມທັງສັ່ງລາສວນດອກໄມ້ດວ້ຍຈິດອາໄລອາວອນວ່າ ຄ່ອຍຢູ່ດີເຢີດອກໄມ້ການແກ້ວ ເກດກະນິກາທັງກຽງລົມດອກຢີກະດັນເຄົ້າບົວ ບົກພ້ອມບົວລອຍທອນມ່ອນຮຽມເອີຍ.

ເມື່ອສັ່ງດອກໄມ້ນານາຊະນິດ ລົບຖ້ວນແລ້ວກໍອອກເດີນທາງໄປສູ່ ປ່າ ຂະນະທີ່ໄປເຖິງປ່າກໍພິດີແຈ້ງເປັນມື້ໃຫ່ມ, ນາງໄປຮອດຕົ້ນຈວງຫອມທີ່ ພະ

ອິນປູກໄວ້ນາງກໍຫັກດອກໄມ້ຍໍໄຫວ້ກ່າວວອນຂໍໃຫ້ຕົ້ນຈວງຫອມພະອິນ ປູກໄວ້ ຈຶ່ງໄດ້ນ້ອມປາຍລົງມາເອົານາງໄປສູ່ສະຫວັນແດ່ທ້ອນ. ເທວະດາຮັກສາ ຕົ້ນຈວງຫອມພະອິນປູກຈຶ່ງເວົ້າຄອມນາງວ່າ ເຮົາບໍ່ເຄີຍອ່ອນນ້ອມເອົາຄົນ ຈັກເທື່ອນາງເອີຍ. ເມື່ອໄດ້ຟັງດັ່ງນັ້ນນາງຈຶ່ງລາຕົ້ນຈວງພະອິນປູກໜີໄປ ທາງໜ້າເລື້ອຍໆ.

ໃນຂະນະທີ່ນາງພວມຍ່າງໄປຕາມປ່ານັ້ນບັງເອີນມີນົກສາລິກາຜົວ ເມຍກັບລູກນ້ອຍນອນຢູ່ຮັງໄດ້ເຫັນນາງຈຶ່ງຖາມວ່າ ນາງເອີຍນີ້ເປັນຫຍັງ ຈຶ່ງເດີນດົ້ງເດີນປ່າຄົນດຽວນໍ? ນາງອົ້ວຈຶ່ງບອກນົກສາລິກາວ່າ ຍ້ອນມີ ເວນຮອບຄອບທັນຈຶ່ງໄດ້ເດີນປ່າມາຄົນດຽວ ໝາຍຈະໄປຫາຕົ້ນຈວງພິປູກເພື່ອໃຫ້ຕົ້ນຈວງໄດ້ນ້ອມເອົາຂຶ້ນສູ່ສະຫວັນ, ນົກສາລິກາຈຶ່ງເວົ້າວ່າໂອ! ເລື່ອງຈັ່ງຊີ້ຂໍໜ່ຽວຂ້ວອນຢ່າກະທຳທ້ອນ ໃຫ້ຄ່ອຍອົດຄ່ອຍເຍື້ອນຄືນເຂົ້າສູ່ເມືອງກ່ອນທ້ອນ. ນາງອົ້ວໄດ້ເວົ້າກັບນົກສາລິກາວ່າ ເລື່ອງນີ້ສູເຈົ້າທັງສອງ ຢ່າມາຫ້າມມາເຕືອນຂ້ອຍເທາະ ຊາດທີ່ເວນກຳນຳສະໜອງແລ້ວໃຜຊິ ມາຫ້າມຟັງ, ຂໍໃຫ້ສູເຈົ້າຈົ່ງມີອາຍຸໝັ້ນຍືນນັ້ນທ້ອນ ຢ່າພາກັນເຂົ້າປ່າຫາຫ່ຽວຫລາຍຈົ່ງຢູ່ຮັກສາລູກໃຫ້ໃຫຍ່ສູງ ຢ່າໃຫ້ສັດຕູມາປອງຮ້າຍໄດ້. ເມື່ອ ນາງເອັ້ນສັ່ງແລ້ວກໍອອກເດີນທາງຕໍ່ໄປ, ນົກສາລິກາຜົວເມຍໄດ້ເຫັນດັ່ງນັ້ນກໍພາກັນຮ້ອງໄຫ້ຮ່ຳໄຮນຳນາງເຖິງແມ່ນນົກສາລິກາຈະຮ້ອງໄຫ້ຮ່ຳໄຮ ແລະໜ່ຽວວອນປານໃດກໍຕາມ, ນາງກໍຍັງເດີນທາງໄປສູ່ຕົ້ນຈວງພິປູກດັ່ງ. ບົດກອນຂຽນວ່າ:

| | |
|---|---|
| ນາງກິນນຳທາງເຂົ້າ | ຈວງພິປອງປູກ |
| ຫົມບໍ່ນ້ຳ | ສະຖານກ້ວາງຮາບງາມ |
| ນາງຈຶ່ງຫັກດອກໄມ້ | ທຽນທູບສົມມາ |

ນາງກໍຍໍມືນົບ ກ່າວຄຳດູລະຫ້ອຍ
ບັດນີ້ຂ້າຂໍຍືນໄຫວ້ ຈວງພິປອງປູກ
ຂໍໃຫ້ຍອດຄ່ອນນ້ອມ ເອົາຂ້າສູ່ສະຫວັນ ແດ໊ຫອນ
ເມື່ອນັ້ນຈວງພີ້ຄອນ ປາຍລົງເອົາອ່ອນ
ນາງກໍເອົາໄຫມຄຳຮັດຊ້ອງ ຄໍຕີນຫມັ້ນຜູກດີ
ນາງກໍຈັບຈວງໄວ້ ຄຶດຮອດຊຸນລູ
ນາງກໍຈາສຽງໃສ ສົ່ງໄປຫາທ້າວ
ວ່າໂອນໍສາຍຄໍແກ້ວ ຊຸນລູຜົວນຶ່ງ ກູເອີຍ
ຄັນວ່າເຈົ້າບໍ່ຢາກໃຫ້ຂ້ອຍຕາຍຈາກເຈົ້າ ດຽວນີ້ຣີບດ່ວນ ມາໄວຫ້ອນ
ນາງກ່າວແລ້ວ ຈວງດິດເມືອເທິງ
ນາງກໍມໍລະນາຕາຍ ທ່ຽງວັນຈິງແທ້
ນາງກໍໄປເຖິງເຫົ້າ ລິນຄຳລ້າງເລືອດ ແທ້ແລ້ວ
ນາງກໍພົກປ່ອງຢ້ຽມ ຄອຍທ້າວສ່ອງທາງ ເຈົ້າເອີຍ

## 9. ພະອິນໃຫ້ກາດຳໄປບອກຂ່າວ.

ຕອນເຊົ້າມື້ນັ້ນ, ຊຸມສາວໃຊ້ຕ່າງກໍພາກັນສົນລະວົນວຸ່ນວາຍເປັນ ການໃຫຍ່ ເພາະວ່າບໍ່ເຫັນນາງອົ້ວຕື່ນນອນຄືກັບທຸກໆວັນ. ເຂົາຈຶ່ງພາກັນເຂົ້າໄປຊອກເບິ່ງຢູ່ໃນຫ້ອງນອນຂອງນາງ ເປີດຜ້າກັ້ງຊອກຫາກໍບໍ່ເຫັນ. ດັ່ງ ນັ້ນເຂົາຈຶ່ງພາກັນເອີ້ນຫານາງ ສຽງແຊວໆທົ່ວທັງບໍລິເວນຜາສາດແຕ່ວ່າ ຮ້ອງເອີ້ນແນວໃດກໍມິດຈ້ອຍ. ເຂົາຟ້າວໄປບອກໃຫ້ແມ່ຂອງນາງຮູ້ວ່າບັດນີ້ ບໍ່ເຫັນນາງອົ້ວຈັກວ່າໄປທາງໃດບໍ່ມີໃຜຮູ້ ເພາະວ່າລຸກມື້ເຊົ້າບໍ່ເຫັນ ຫນ້າຫນ່ອມພະນາງ.

ເມື່ອຜູ້ເປັນແມ່ໄດ້ຮູ້ດັ່ງນັ້ນຈຶ່ງເຂົ້າໄປຊອກຫານາງຢູ່ບ່ອນນອນດ້ວຍ ຕົນເອງແຕ່ກໍບໍ່ເຫັນນາງ. ຜູ້ເປັນແມ່ຄິດສົງໄສແຕ່ຢ່າງດຽວຄື ນາງອົ້ວຕ້ອງລັກໄປຫາຂຸນລູຜູ້ເປັນຊູ້ຢ່າງແນ່ນອນ, ໂດຍບໍ່ພິຈາລະນາຮີ້ນຕອງແນວໃດຜູ້ເປັນແມ່ໄດ້ແຕ່ປ້ອຍດ່ານາງວ່າເຮັດຂາຍຫນ້າຂາຍຕາ. ຄາວນີ້ຈະໃຊ້ລົມໄປ ຊື້ເອົາຕົວມັນມາມອບໃຫ້ຂຸນລາງ ໃຫ້ມັນຮູ້ແລ້ວຮູ້ລອດໄປສາດກ່ວາ. ເວົ້າແລ້ວກໍຟ້າວກັບເມືອຫໍຜາສາດຂອງຕົນ.

ຕໍ່ມາເສນາອາມາດທຸກຫມູ່ເຫລົ່າກໍຟ້າວພາກັນເຂົ້າເຝົ້າພະນາງທອງ ສີແມ່ຂອງນາງອົ້ວ, ພະນາງທອງສີກໍຣາຍໃຫ້ເສນາອາມາດຕ່າງໆນານາ ທັງເວົ້າວ່າບັດນີ້ຍິງຂີ້ຮ້າຍໄປຊົມຊູ້ຕ່າງເມືອງ ຂໍໃຫ້ຂຸນແພງແລະຂຸນ ທອງ

ຈຶ່ງຟ້າວພາກັນໄປໄຖຊື້ເອົາໄດ້ຣິບມາ, ຖ້າຫາກວ່າເຂົາບໍ່ມອບນາງໃຫ້ ຈຶ່ງຟ້າວກັບມາບອກ, ເຮົາຈັກເຕົ້າກຳລັງໄປຕໍ່ສູ້ຍາດແຍ່ງເອົານາງຄືນມາ ຈົນໄດ້. ເວົ້າແລ້ວພະນາງທອງສີກໍເອົາຄຳໃຫ້ຂຸນແພງພັນໜຶ່ງເພື່ອນຳ ໄປໄຖ່ຖອນເອົານາງອົ້ວ.

ເມື່ອຂຸນແພງແລະຂຸນທອງໄດ້ຮັບຄຳຈາກພະນາງທອງສີແມ່ຂອງນາງອົ້ວແລ້ວກໍພາກັນອອກເດີນທາງໄປສູ່ເມືອງກາສີທັນທີ. ເມື່ອໄປເຖິງຂຸນກໍພາກັນເຂົ້າໄປຫາພະນາງຄຳພັນແມ່ ຂອງທ້າວຂຸນລູ, ຂຸນທັງສອງໄດ້ຖາມແມ່ຂອງທ້າວຂຸນລູວ່າ ໄດ້ເຫັນນາງອົ້ວມາພີ້ແນ່ບໍ? ຖ້າໄດ້ເຫັນຂໍໃຫ້ບອກໂດຍຊື່ບໍ່ໃຫ້ປິດອຳ, ອັນນີ້ແມ່ນຄຳສັ່ງຂອງນາງພະນາງທອງສີດັ່ງບິດກອນຂຽນວ່າ:

ຂຸນກໍຍິ້ມນ້ອມ ໄຂຄຳຕ້ານກ່າວ
ອັນວ່ານາງມາດນ້ອຍ ມາພີ້ດັ່ງລື
ຄັນວ່ານາງມາແທ້ ໄຂຄຳເວົ້າຊື່ ຈຶ່ງເຫັນ
ອັນນີ້ພະແມ່ເຈົ້າ ທາງນັ້ນສັ່ງມາ
ວ່າຈັກວາງນາງໃຫ້ ທັງສອງເປັນຄູ່ ກັນແລ້ວ
ກໍບໍ່ຂັດແບ່ງເບື້ອງ ສະຫາຍແກ້ວທໍ່ໃຈ
ເມື່ອນັ້ນນາງເມືອງຕ້ານ ໄຂຄຳເວົ້ານ່ອນ
ເຮົາບໍ່ເຫັນອ່ອນນ້ອຍ ມາພີ້ຮອດເຮົາ ດອກນາ
ຄັນວ່ານາງມາແທ້ ລືຊິຂືນຂັດທ່ານ ເປັນເດ
ຄັນວ່າມາຮອດຂ້ອຍ ຄຳລ້ານຊິສັ່ງເມືອ ແທ້ແລ້ວ

ຂະນະທີ່ພວມສົນລະວົນກັນຢູ່ນັ້ນ ຂຸນລູກໍເຂົ້າມາຖາມທັງບອກໃຫ້ ຟ້າວຊອກຫານາງໃຫ້ເຫັນໄວໆ. ຕໍ່ຈາກນັ້ນຂຸນທັງສອງກໍພາກັນລາພະນາງຄຳພັນແລະທ້າວຂຸນລູ ຂີ່ມ້າເດີນທາງກັບໂດຍດ່ວນ. ເມື່ອເຖິງ ເມືອງກໍ ເຂົ້າ

ລາຍງານໃຫ້ພະນາງທອງສີໄດ້ຮູ້ຂ່າວວ່າ ພວກຕົນໄດ້ເດີນທາງໄປ ເຖິງເມືອງກາສີແລະໄດ້ຖາມນຳແມ່ທ້າວຂຸນລູພ້ອມດ້ວຍທ້າວຂຸນລູເອງ ກໍ ບອກວ່າບໍ່ເຫັນນາງໄປທາງນັ້ນແຕ່ຢ່າງໃດ. ແມ່ທ້າວຂຸນລູນັ້ນເມື່ອໄດ້ຮູ້ຂ່າວ ວ່າບໍ່ເຫັນນາງອົ້ວກໍຈຶ່ງໄດ້ແຕ່ລູບເອິກຕີຊວງທັງຈົ່ມວ່າ ເປັນແນວໃດຈຶ່ງ ເຈົ້າຮ້າຍໃຫ້ນາງເສຍອົກເສຍໃຈເຖິງກັບລັກໜີ, ບັດນີ້ເສຍອ່ອນນ້ອຍໄປແທ້ ທີໃດນໍເດ. ຄັນວ່ານາງມາພໍ້ຄຳມີແສນທ່ອນ ເຮົາບໍ່ຂິ້ນແຈ່ມເຈົ້າສະຫາຍແກ້ວອິສິ້ງ ເມື່ອວ່າເດ. ຂຸນແພງແລະຂຸນທອງລາຍງານຕື່ມວ່າຂະນະທີ່ໂສກັນຢູ່ນັ້ນທ້າວຂຸນລູກໍອອກມາແລ້ວສັ່ງໃຫ້ຂ້າທັງສອງຟ້າວຕິດຕາມຊອກຫານາງ ໃຫ້ພົບໄວໆດັ່ງນັ້ນຂ້າທັງສອງຈຶ່ງຟ້າວ ເດີນທາງກັບມາພໍ້ກ່ອນ, ທ້າວຍັງສັ່ງຕື່ມ ວ່າເມື່ອກັບຮອດເມືອງແລ້ວໃຫ້ເຕົ້າກຳລັງອອກຊອກຫານາງກ່ອນຫລືວ່າ ນາງໄປຫາທ້າວຂຸນລາງພຸ້ນບໍ່, ຖ້າຫາກໄປຊອກທາງໃດກໍບໍ່ເຫັນໃຫ້ສົ່ງຂ່າວ ໄປຫາທ້າວກ່ອນເພື່ອວ່າຈະໄດ້ຫາທາງແກ້ໄຂຊ່ວຍກັນ.

ເມື່ອພະນາງທອງສີໄດ້ຟັງຂຸນທັງສອງລາຍງານດັ່ງນັ້ນກໍຮ້ອນໃຈຈຶ່ງຈັບຄ້ອນມາຕີກອງເພື່ອຮຽກໂຮມກຳລັງອອກຕິດຕາມຊອກຫານາງອົ້ວເປັນການດ່ວນ. ຂະບວນເສນາອາມາດອອກຕິດຕາມຫານາງອົ້ວໄດ້ແບ່ງກັນໄປຫລາຍຈຸດຫລາຍທາງ, ໂດຍສະເພາະຂຸນຜູ້ເປັນຫົວໜ້ານັ້ນໄດ້ເດີນທາງໄປສູ່ເມືອງຂອງທ້າວຂຸນລາງ. ສຳລັບທ້າວຂຸນລາງນັ້ນເມື່ອໄດ້ຮັບຂ່າວຈາກຂຸນກໍຕົກໃຈຟ້າວສັ່ງໃຫ້ເສນາອາມາດບ່າວໄພ່ຂອງຕົນອອກຊອກຫານາງທົ່ວທຸກ ຮ່ອມຫ້ວຍຮາວເຂົາ ຂຶ້ນພູສູງລົງຕາດຄ້ອຍ, ແຕ່ລະຄົນທີ່ເປັນລູກນ້ອງຂອງ ທ້າວຂຸນລາງນັ້ນ ພາກັນຊອກຫານາງຕາມຄຳສັ່ງຂອງນາຍຢ່າງເອົາຊີວິດ ເປັນເດີມພັນ, ບາງຄົນກໍຖືກກ້ອນຫີນກິ້ງທັບແອວ, ບາງຄົນກໍຖືກງູຮ້າຍຕອດ ແລະບາງຄົນກໍຖືກເສືອຂົບຕາຍແລະອື່ນໆ. ແຕ່ກໍສຸດປັນຍາຫານາງບໍ່ພົບຈຶ່ງ ກັບ

ໄປລາຍງານໃຫ້ຂຸນລາງຮູ້, ຝ່າຍຂຸນລາງກໍເສຍອົກເສຍໃຈຫາອັນປຽບບໍ່ໄດ້ ດັ່ງບົດກອນຂຽນວ່າ:

ເມື່ອນັ້ນຂຸນລາງທ້າວ ທົນຫວາຍໃຈຊິຂາດ ຕາຍແລ້ວ
ມືຟາດເຫັ້ງ ຫອງໃຫ້ຮ່ຳໄຮ
ໂອນໍ ມາເສຍດາຍນີ້ມນາງອົ້ວ ຂາວງາມງຸມຈໍ່
ແມ້ງວາງຂາດໃຕ້ ກູແລ້ວແຕ່ເຫິງ
ກູກໍໝາຍເອົານົງມາສ້າງ ພູຣອມຖາງປ່າ ອົ້ວເອີຍ
ກູກໍໝາຍເອົານົງມາສ້າງ ພູສູງແສນງ່ອນ ອົ້ວເອີຍ
ຍູ່ຫ່າງນອນສະແຄງແໜ້ນ ຫົວມັນທັງເຜືອກ
ຍູ່ຫ່າງນອນເກືອກກິ້ງ ກິນເຫລົ້າສ່ວາງໃຈ
ບັດນີ້ນົງກໍໜີໄປລ໌ ດົງໜາແສນຍ່ານ ຊິໃດເດ
ຄົນບໍ່ໄດ້ພົບໜ້າ ກູນັ້ນກໍ່ສ່ວນຕາຍ
ລາງກໍອຸ້ມລະຫາໄຫ້ ເຊຊວນປົບປ່ອງ ໄປແລ້ວ
ມັນກໍຜັນປ່ອງເຂົ້າ ເມືອງກ້ວາງຄັ່ງຄົນ ເຈົ້າເອີຍ

ຢ້ອນກ່າວເຖິງຊາວເມືອງນະຄອນກາຍອອກຊອກຫານາງອົ້ວຈົນໝົດທຸກແຫ່ງຫົນກໍບໍ່ພົບນາງເລີຍ. ດັ່ງນັ້ນເຂົາຈຶ່ງເຂົ້າລາຍງານໃຫ້ພະນາງທອງສີຮູ້ພ້ອມທັງສະເໜີວ່າຂໍໃຫ້ນຳເອົາໝໍໂຫນມາທຳນາຍຫາຍທັກເບິ່ງດີຮ້າຍປະການໃດ. ເມື່ອພະນາງທອງສີໄດ້ຟັງດັ່ງນັ້ນກໍສັ່ງໃຫ້ໝໍໂຫນມາທຳນາຍເບິ່ງວ່າຈະດີຈະຮ້າຍປະການໃດກັນແທ້, ເມື່ອໝໍໂຫນລົງເລກເບິ່ງດວງຊາຕາຂອງນາງຈຶ່ງຂາບທູນໃຫ້ພະນາງທອງສີໄດ້ຮູ້ວ່າ ປັນເຄາະແຈ່ມເຈົ້າ ບຸນເກື້ອເກິ່ງຕາຍ, ດວງຊາຕາຂອງນາງສູນຫາຍກິດຂາດເທວະດາຢູ່ຟ້າຍໍ ໄວ້ແຈບຈົນ, ໝໍໂຫນກ່າວວ່າຄວນທີ່ຈະໄດ້ທູບໄດ້ທຽນໄຫວ້ວອນເຖິງພະອິນໃຫ້

ຊ້ວານຊ່ອຍຍັງຈັກຮູ້ຂ່າວ ເຈົ້ານາງນ້ອຍເມື່ອລຸນ.

ເມື່ອພະນາງທອງສີໄດ້ຟັງດັ່ງນັ້ນ ກໍຟ້າວສັ່ງໃຫ້ເຂົາຕົກແຕ່ງເຄົາ ດາ ຕາມທີ່ໝໍໂຫນບອກ, ນາງຫັງສັ່ງຫັງໄຫ້ນ້ຳຕາອາບແກ້ມດ້ວຍຄວາມ ເປັນຫ່ວງເປັນໃຍຫານາງອົ້ວຜູ້ເປັນລູກແຫບໃຈຈະຂາດຕາຍ. ເມື່ອເຂົາຕົກແຕ່ງເປັນທີ່ຮຽບຮ້ອຍແລ້ວພະນາງທອງສີກໍຍື່ນມືໃສ່ຫົວ ໄຫ້ວອນເຖິງພະອິນຂໍ ໃຫ້ຊ່ອຍບອກບ່ອນນາງຢູ່ໃຫ້ຮູ້ແນ່ນ້ອນ. ຫລັງຈາກໄຫ້ວອນເຖິງພະອິນແລ້ວ ກໍໄດ້ແຕ່ຮ້ອງໄຫ້ຮ່ຳໄຮອາໄລອາວອນຫາລູກດ້ວຍຄວາມທົນທຸກນ້ຳຕາບໍ່ເຫືອດໜ້າດັ່ງບົດກອນຂຽນວ່າ:

ໂອນໍ ສາຍໃຈຂ້ອຍ ທູນຫົວເຈົ້າແມ່ ກູເອີຍ
ບັດນີ້ເຈົ້າຈັກລະແມ່ໄວ້ ຕາຍຄ້າງແຕ່ໃພ່ ແລນໍ
ໃຫ້ເຈົ້າຄືນມາຫ້ອງ ປາງທອງຫາແມ່ ອຸ່ນເອີຍ
ແມ່ຍິ່ງຂິນແຈ່ມເຈົ້າ ໃຈນ້ອຍທໍ່ໄຍ ດອກນາ
ໂອນໍ ເຈົ້າຫາກມີໃຈກ້ຽວ ຂຸນລູບາບ່າວ ກໍດີ
ແມ່ຈັກປຸນປູກໃຫ້ ສອງເຈົ້າຄູ່ກັນ ລູກເອີຍ
ໃຫ້ເຈົ້າຄືນມາຫ້ອງ ມານດາໄດ້ສັ່ງ
ຄັນວ່າເຈົ້າໜີຈາກຂ້ອຍ ພໍໄດ້ປາກດອນ ແມ່ທ້ອນ
ນາງກໍຕີອົກໄຫ້ ໃນປາງກັ້ງເກື້ອນ
ຫັງເລົ່າລະເຂົ້ານ້ຳ ວາງໄວ້ບໍ່ລ່ຳຄອຍ ເຈົ້າເອີຍ

ບໍ່ພຽງແຕ່ພະນາງທອງສີຜູ້ເປັນແມ່ຂອງນາງອົ້ວທີ່ໝັ້ນທີ່ຮ້ອງໄຫ້ຮ່ຳໄຮຫາ ຊຸມສາວສະໜົມກົມມະວັງທຸກຄົນຢູ່ໃນໂຮງກໍພາກັນໄຫ້ເປັນແຊວງ. ພໍເຖິງນີ້ ໃຫ່ມມາທີ່ນສິລາບາດໄຫ້ພະອິນເຈົ້າລວດແຂງ ພະອິນຈຶ່ງຫລຽວເບິ່ງກໍ ເຫັນພະນາງທອງສີໄຫ້ວອນຫາ, ດັ່ງນັ້ນພະອິນຈຶ່ງສັ່ງໃຫ້ກາດຳລົງມາບອກຂ່າວ

ເພື່ອໃຫ້ຮູ້ວ່າສາບຂອງນາງອົ້ວຢູ່ບ່ອນໃດກັນແທ້, ເມື່ອກາດຳໄດ້ຮັບຄຳ ສັ່ງດັ່ງນັ້ນກໍຟ້າວບິນໄປຈັບເທິງຍອດພາສາດຂອງພະນາງທອງສີແມ່ຂອງ ນາງອົ້ວແລ້ວກໍບອກໃຫ້ຮູ້ເລື່ອງລາວຕ່າງໆດັ່ງບົດກອນຂຽນວ່າ:

ກາກໍໄປຈັບກົ້ ທໍ່ຄຳພະແມ່ ນາງນັ້ນ
ກາກໍປາກກ່າວຕ້ານ ສຽງຈ້ອຍດັ່ງຄົນ
ວ່າຈັກແມ່ນລູກໃຜຜູ້ ຄີງອ່ອນປານເທົາ
ເລົ້າຄີງຂາວ ດັ່ງນອນປູຜ້າຍ
ຕາຍໃນກົ້ ຈວງພີປອງປູກ
ຕາຍແຕ່ເຈົ້າ ນາງນ້ອຍຜູ້ດຽວ
ນາງກໍຫັດດອກໄມ້ ປັກປິ່ນຈອມຄຳ
ແພ ແດງດຳ ສາດຄີງດູລະຫ້ອຍ
ກູກໍເອົາກັບລ້ອມ ວຽນນາງຫລາຍເລື່ອ ຈິງແລ້ວ
ກິນກໍກິນບໍ່ໄດ້ ງອຍໄມ້ເພິ່ງດາຍ
ຄັນວ່າແມ່ນລູກທ່ານແທ້ ສັ່ງບໍ່ໄປເອົາ ເຈົ້າເຮີຍ
ຄັນວ່ານານຫລາຍວັນ ສາບນາງບໍ່ມີຮູ້
ພໍແຕ່ກາດຳຕ້ານ ຂານຄຳບົນບອກ ດີແລ້ວ
ກາກໍເວົ້າທໍ່ນັ້ນ ພັນຜ້າຍລ່ວງໜີ ເຈົ້າເຮີຍ

ເມື່ອພະນາງທອງສີແມ່ຂອງນາງອົ້ວ ໄດ້ຟັງຄຳກາດຳມາບອກຂ່າວ ເຖິງກັບເປັນລົມກິ້ງເກືອກໄປມາ, ແຕ່ພະນາງກໍແຂງໃຈຍ່າງເຊຊາຍເຊຂວາໄປຫາມ້າແລ້ວຂຶ້ນຂີ່ມ້າອອກເດີນທາງ ໄປສູ່ຕົ້ນຈວງພີປູກຕາມທີ່ກາດຳນຳ ໃຫ້ຂ່າວໂດຍມີເສນາບໍລິວານຕິດຕາມໄປນຳຢ່າງມາກມາຍກ່າຍກອງ.

ພໍໄປເຖິງຕົ້ນຈວງພີປູກກໍໄດ້ເຫັນຮ່າງຂອງນາງອົ້ວແຂວນຫ້ອຍຍງ່າ ຈວງ

ຢູ່. ນານດາລົ້ນຕິໜວງໃຈຈັກຂາດຟູງ ເສນາອາມາດຈຶ່ງເອົານ້ຳດອກໄມ້ເປົ່າ ຈຶ່ງຟື້ນຄືນມາແລ້ວກໍຮ້ອງໄຫ້ຮ່ຳໄຮດ້ວຍຄວາມເສຍອົກເສຍໃຈທີ່ສູນເສຍລູກສາວຜູ້ປະເສີດໄປໃນຕາວນ້. ພວກເສນາອາມາດໄດ້ພາກັນປີນຂຶ້ນໄປ ແກ້ເຊືອກເອົາຮ່າງຂອງນາງອ້ອລົງມາ. ເມື່ອຮ່າງລົງສູ່ດິນແລ້ວພະນາງທອງສີຜູ້ເປັນແມ່ກໍຟ້າວເຂົ້າກອດອຸ້ມເອົາຮ່າງອັນໄຮ້ວິນຍານຂອງລູກ, ຮ່າງ ຂອງນາງຍັງບໍ່ທັນແຂງເທື່ອ ແລະຍັງຫອມກິ່ນຄູ້ກິ່ນຈັນຢູ່, ໃບໜ້າຂອງນາງກໍຍັງສົດຊື່ນຢູ່ຄືດັ່ງວ່າຈັກຫົວໃສ່ໜ້າແມ່, ເຮັດໃຫ້ພະນາງທອງສີເຫັນທ່າວ ຕາຍສະແດດນ. ພວກເສນາທັງຫລາຍນັ້ນບາງຄົນກໍອົມເອົານ້ຳມາເປົ່າຮ່າງຂອງນາງອ້ອ, ບາງຄົນກໍເອີ້ນຂວັນຂອງນາງໃຫ້ມາຢູ່ເນື້ອຢູ່ໂຕ.

ສຳລັບທ້າວຂຸນລາງນັ້ນເຖິງແມ່ນໄດ້ພົບວ່ານາງອ້ອໄດ້ເສຍຊີວິດແນວນັ້ນແລ້ວກໍຕາມ ທ້າວກໍຍັງເຂົ້າກອດປາຍເອົາແຂນຂອງນາງຂຶ້ນມາລູບມາ ດົມດ້ວຍຄວາມຮັກອັນດູດດື່ມ. ແຕ່ວ່າເວນໄດ້ນຳເຖິງຕົວຂອງທ້າວຂຸນລາງແຜ່ນດິນຈຶ່ງຍະສຸບເອົາຂຸນລາງລົງໄປຮັບກຳຢູ່ອະເວຈີໜີ້ໃຫ່ຍ ເພາະວ່າ ຂຸນລາງນັ້ນແມ່ນເທວະທັດຜູ້ຄອຍຕິດຕາມກໍ່ກຳທຳເຂັນຕໍ່ພະໂພທິຍານ (ຂຸນລູ ) ແຜ່ນດິນໄດ້ຍະສຸບເອົາຕົວຂອງຂຸນລາງໄປຕໍ່ໜ້າຕໍ່ຕາຂອງພະນາງທອງ ສີຜູ້ເປັນແມ່ຂອງນາງອ້ອ ເຮັດໃຫ້ພະນາງທອງສີສຳນຶກໄດ້ວ່າຂຸນລາງ ນັ້ນແມ່ນເທວະທັດຜູ້ຈອງເວນແທ້, ດັ່ງນັ້ນພະນາງທອງສີຈຶ່ງໄດ້ແຕ່ຄິດຜິດ ຫວັງໃຫ້ກັບຕົນເອງແລ້ວໄຫ້ສະອຶກສະອື້ນທັງຈົ່ມຄິດເສຍດາຍນາງອ້ອທີ່ໄດ້ ຕາຍໜີຈາກ ຈຶ່ງເປັນຄວາມຜິດພາດທີ່ພະນາງທອງສີໄດ້ສ້າງຂຶ້ນກັບນາງ ອ້ອພະນາງທອງສີໄດ້ແຕ່ຄິດຕຳນິຕິຕຽນໃນຄວາມບໍ່ຮອບຄອບຂອງຕົນເອງ ຈົນສູນເສຍລູກສາວທີ່ແກ້ວທີ່ແຫວນໄປ, ຖ້າຫາກວ່າຕົກລົງເອົານາງມອບໃຫ້ຂຸນລູກໍຈະບໍ່ເສຍລູກສາວໄປຄືແນວນີ້.

ຕໍ່ມາ ເຂົາກໍຕັດໂກດແກ້ວໃສ່ຄາບຂອງນາງອົ້ວແລ້ວກໍນິມົນພະສົງມາ ໃຫ້ບຸນ, ພະນາງຫອງສີເອງກໍໄດ້ສະຫລະຊັບອອກທຳບຸນໃຫ້ທານເປັນການໃຫຍ່ ໂອກາດດຽວກັນນັ້ນກໍແຕ່ງໃຫ້ຂຸນນຳສານໄປແຈ້ງຂ່າວໃຫ້ພະນາງຄຳພັນ ຜູ້ເປັນສະຫາຍຮັກພື່ອນດ້ວຍທ້າວຂຸນລູໃຫ້ມາຮ່ວມໃນງານສົບ ພ້ອມທັງໃຫ້ ນິມົນພະສົງທາງເມືອງກາສີ ແລະຊ່າງແຕ້ມມາຮ່ວມພິທີບຳພອນ. ຝ່າຍ ພະນາງຄຳພັນແມ່ຂອງທ້າວຂຸນລູ ເມື່ອໄດ້ຮັບຂ່າວກໍຕີອົກຊົກຫົວສະຫລົບ ໄປ ດັ່ງບົດກອນຂຽນວ່າ:

ເມື່ອນັ້ນນາງເມືອງໄດ້ ຍິນຄຳຂຸນກ່າວ
ມືຟາດເທັ້ງ ຫວງມ້າງສະເດີດຕາຍ ເຈົ້າເອີຍ

## 10. ຂຸນລູຕາຍຕາມນາງອົ້ວ.

ຂະນະທີ່ພະນາງຄຳພັນແມ່ຂອງທ້າວຂຸນລູພວມໂອ້ລົມກັບຂຸນຈາກ ເມືອງນະຄອນກາຍຢູ່ນັ້ນ, ທ້າວຂຸນລູກໍອອກຈາກຫ້ອງນອນມາຫາແລ້ວເອົາ ສານຂອງແມ່ນາງອົ້ວທີ່ຂຽນມາບອກຂ່າວນັ້ນມາອ່ານເບິ່ງເນື້ອໃນໃຈຄວາມຂອງສານ. ຫລັງຈາກອ່ານຮູ້ເລື່ອງແລ້ວນັ້ນທ້າວຂຸນລູກໍຟ້າວກັບເຂົ້າສູ່ຫ້ອງນອນຂອງຕົນແລ້ວຄິດໄຝມາວ່າ ບັດນີ້ນາງອົ້ວຫາກເມືອສູ່ຫ້ອງສະຫວັນຟ້າ ກ່ອນກູແລ້ວ ດັ່ງບົດກອນຂຽນວ່າ:

ເມື່ອນັ້ນຂຸນລູທ້າວ ມາເປືອງຖາມເຫດ
ມີເຂັ່ຍແກ້ ສານນັ້ນອ່ານດູ
ທ້າວກໍຕຶງຕາງເຂົ້າ ບັນທົມຄຶດທີ່
ບັດນີ້ນາງຫາກເມືອສູ່ຟ້າ ສະຫວັນພຸ້ນກ່ອນກູ ແລ້ວເດ
ທ້າວຮ່ຳແລ້ວ ບາຍເອົາແວ່ນມາແຍງ
ເຫັນແຕ່ເງົານາງງາມ ຢູ່ທຽມບາທ້າວ
ແຕ່ນັ້ນພິຫູງເຂົ້າ ສູນໃຈເປັນບ້າບ່ອງ
ທ້າວກໍນຶກງກັ້ນ ບາທ້າວສິ່ນສາຍ
ທ້າວກໍບາຍມີດໄດ້ ມາສຽບແທງຄໍ
ບາກໍມໍລະນາຕາຍ ລ່ວງເມືອເມືອງຟ້າ

ເມືອເຖິງເຫົ້າ ລີນຄຳລ້າງເລືອດ
ບາກໍເຫັນອ່ອນອົ້ວ ຍັງໝັ້ນຢູ່ດີ ເຈົ້າເຮີຍ

ເມື່ອທ້າວຂຸນລູແທງຄີຕາຍແລ້ວ ກໍໄດ້ໄປພົບກັບນາງອົ້ວຢູ່ເມືອງຟ້າ ສະຫວັນ, ນາງອົ້ວເອງກໍມີຄວາມດີໃຈທີ່ໄດ້ພົບກັບທ້າວຂຸນລູຜົວນຶ່ງຂອງຕົນ ຈຶ່ງໄດ້ຕິດຕາມມາຫານາງ. ທັງສອງພາກັນຂຶ້ນຢູ່ວິໄຊຍົນພາສາດ ສະໜົມໜຸ່ມເໜົ້າເຫັນເຈົ້າຊື່ນຊົມ, ບາງພ່ອງເອົາຈັນຄຸ້ມມະເສນໂລມລູບ, ບາງພ່ອງຫາເສື້ອຜ້າຖວາຍເຈົ້ານຸ່ງທົງ, ບາງພ່ອງຍໍພາເຂົ້າຖວາຍພະອົງສອງ ອ່ອນ ບາງພ່ອງຢູ່ຈົ້ມໃກ້ສອງເຈົ້າແກ່ວງວີ, ບາງພ່ອງມີຕ໌ຕ້ອງມະໂຫລີປະສົງເສບ ເພາະວ່າພວກເຂົາມີຄວາມດີອົກດີໃຈທີ່ທັງສອງພະອົງ ໄດ້ໃຊ້ຊາດໃນເມືອງຄົນ ແລ້ວພາກັນຫລົບຫລ່າວຕ່າວມາ.

ຢ້ອນກ່າວເຖິງແມ່ຂອງທ້າວຂຸນລູ, ຂະນະທີ່ສົນລະວົນຢູ່ກັບຂ່າວການຕາຍຂອງນາງອົ້ວນັ້ນ ພະນາງຄຳຜັນກໍໄດ້ຍິນສຽງຜິດປົກກະຕິຢູ່ທີ່ຫ້ອງນອນຂອງທ້າວຂຸນລູ, ພະນາງຄຳຜັນຜູ້ເປັນແມ່ຈຶ່ງຟ້າວເຂົ້າໄປໄຂປະຕູສ່ອງເບິ່ງພາຍ ທີ່ປະກົດຕໍ່ສາຍຕາຂອງພະນາງກໍຄືຮ່າງທີ່ໄຮ້ວິນຍານຂອງຂຸນລູຜູ້ເປັນ ລູກນອນເກືອກກອງເລືອດຢູ່ຢ່າງໜ້າເວທະນາສົງສານ. ເມື່ອໄດ້ເຫັນສະພາບແນວນັ້ນ ພະນາງຄຳຜັນກໍຕົກໃຈຮ້ອງສຽງດັງກ້ອງໄປທົ່ວພາສາດ, ຝູງ ເສນາໄດ້ຍິນກໍພາກັນຫລຸຫລັ່ງຂຶ້ນໄປເບິ່ງຈຶ່ງເຫັນພະນາງຄຳຜັນກົ້ງເກືອກ ລີ້ເລືອຢູ່ກັບຮ່າງແລະກອງເລືອດຂອງທ້າວຂຸນລູ, ດັ່ງນັ້ນຂຸນຜູ້ໃຫຍ່ຈຶ່ງຕີ ກອງຕີຄ້ອງເປັນການໂຮມເສນາມຸນຕີແລະໄພ່ຟ້າປະຊາກອນ, ເມື່ອພວກເຂົາໄດ້ຍິນສຽງກອງສຽງຄ້ອງກໍພາກັນຫລັ່ງໄຫລເຂົ້າໄປຫາພະນາງຄຳຜັນ ເປັນການດ່ວນ. ເມື່ອໄດ້ເຫັນພະນາງຄຳຜັນຜູ້ເປັນແມ່ເມືອງກອດທ້າວຂຸນລູ ຈຶ່ງເສຍຊີວິດໄປແລ້ວນັ້ນເຂົາກໍຟ້າວໂຊມພະນາງອອກມາເປົ່າຫູ, ບາງຄົນກໍອົມ

ເອົານ້ຳມາເປົ່າ ຈິ່ງພະນາງຄຳພັນຮູ້ເມື່ອຄຶງຄືນມາ. ຟັງສຽງໄຫ້ຮ້ອງ ໄຫ້ຮ່ຳໄຮ ນຳທ້າວພີປານວ່າ ເມືອງກາສີຈັກແຕກມ້າງ ເປັນບ້າຮ່ວນເຮ.

ຕໍ່ມາ ເຂົາກໍເອົາຄາບຂອງທ້າວ ໄປສີ້ງໂສດດ້ວຍນ້ຳຈັນແລ້ວ ປະດັບ ເອ້ຍ້ອງຄາບຂອງທ້າວດ້ວຍສັງວານຄ້ອງ ຄໍບາແຖວຖີທິງ ເຄື່ອງມ້າດູລະຫ້ອຍຄັ່ງພີນ. ຝ່າຍພະນາງຄຳພັນຜູ້ເປັນແມ່ ໄດ້ເຫັນຄາບລູກຄືແນວນັ້ນກໍສະຫລົບ ເປັນລົມລົ້ມລົງທັງຮ້ອງ ໄຫ້ຮ່ຳໄຮຫາທ້າວບໍ່ຂາດສົບຂາດປາກດັ່ງບົດກອນຂຽນວ່າ

ໂອນໍເຈົ້າແມ່ຕາຍຄອບທ້າວ ຊຸນລາງບັງບຽດ ແມ່ນໍ
ຝູງລູງຕາພົ້ນອງ ໃຜກໍໄຫ້ຈົ່ມຫາ
ເຈົ້າແມ່ລະບ້ານໄວ້ ເປັນປ່າດົງດອນ
ສັງເລົ່າໄລເມືອງປະ ເປົ່າແປນເປັນຮ້າງ
ວາງແມ່ເນົາໃນທ້ອງ ຄາເມືອງດອນໄພ່
ເຈົ້າສັງລະແມ່ໄວ້ ເປັນໝ້າຍຢູ່ຜູ້ດຽວ ດໍນໍ
ເຈົ້າກໍເປັນກ້ຳຜາ ຢູ່ດອນແມ່ມານດາ
ສັງເລົ່າໄລລາປະ ແມ່ມານດາໄວ້
ເຈົ້າຊິໄລເມືອງຖຸມ ຄວາມດຽວບໍ່ເອີ້ນສັ່ງ
ນາງສະຫນົມມາກລົ້ນ ສັງເຈົ້າບໍ່ສັ່ງລາ ແມ່ເດ
ເຈົ້າແມ່ຕາຍຍ້ອນກ້ວຍສອງທິວ ຕາຍຍ້ອນໂຍນອີ້ວ ວາງເມືອງ
ແປນເປົ່າ
ຕາຍຍ້ອນໝາກນ້ຳເຕົ້າ ແຂວນຫ້ອຍຢູ່ຫວ່າງອາງ ແມ່ນໍ
ບັ໋ດນັບເສຍເຊື້ອ ກາສີແປນເປົ່າ ແມ່ນໍ
ເຈົ້າຫາກລະແມ່ໄວ້ ເປັນໝ້າຍປ່ອຍພອຍ ຊຸນລູເອີຍ

ຕໍ່ມາຊຸນສີນຈຶ່ງເຂົ້າໄປຂາບທູນວ່າຂໍແມ່ຈົ່ງໄດ້ພິຈາລະນາຕາມຄຳທີ່ ໜີ

ໂຫນໄດ້ທຳນາຍເອົາໄວ້ວ່າ ທ້າວຕ້ອງຕາຍແຕ່ເວລາຍັງຫນຸ່ມນ້ອຍຢູ່ ມິໄດ້ສືບເມືອງ. ແນວໃດທ້າວກໍໄດ້ຕາຍໄປແລ້ວ ຂໍພະແມ່ຈົ່ງພາຝູງຂ້າທັງຫລາຍກິນທານຫາທ້າວດີກ່ວາແມ່ເອີຍ, ອັນທ້າວຫັ້ນຖືວ່າແມ່ນເວນກຳມາຣອດແລ້ວລືຊື້ທານຫ່ອນເປັນ ຝ່າຍພະນາງຄຳພັນໄດ້ຍິນຂຸນຂາບທູນແນວນັ້ນກໍຄ່ອຍ ໆ ຫາຍຈາກຄວາມໂສກເສົ້າ.

ຫລັງຈາກນັ້ນພະນາງຄຳພັນກໍບອກໃຫ້ຂຸນແຫ່ງເມືອງນະຄອນກາຍ ເດີນທາງກັບຄືນໄປຄອບພະນາງທອງສີຜູ້ເປັນພະສະຫາຍວ່າບັດນີ້ຂຸນລູທ້າວຕາຍນຳອົ້ວຄ່ຽນຈິງແລ້ວ ຜັດເຂດໄວ້ເອົາເຂົ້າເຣ່ວດຽວ (ເຣ່ວ=ປ່າຊ້າ) ເມື່ອຂຸນໄດ້ຮັບຄຳສັ່ງດັ່ງນັ້ນ ກໍຟ້າວພາກັນອອກເດີນທາງກັບສູ່ເມືອງນະ ຄອນກາຍ. ເມື່ອກັບເຖິງກໍໄດ້ເຂົ້າຂາບທູນໃຫ້ພະນາງທອງສີແມ່ຂອງນາງອົ້ວໄດ້ຮູ້ວ່າພວກ ຕົນໄດ້ນຳສານໄປມອບໃຫ້ພະສະຫາຍຂອງພະອົງທາງເມືອງກາສີພູ້ນແລ້ວ. ເມື່ອພະແມ່ເມືອງທາງນັ້ນໄດ້ຮັບສານກໍໄດ້ແຕ່ຮ້ອງໄຫ້ຮ່ຳໄຮອາໄລອາວອນເຖິງນາງອົ້ວຜູ້ຈາກໄປ, ທ້າວຂຸນລູກໍອອກມາອ່ານສານຄື ກັນຫລັງຈາກອ່ານສານແລ້ວທ້າວກໍເຂົ້າຫ້ອງນອນຂ້າຕົນຕາຍ ແມ່ຂອງ ທ້າວກໍສະຫລົບໄປຫລາຍເທື່ອຈຶ່ງຟື້ນຄືນມາໄດ້. ຫລັງຈາກຟື້ນຄືນມາຈຶ່ງສັ່ງໃຫ້ຝູງຂ້າຟ້າວກັບຄືນມາລາຍງານພະແມ່ທາງພີ້ ເພີ່ນສັ່ງວ່າຈະເອົາສົບ ຂອງທ້າວຂຸນລູເຂົ້າຝັງໃນປ່າເຫວດຽວກັນກັບນາງອົ້ວ ເພາະວ່າທັງສອງ ນັ້ນມີເວນຄອບເນື້ອຈຶ່ງພ້ອມກັນຕາຍ. ຝ່າຍພະນາງທອງສີໄດ້ຟັງດັ່ງນັ້ນ ກໍເອົາມືຕົບເອິກທັງຟ່ອງຮ້ອງໄຫ້ຮ່ຳໄຮ ທັງຈົ່ມວ່າບັດນີ້ດັບເສຍເຊື້ອທາງເມືອງກາສີເຈົ້າແມ່ແລນໍ.

ບັດນີ້ກ່າວເຖິງຂຸນເມືອງກ້ຫາສີເຕີນປ່າວຕົດໂກດແກ້ວລາຍລ້ວນ ເຣືອເຣືອງ ແປງທາງທິວແລ້ວຕັ້ງມົນທົນສົບພະຣູບ ນານດາເຈົ້າເຫຂອງ ຕົກ

ແຕ່ງທີດບວດພ້ອມກອງແກ້ວທອດທານ. ພ້ອມກັນນັ້ນກໍສັ່ງໃຫ້ເຂົ້າຫລົ້ນພາ ສາ
ຫລາຍສິ່ງ ເຂົ້າແອ່ນພ້ອນສິງເຕັ້ນໜ່ວຍໂຮມ ມະໂຫລີພ້ອນແຂນແພນ ໄກວ
ແກ່ວງ ສະໜຸກມ່ວນຫລົ້ນ ຄືນເຕົ້າຄັ້ງໂຮມ ສາວບ່າວຫລົ້ນນຳກັນ ແມ້ງ
ນ່ອນ ເຈົ້າຢອກຂ້ອຍຍັງຢອກເຈົ້າ ຄຳນ້ອຍຕໍ່ໄຍ. ພະນາງຄຳພັນສັ່ງໃຫ້ ເຂົ້າ
ຄືບວັນຢູ່ເປັນເວລາເຖິງສີ່ເດືອນ ຈຶ່ງສັ່ງໃຫ້ຂຸນຖືສານໄປສົ່ງໃຫ້ພະ ນາງ
ທອງສີໃຫ້ຕົກແຕ່ງແປງທາງມາຈອດກັນລະຫວ່າງຊາຍແດນຂອງເມືອງພ້ອມ
ທັງເຊີນພະນາງທອງສີອອກໄປພົບກັນຢູ່ຊາຍແດນ ໃນເດືອນໜ້ານັ້ນ. ຝ່າຍ
ພະນາງທອງສີເມື່ອໄດ້ຮັບສານກໍສັ່ງໃຫ້ເຂົ້າຕົກແຕ່ງແປງທາງໄປສູ່ ຊາຍ
ແດນຕາມທີ່ພະນາງຄຳພັນໄດ້ມີສານມາບອກ. ພວກເສນາອາມາດຈຶ່ງໄດ້ຕົກ
ແຕ່ງແປງທາງຈົນສຳເລັດ, ກ່ອນຈະເຖິງກຳນົດເວລານັດໝາຍພະ ນາງ
ທອງສີກໍສັ່ງເຂົ້າທ້າງເຄື່ອງປະດັບລົດແກ້ວທຽມມ້າໝື່ນຕົວ ເມື່ອໃດ ຫາກ
ເຖິງວັນດີກໍຈະນຳພາຂະບວນເຄື່ອນອອກສູ່ທີ່ນັດໝາຍເພື່ອນຳສົບຂອງນາງ
ອົ້ວ ໄປສູ່ຊາຍແດນ.

# 11. ເອົາສົບທ້າວຂຸນລູແລະນາງອົ້ວ ໄປສູ່ຊາຍແດນ.

ພະນາງຄຳຜົນແມ່ຂອງທ້າວຂຸນລູ ສັ່ງໃຫ້ເສນາອາມາດທັງຫລາຍກະກຽມຂະບວນເພື່ອເຄື່ອນສົບຂອງທ້າວຂຸນລູອອກໄປສູ່ເຂດຊາຍແດນຕາມທີ່ໄດ້ນັດໝາຍກັບພະນາງທອງສີແມ່ຂອງນາງອົ້ວ. ພະນາງຄຳຜົນສັ່ງເຂົາວ່ານີ້ ອື່ນເປັນວັນໄຊອັນປະເສີດໃຫ້ທາງລົດແກ້ວທຽມມ້າຢ່ານານແລະໃຫ້ນິມົນພະສົງໄປພ້ອມຫລາຍອົງ. ໃນພິທີລົບງັນສົບຂອງທ້າວຂຸນລູນພະນາງຄຳຜົນກໍ ໄດ້ສະຫລະເງິນຄຳແກ້ວແຫວນກິນທານແລະປະດັບປະດາໂກດສົບຂອງ ທ້າວຢ່າງສົມກຽດ, ພໍຕາເວັນບ່າຍແນມເບື້ອງພ້ອດອກໄມ້ນານາຊະນິດທີ່ເອົາບູຊາສົບຂອງທ້າວຂຸນລູ (ເຊື້ອໂພທິສັດ) ສົ່ງກິ່ນອັນຫອມຫວນໄປທົ່ວ, ພະສົງກໍຂຶ້ນສູດແລະສະແດງທຳມະເທສະໜາ, ຝູງຄົນຟັງກໍພາກັນຫວ່ານເຂົ້າຕອກດອກໄມ້ບູຊາເຈົ້າໜໍ່ພຸດໂທແລະບູຊາກັນເທດ, ສຽງດົນຕີກໍເສບລະງົມຕະຫລອດ ຝູງເສນາອາມາດກໍພາກັນຫລິ້ນມ່ວນຊື່ນຕ່າງໆນານາເພື່ອຖວາຍແກ່ໜໍ່ ພຸດໂທ (ຂຸນລູ ).

ພໍຕາເວັນຂຶ້ນພົ້ນຂອບຟ້າ, ຂຸນຜູ້ໃຫຍ່ກໍເຕືອນເຂົາເຄື່ອນຂະບວນ ອອກເດີນທາງໂດຍມີພະນາງຄຳຜົນປະທັບຫລັງຊ້າງເຜືອກອອກໜ້າພາ ທາງຂະບວນພາກັນແຫ່ແຫນແພນກັ້ງນັບເປັນຫລາຍແສນ, ຫລິ່ງດູທຸງໄຊຕັ້ງ ທິວພາຍກັ້ງຮົ່ມ ມ້າອາດເຂົ້າທຽມແກ້ວໂກດຄຳ. ສຽງຍິງສະນູຢູ່ເທິງທິວ ຊ້າງ

ດັງກ້ອງສະໜັ່ນຫວັ່ນໄຫວປະສົມປະສານກັບສຽງເສບດົນຕີຫລວງໃຫ່ຍໃນການເຄື່ອນສົບຂອງທ້າວອອກໄປ, ພະສົງຫລາຍອົງກໍຂື້ນສູດຍອດມຸກຕະ ຫລອດທາງ. ຂະບວນແຫ່ອັນໃຫ່ຍໂຕມະໂຫລານນີ້ຈົນດິນໄຫວ່ກຸ້ມຂື້ນສູ່ທ້ອງຟ້າ ມືດມົວໄປໝົດ ຄືກັບວ່າປ່າໄມ້ດົງດອນຈະຖືກທຳລາຍ. ຝູງຍິງຊາຍກໍພາ ກັນມ່ວນຊື່ນເອົາແທ້ເອົາວ່າ ໂດຍສະເພາະແມ່ນພວກໜຸ່ມສາວຕ່າງກໍຢອກເຢົ້າກັ້ຮວພາລາສີກັນຢ່າງຊື່ນບານສຳລານໃຈ. ຂະບວນແຫ່ເຄື່ອນຍ້າຍໄປຈົນຕາເວັນຄ່ຳພະນາງຄຳຜັນຈຶ່ງສັ່ງໃຫ້ຢຸດພັກເຊົາເອົາແຮງ.

ຂະນະທີ່ຂະບວນຢຸດພັກເຊົານັ້ນ ຊຸນຜູ້ໃຫ່ຍກໍຈັດຕັ້ງກັນປ້ອງກັນໂກດ ສົບຂອງທ້າວເປັນຢ່າງດີ, ພ້ອມກັນນັ້ນກໍໄດ້ດອກໄມ້ໄຟບູຊາເຮືອເຮືອງໄປທົ່ວ ບໍລິເວນພະອິນທີ່ຢູ່ຮັກສາພູເຂົາລຳເນົາໄພແຫ່ງນັ້ນກໍຟ້າວລົງມາແລ້ວກໍກຳເອົາແກ້ວພິລາຜາຍຫວ່ານເຮືອງຮຸ່ງເທົ້າບູຊາເຈົ້າໜໍ່ພຸດໂທພ້ອມກັນນັ້ນພະອິນ ກໍນິລະມິດເປັນຮູບຕ່າງໆນຳມາບູຊາເຊິ່ນນິລະມິດເປັນແສງໄຟອັນຮຸ່ງ ເຮືອງນິລະມິດເປັນພ້ອດອກໄມ້ອັນຫອມຫວນບູຊາຄຸນພະເຈົ້າອົງລ້ຳໂລກລື, ອັນ ທີ່ທ້າວຕົກຢູ່ໃນສະພາບເຊິ່ນນັ້ນເປັນເພາະເວນກຳແຕ່ປາງຫລັງນຳຈອງ ເມື່ອນີ້ມາຈາກຊາດນັ້ນແລ້ວກໍຈະຫວິດເວນຫວິດກຳ.

ເຊົ້າໃນມື້ຕໍ່ມາຊຸນຜູ້ໃຫ່ຍກໍສັ່ງໃຫ້ທຸກຄົນທ້າງທາກະກຽມອອກເດີນ ທາງຕໍ່ໄປ, ຂະບວນແຫ່ສົບຂອງທ້າວໃນມື້ນັ້ນກໍບໍ່ຕ່າງຫຍັງກັບມື້ກ່ອນ ຈຶ່ງປະ ກອບໄປດ້ວຍການຍິງສະບູ, ການເສບງັນແລະການມ່ວນຊື່ນອື່ນໆ. ຂະບວນ ສົບຂອງທ້າວຊຸນລູແຫ່ໄປຕາມທາງນານ 7 ວັນຈຶ່ງໄປເຖິງເຂດຊາຍແດນບ່ອນທີ່ນັດໝາຍກັນໄວ້. ເມື່ອໄປເຖິງເຂດຊາຍແດນແລ້ວພະນາງຄຳພັນກໍສັ່ງໃຫ້ຢຸດພັກຂະບວນ ພ້ອມທັງສັ່ງໃຫ້ປັດກວາດສະຖານທີ່ໃຫ້ຈົບງາມແລະ ບໍ່ໃຫ້ແຍກຍ້າຍກັນໄປທາງອື່ນເດັດຂາດ.

ຍ້ອນກ່າວເຖິງພະນາງທອງສີແມ່ຂອງນາງອົ້ວ, ເມື່ອໄດ້ເວລາແລ້ວກໍນຳຂະບວນເຄື່ອນສົບຂອງນາງອົ້ວອອກເດີນທາງຈາກເມືອງໄປສູ່ຊາຍແດນບ່ອນນັດໝາຍ. ຂະບວນແຫ່ສົບຂອງນາງອົ້ວກໍບໍ່ຕ່າງຫຍັງກັບຂະບວນແຫ່ສົບຂອງທ້າວຂຸນລູຄືປະກອບໄປດ້ວຍສຽງເສບອັນເນືອງນັນຈົນຟ້າດິນຈະແຕກສະຫລາຍ, ມີທັງທຸງໄຊປັກຕາມຫົວຊ້າງແລະຂະບວນນີ້ກໍເປັນຂະບວນທີ່ໃຫຍ່ສົບຄາຫນາແຫນ້ນ. ເມື່ອນຳສົບຂອງນາງອົ້ວມາຮອດຊາຍແດນແລ້ວເຂົາກໍນຳເອົາຫີບສົບຂອງນາງອົ້ວໄປຕັ້ງຮຽງໄວ້ກັບຫີບສົບຂອງທ້າວຂຸນລູດັ່ງບົດກອນຂຽນວ່າ:

| | |
|---|---|
| ບັດນີ້ຈັກກ່າວເຖິງນາງເມືອງກ້ຳ | ທັງພາຍຍ້າຍໄພ່ |
| ເອົາຄາບນ້ອຍ | ນາງອົ້ວຄ່ຽນຄາວ |
| ຟັງດູດີນຕີ້ກອງ | ນອງສຽງສົບແຜ່ນ |
| ສຽງຄື້ນກ້ອງ | ປານຟ້າທັບດິນ |
| ຫລີງດູທຸງໄຊຕັ້ງ | ຫົວພາຍອວນຫມູ່ ມາແລ້ວ |
| ຫົວຫນ້າເທົ້າ | ປາງກ້ວາງຈອດເຊົ່າ |
| ຫລີງເຫັນທໍຫລວງຕັ້ງ | ປະນົມຫລວງສົບແຜ່ນ |
| ເຂົາກໍເອົາໂກດແກ້ວ | ຮຽງທ້າວຈອດເຊົ່າ ເຈົ້າເອີຍ |

ພາຍຫລັງນຳເອົາສົບທັງສອງມາຕັ້ງຮຽງກັນໄວ້ແລ້ວ ໃພງກໍພາກັນຮ້ອງໄຫ້ຮ່ຳໄຮອາໄລອາວອນເຖິງທ້າວແລະນາງ. ເສນາອາມາດທັງສອງຝ່າຍກໍເຂົ້າສະແດງຄວາມເຄົາລົບຢຳເກງຕໍ່ແມ່ເມືອງທັງສອງບາງຄົນກໍເອົານ້ຳຄູ້ຈັນຫອມເຂົ້າທົດສົງພະແມ່ເຈົ້າທາຍຮ້ອນຢູ່ເປັນ, ແລ້ວຈຶ່ງພ້ອມກັນຕັ້ງກອງບວດກອງທີ່ດຂຶ້ນເພື່ອທອດທານສົ່ງພົນບຸນເຖິງທ້າວແລະນາງພ້ອມທັງມີການສົບງັນຢ່າງມ່ວນຊື່ນ, ຝ່າຍພະນາງຄຳພັນແລະພະນາງທອງສີກໍຍູ້ທ່າງພາກັນ

ກິນທານ. ສິບຂອງທ້າວແລະນາງ ໄດ້ສືບວັນຢູ່ທີ່ຊາຍແດນຕໍ່ກັນນັ້ນເປັນເວລາ ໜຶ່ງເດືອນຈຶ່ງໄດ້ເລີກລາຊາກສິ່ງສະການທານຮີດຄອງປະເພນີ. ສິບຂອງທ້າວຂຸນລູແລະນາງອົ້ວ ຄ່ຽມຍົກຂຶ້ນກອງຟອນດຽວກັນແລະເພົາດ້ວຍ ແກ່ນຄູ້ແກ່ນຈັນດັ່ງບົດກອນຂຽນວ່າ:

ບັດນີ້ເຮົາຈັກຍົກຄາບເຈົ້າ    ສອງສູ່ກອງຟອນ ກ່ອນແລ້ວ
ຂຸນຈຶ່ງພາກັນຈັດ    ແຕ່ງດີຢ່າຊ້າ
ຂຸນໄດ້ຍິນຄຳເວົ້າ    ກໍປຸນເປືອງຕົກແຕ່ງ
ຈັນແລະຄູ້    ກອງຂຶ້ນໃຫ້ດີ
ເຮົາກໍເອົາໄກແກ້ວ    ສອງຂຶ້ນສູ່ຟອນ
ຫລິງດູໄຟເຮືອງແສງ    ທຸບທຽນແສນຊຸ້ນ
ອັນໜຶ່ງນິລະມິນເຈົ້າ    ສັງໂຄໜາຍບອກ
ໄພລຸກກຸ້ມ    ເພົາພ້ຽນມຸ່ນມິນ ເຈົ້າເອີຍ.

## 12. ທ້າວຂຸນລູແລະນາງອົ້ວ ເອົາອູບແກ້ວມາໃຫ້ແມ່.

ທ້າວຂຸນລູແລະນາງອົ້ວ ເຖິງແມ່ນຕາຍຈາກຊາດເປັນມະນຸດຂຶ້ນ ໄປເກີດຢູ່ເມືອງຟ້າ ເມືອງສະຫວັນກໍຍັງມີຄວາມກະຕັນຍູຮູ້ຄຸນບິດາມານດາ. ດັ່ງ ນັ້ນ ທ້າວຂຸນລູຈຶ່ງຊວນນາງອົ້ວນຳເອົາອູບແກ້ວມາມອບໃຫ້ແກ່ຜູ້ເປັນແມ່ ທັງສອງ, ຝ່າຍນາງອົ້ວກໍມີຄວາມຍິນດີຊົມຊື່ນດອມທ້າວ. ດັ່ງນັ້ນທ້າວຂຸນລູ ຈຶ່ງຂຽນສານໃສ່ໃນອູບແກ້ວ ແລ້ວນີລະມິດໃຫ້ເກີດເປັນຮຸ້ງຕົວໃຫ່ຍຍາວບິດບັງມືດມົວ ໄປໝົດທັງເກີດພາຍຸຝົນລົມຢ່າງແຮງ. ທ້າວຂຸນລູຈຶ່ງຖືໂອກາດນັ້ນເອົາອູບແກ້ວ ໄປມອບໃຫ້ແກ່ແມ່. ເມື່ອມອບອູບແກ້ວໃຫ້ແມ່ເປັນທີ່ຮຽບຮ້ອຍ ແລ້ວທ້າວກໍຫນີຄືນເມືອສູ່ເມືອງສະຫວັນ.

ຜູ້ເປັນແມ່ເມື່ອໄດ້ເຫັນອູບແກ້ວຢູ່ໃນຕັກຂອງຕົນກໍຕົກໃຈ ເພາະບໍ່ຮູ້ ວ່າແມ່ນໃຜເອົາອູບແກ້ວມາວາງໄວ້ຕັກຂອງຕົນ, ດັ່ງນັ້ນຈຶ່ງພ້າວໄຂອອກ ເບິ່ງເລີຍເຫັນສານຢູ່ໃນອູບແກ້ວນັ້ນ ຈຶ່ງມີເນື້ອໃນໃຈຄວາມວ່າດຽວນີ້ລູກ ທັງສອງໄດ້ເອົາຕົນໄປເຖິງໄຕວະດຶງແກ້ວ ແຕ່ກໍຍັງຄະນຶງເຖິງບຸນຄຸນຂອງແມ່ທັງສອງ, ສະນັ້ນຈຶ່ງພາກັນນຳເອົາອູບແກ້ວມາມອບ ເພື່ອຕອບບຸນແທນ ຄຸນອັນວ່າມະນີວັນແກ້ວທັງສອງລູກປະເສີດທີ່ເອົາມາໃຫ້ນີ້ ຖ້າຫາກຕ້ອງ ການສິ່ງໃດ ຈຶ່ງເອົາແກ້ວກວັດແກ່ວງເອົາຕາມໃຈມັກ, ເມື່ອໄດ້ສິ່ງຂອງຕາມໃຈແລ້ວຈຶ່ງໄດ້ກິນສ້າງພາວະນາຢ່າໄດ້ຂາດສິນ 8 ຕັ້ງຈຳໝັ້ນບໍ່ລືມ. ອັນໜຶ່ງ

ຖ້າຫາກຄິດຮອດລູກຈຶ່ງພາກັນໄປບວດຂັນໃຫ້ອຶດຢາກເຍື້ອນເຖິງຂ້ອຍຮອດສະ ຫວັນພຸ້ນທ້ອນ.

ເມື່ອຜູ້ເປັນແມ່ໄດ້ອ່ານຮູ້ເນື້ອຄວາມໃນສານຂອງລູກແລ້ວ, ທັງສອງ ສະ ຫາຍກໍມີຄວາມຍິນດີຊົມຊື່ນພ້ອມທັງຍົກມືຂຶ້ນນົບແລ້ວກໍຈັບເອົາແກ້ວມາປັ້ນກັນ ຄືນລະຫນ່ວຍແລະຈື່ຈໍາຄໍາເວົ້າຂອງທ້າວຢູ່ໃນສານທຸກຄໍາ. ຈາກນັ້ນຈຶ່ງ ສັ່ງ ໃຫ້ເຂົາເກັບທ້ອນກະດູກຂອງທ້າວແລະນາງມາໃສ່ໄວ້ໃນກະອູບແກ້ວ ແລ້ວ ກໍຫາດໃສ່ໄວ້ດັ່ງບົດກອນຂຽນວ່າ:

ນາງກໍຈໍາເຂົາເອົາອູບແກ້ວ ທ້ອນດູກມາໂຮມ
ແປງເຈດີ ກໍກວມເປັນຖ້ານ
ແປງທັງຈີນກົ້ນຕັ້ງ ເປັນຖັນວົງແວດ
ຄໍາຟອກລ້ວນ ເຖິງເທົ້າຮອດປາຍ
ເມື່ອນັ້ນນາງນາງເຈົ້າ ທັງສອງລອງເດດ
ກວັດແກ່ວງແກ້ວ ມີຖ້ວນເກີດມາ
ມີທັງເງິນຄໍາພ້ອມ ອາພອນຜ້າຜ່ອນ
ຍູທ່າງສອງແຈ່ມເຈົ້າ ທານໃຫ້ຊູ່ວັນ
ອັນຫນຶ່ງຍັງປັນໃຫ້ ເສນາຂ້າໄພ່
ທຸກຖ້ວນຫນ້າ ຢາຍໃຫ້ສູ່ຄົນ
ແລ້ວຈຶ່ງຕັດສອງກໍ້ ແປງເມືອງໄວ້ເຄື່ອງ
ບົວລະບັດພະທາດເຈົ້າ ບໍ່ມີໃຫ້ໝົ່ນໝອງ
ແປງທັງວິຫານລ້ອມ ຫລາຍຖັນເຮືອງຮຸ່ງ
ວັນຕໍ່ຕັ້ງ ລາຍລ້ວນເຄື່ອງຄໍາ
ນິລະມິນເຈົ້າ ລາຊະຄູສອງແຫ່ງ

ທັງສິບສ້າງ ສິນຊ້ອຍພ່ຳເພັງ
ອັນໜຶ່ງເອົາຍັງເຊື້ອ ຫລານອາວທ້າວກຶງ
ກັບທ້າວແກ້ວ ແນວເຊື້ອທິຕາຍ
ສອງກໍທິດສົງໃຫ້ ສະເຫວີຍເມືອງຕັ້ງເຄິ່ງ
ປຸນປຸກໃຫ້ ເສນາຖ້ວນຄູ່ເມືອງ
ນັບແຕ່ບໍລືວານໄດ້ ພໍແສນເກີກແຕ່ງ
ວຽງກໍ່ລ້ອມ ເປັນຖ່ານຍ່ານຍາວ
ອັນໜຶ່ງນາງເມືອງກ້ຳ ກາສີມອາດ
ໃຫ້ເຂົາແທນແທ່ເຈົ້າ ທ້າວເກີດແທນເມືອງ
ທັງກາສີ ນັ່ງປອງເປັນເຈົ້າ
ອັນໜຶ່ງທາງທິນຫ້ອງ ເມືອງກາຍພະແມ່
ຈຳໃຫ້ຫລານຍອດທ້າວ ຮິນເຂົ້າແຕ່ງເມືອງ ເຈົ້າເຮີຍ

ຕໍ່ມາພະນາງຄຳພັນແລະພະນາງທອງສີກໍພາກັນໄປບວດເປັນແມ່ ຂາວ ຈຳສິນພາວະນາແລະຄອຍປົວລະບັດຮັກສາພະທາດຂອງທ້າວຂຸນລູແລະນາງ ອົ້ວພ້ອມທັງໃຫ້ທານເປັນປະຈຳບໍ່ຂາດ.

ເລື່ອງທ້າວຂຸນລູນາງອົ້ວຄ່ຽມນທ່ານໄດ້ນ້ອນຊາດົກເອົາໄວ້ວ່າທ້າວ ຂຸນ ລາງນັ້ນແມ່ນເທວະທັດຜູ້ຫຽວຈ່ອງ ເວນຈ່ອງກຳກັບພະພຸດທະອົງ, ອັນ ວ່າ ນານດາເຈົ້າກາສີເມືອງເອກກໍຫາກແມ່ນນາງສີສຸພັນທະນະແທ້ເປັນເຈົ້າແມ່ ພຸດໂທ, ອັນວ່ານາງງາມອົ້ວ ແພພັນມີລະນາດວັນນັ້ນກໍຫາກແມ່ນນາງຍະໂສ ທະລາເກີດທຽມພຸດໂທເຈົ້າ, ອັນວ່າປິຕາເຈົ້າທັງສອງມີລະນາດວັນນັ້ນ ກໍ ຫາກແມ່ນສີສຸດໂທທະນະແທ້ເປັນເຈົ້າໜໍ່ພະອົງ, ອັນວ່າຂຸນລູທ້າວມີລະ ນາ ລີດສາບວັນນັ້ນກໍຫາກແມ່ນອົງພະເຈົ້າບຸນກ້ອາງໜໍ່ພຸດໂທ ເຈົ້າເອີຍ

# ສາລະບານ


ຫນ້າ

- ກ່າວເຖິງເມືອງກາສີ 1
- ກ່າວເຖິງເມືອງນະຄອນກາຍ 4
- ທ້າວຂຸນລູໄປຫານາງອົ້ວ 7
- ກ່າວເຖິງທ້າວຂຸນລາງ 16
- ທ້າວຂຸນລູຍົກຂະບວນໄປໂອມນາງອົ້ວ 20
- ໃຊ້ຜີຍ່າງ່າມໄປເບຶງສາຍແນນ 29
- ນາງອົ້ວສົ່ງສານຫາທ້າວຂຸນລູ 36
- ນາງອົ້ວຫນີໄປຜູກຄໍຕາຍຢູ່ຕົ້ນຈວງ 41
- ພະອິນໃຫ້ກາດຳໄປບອກຂ່າວ 46
- ຂຸນລູຕາຍຕາມນາງອົ້ວ 54
- ເອົາສົບທ້າວຂຸນລູແລະນາງອົ້ວໄປສູ່ຊາຍແດນ 59
- ທ້າວຂຸນລູແລະນາງອົ້ວເອົາອູບແກ້ວມາໃຫ້ແມ່ 63

ຝາກໃຈຄິດເຖິງເດັກນ້ອຍລາວຍັງບໍ່ມີຊົ່ມອອບໃຫ້ສ.ຄ.
ຝາກໃຈຄິດເຖິງ ຫັນອາ
ດວງເດືອນບຸນຍາອິງ ຝາກມາໃຫ້ອັນຊາດຫາຍ



ພ.ພວງສະບາ

ເຂົາເລີ່ມເຂົ້າສູ່ວົງການນັກຂ່າວ, ນັກໜັງສືພິມ, ນັກປະພັນ ແລະນັກກະວີແຕ່ປີ 1964 . ເຂົາຂຽນທັງບົດຂ່າວ, ບົດຄວາມ, ບົດສາລະຄະດີ, ບົດກະວີກາບກອນ, ບົດເລື່ອງສັ້ນ, ບົດເລື່ອງສໍາ ລັບເດັກນ້ອຍແລະຮີບໂຮມຮຽບຮຽງປະຫວັດວັນນະຄະດີພື້ນເມືອງມາແລ້ວຫລາຍເຫລັ້ມ.

ບົດກະວີແລະບົດເລື່ອງສັ້ນຂອງເຂົາຖືກນໍາໄປແປແລະ ພິມຈໍາໜ່າຍເປັນພາສາຕ່າງປະເທດມາແລ້ວເຊັ່ນ: ພາສາລັດ ເຊຍ ພາສາຝະລັ່ງ, ພາສາໄທແລະພາສາຫວຽດນາມ. ເຂົາບອກ ວ່າ: " ບົດຂຽນທີ່ດີຂອງເຂົານັ້ນຄືບົດທີ່ຍັງບໍ່ທັນໄດ້ຂຽນ ".

